# ບົດແນະນຳແລະເງື່ອນໄຂທີ່ຕ້ອງການສຳລັບຄະນະກຳມະການປະສານງານກອງທຶນໂລກໃນລະດັບປະເທດ

## ບົດສະຫຼຸບຜູ້ບໍລິຫານ

ເອກະສານສະບັບນີ້ໄດ້ນຳສະເໜີບົດແນະນຳທີ່ຖືກປັບປຸງໃໝ່ສຳລັບ ຄະນະກຳມະການປະສານງານໃນລະດັບປະເທດ[1] (CCMs) ກ່ຽວກັບບົດບາດຂອງພວກເຂົາໃນຂະບວນການຂອງກອງທຶນໂລກ. ບົດແນະນຳດັ່ງກ່າວໄດ້ຖືກດັດແກ້ຫຼັງຈາກໄດ້ມີການທົບທວນຢ່າງກວ້າງຂວາງຕໍ່ປະສົບການຂອງ CCM ນັບຕັ້ງແຕ່ການສ້າງຕັ້ງກອງທຶນໂລກ. ໂດຍສະເພາະ, ໄດ້ມີການທົບທວນບົດລາຍງານການຄົ້ນຄວ້າ/ການປະເມີນຜົນ ແລະ ເອກະສານນະໂຍບາຍຈຳນວນ 26 ສະບັບ, ລວມທັງການສຶກສາກໍລະນີໃນ 40 ປະເທດ; ແລະ ໄດ້ຈັດກອງປະຊຸມປຶກສາຫາລືກັບຜູ້ມີສ່ວນຮ່ວມຫຼາຍພາກສ່ວນຈຳນວນ 12 ຄັ້ງ, ລວມທັງການສຳຫຼວດຜ່ານລະບົບອີເລັກໂທຣນິກ ແລະ ກອງປະຊຸມ CCM ໃນລະດັບພາກພື້ນ.

ບົດແນະນຳນີ້ຍັງຄົງຕິດພັນຢູ່ກັບ ຫຼັກການຫຼັກຂອງການບໍລິຫານທີ່ດີ ທີ່ໄດ້ກຳນົດໄວ້ໃນເອກະສານໂຄງຮ່າງຂອງກອງທຶນໂລກ ແລະ ສະແດງອອກເຖິງຄວາມມຸ່ງໝັ້ນຕໍ່ ແຜນງານທີ່ນຳພາແລະຂັບເຄື່ອນໂດຍປະເທດ ເຊິ່ງຮັບປະກັນການມີສ່ວນຮ່ວມຂອງຜູ້ມີສ່ວນຮ່ວມຫຼາຍພາກສ່ວນ. ບົດແນະນຳດັ່ງກ່າວສະໜັບສະໜູນ ຄວາມເປັນເຈົ້າຂອງຂອງປະເທດ, ເຄົາລົບບົດບາດໃຈກາງຂອງລັດຖະບານ, ແລະ ຊຸກຍູ້ການປະສານງານ ແລະ ການສ້າງບົນພື້ນຖານໂຄງສ້າງທີ່ມີຢູ່ແລ້ວໃນບ່ອນທີ່ເປັນໄປໄດ້.

ອີງຕາມຄວາມເໝາະສົມ, ບົດແນະນຳນີ້ໄດ້ກຳນົດ ດັ່ງນີ້:

i. **ເງື່ອນໄຂທີ່ຕ້ອງການ** ຊຶ່ງແມ່ນເງື່ອນໄຂຂັ້ນຕ່ຳສຸດທີ່ CCM ທັງໝົດຕ້ອງປະຕິບັດໃຫ້ໄດ້ ເພື່ອຈະມີສິດໄດ້ຮັບທຶນຈາກກອງທຶນໂລກ.
ii. **ມາດຕະຖານຂັ້ນຕ່ຳສຸດ[2]** ຊຶ່ງແມ່ນເງື່ອນໄຂຂັ້ນຕ່ຳສຸດທີ່ເຫັນວ່າມີຄວາມຈຳເປັນຕໍ່ການປະຕິບັດວຽກງານຂອງ CCM ໃຫ້ມີປະສິດທິຜົນ ໂດຍອີງໃສ່ປະສົບການທີ່ໄດ້ສະສົມມາ.
iii. **ມາດຕະຖານ** ຊຶ່ງແມ່ນເງື່ອນໄຂສຳຄັນທີ່ເຫັນວ່າມີຄວາມຈຳເປັນຕໍ່ການປະຕິບັດວຽກງານຂອງ CCM ໃຫ້ມີປະສິດທິຜົນ ໂດຍອີງໃສ່ປະສົບການທີ່ໄດ້ສະສົມມາ.
iv. **ຂໍ້ສະເໜີແນະ** ຊຶ່ງແມ່ນຂໍ້ແນະນຳກ່ຽວກັບການປະຕິບັດທີ່ດີ ທີ່ CCM ຄວນປະຕິບັດ ເພື່ອສົ່ງເສີມຫຼັກການສຳຄັນ ແລະ ເພື່ອປັບປຸງການປະຕິບັດວຽກງານ.

[1] ນະໂຍບາຍທີ່ໄດ້ກຳນົດສຳລັບຄະນະກຳມະການປະສານງານ ກອງທຶນໂລກ ພາຍໃນປະເທດ ໃນເອກະສານສະບັບນີ້ ຍັງສາມາດນຳໃຊ້ໃນຄະນະກຳມະການປະສານງານ ກອງທຶນໂລກ ໃນລະດັບທ້ອງຖິ່ນ (Sub-CCMs) ຄະນະກຳມະການປະສານງານ ກອງທຶນໂລກ ໃນລະດັບພາກພື້ນ (RCMs).
[2] ມາດຕະຖານຂັ້ນຕ່ຳສຸດ ຈະເລີ່ມມີຜົນບັງຄັບໃຊ້ນັບຕັ້ງແຕ່ວັນທີ 1 ມັງກອນ 2015 ເປັນຕົ້ນໄປ

ກອງເລຂາກອງທຶນໂລກ ຈະຕິດຕາມການປະຕິບັດຕາມເງື່ອນໄຂທີ່ຕ້ອງການ ຂອງ CCM ນຶ່ງຄັ້ງຕໍ່ປີ ແລະ ທຸກຄັ້ງເມື່ອມີ CCM ສະເໜີຂໍທຶນໃໝ່. ການສືບຕໍ່ປະຕິບັດຕາມທຸກເງື່ອນໄຂທີ່ຕ້ອງການ (ແລະ ມາດຕະຖານຂັ້ນຕໍ່າສຸດ ຊຶ່ງເລີ່ມແຕ່ວັນທີ 1 ມັງກອນ 2015) ຕະຫຼອດໄລຍະການປະຕິບັດແຜນງານ ແມ່ນເງື່ອນໄຂສໍາລັບການເຂົ້າເຖິງທຶນຈາກກອງທຶນໂລກ.

ເພື່ອເສີມຂະຫຽາຍການບໍລິຫານທີ່ດີ, CCM ຄວນຮັບຮອງເອົາມາດຕະຖານ ແລະ ປະຕິບັດຕາມຂໍ້ສະເໜີແນະ. ມາດຕະຖານ ຫຼື ຂໍ້ສະເໜີແນະ ບໍ່ພຽງແຕ່ເປັນເງື່ອນໄຂໃນການຂໍທຶນຈາກກອງທຶນໂລກ, ແຕ່ກອງທຶນໂລກຍັງນໍາໃຊ້ ສິ່ງເຫຼົ່ານີ້ ເປັນຂໍ້ມູນພື້ນຖານ ເພື່ອປະເມີນການປະຕິບັດຂອງ CCM ທັງໝົດ. ການປະຕິບັດຕາມເງື່ອນໄຂທີ່ຕ້ອງການເພື່ອມີສິດໄດ້ຮັບທຶນ ແລະ ມາດຕະຖານຂັ້ນຕໍ່າສຸດ ຕາມບົດແນະນໍາສໍາລັບ CCM ແມ່ນເປັນພັນທະທີ່ຕ້ອງປະຕິບັດ ແລະ ຈະຖືກນໍາໄຊ້ໂດຍ CCM ແລະ ກອງເລຂາຂອງກອງທຶນໂລກ ເພື່ອພັດທະນາໂຄງຮ່າງການຈັດຕັ້ງປະຕິບັດຂອງ CCM, ໃນເງື່ອນໄຂຕາມນະໂຍບາຍດ້ານກອງທຶນຂອງ CCM.

ເພື່ອເສີມຂະຫຍາຍການບໍລິຫານທີ່ດີ, CCM ຄວນຮັບຮອງເອົາມາດຕະຖານ ແລະ ປະຕິບັດຕາມຂໍ້ສະເໜີແນະ. ເຖິງແມ່ນວ່າທັງມາດຕະຖານ ແລະ ຂໍ້ສະເໜີແນະ ຈະບໍ່ເປັນເງື່ອນໄຂສໍາລັບການໃຫ້ທຶນຈາກກອງທຶນໂລກ, ແຕ່ກອງທຶນໂລກຈະນໍາໃຊ້ສິ່ງເຫຼົ່ານີ້ ເພື່ອສ້າງເປັນຂໍ້ມູນພື້ນຖານໃນການປະເມີນຜົນການປະຕິບັດວຽກງານໂດຍລວມຂອງ CCM. ການປະຕິບັດຕາມເງື່ອນໄຂທີ່ຕ້ອງການເພື່ອມີສິດໄດ້ຮັບທຶນ ແລະ ມາດຕະຖານຂັ້ນຕໍ່າສຸດ ພາຍໃນບົດແນະນໍາ CCM ແມ່ນເປັນພັນທະທີ່ຕ້ອງປະຕິບັດ ແລະ ຈະຖືກນໍາໃຊ້ເຂົ້າໃນການພັດທະນາໂຄງຮ່າງການປະຕິບັດວຽກງານຂອງ CCM ຮ່ວມກັບ CCM ແລະ ກອງເລຂາຂອງກອງທຶນໂລກ, ໃນຂອບຂອງນະໂຍບາຍດ້ານທຶນຂອງ CCM.

ບັນດາເງື່ອນໄຂທີ່ຕ້ອງການມີ ດັ່ງນີ້:

***ເງື່ອນໄຂທີ 1: ກອງທຶນໂລກຕ້ອງການໃຫ້ CCM ທັງໝົດ ຕ້ອງ:***

*i. ປະສານງານໃນການພັດທະນາບົດວິພາກເພື່ອຂໍທຶນ ໂດຍຜ່ານຂະບວນການທີ່ໂປ່ງໃສ ແລະ ມີການບັນທຶກ ຊຶ່ງມີການເຂົ້າຮ່ວມຢ່າງກວ້າງຂວາງຈາກບັນດາຄູ່ຮ່ວມງານ - ລວມທັງ ສະມາຊິກ CCM ແລະ ບໍ່ແມ່ນສະມາຊິກ CCM - ໃນການສອບຖາມແລະການທົບທວນກິດຈະກໍາ ເພື່ອສັງລວມເຂົ້າໃນບົດຄໍາຮ້ອງ.*

*ii. ບັນທຶກຂັ້ນຕອນໃນການເຂົ້າຮ່ວມຂອງປະຊາກອນຫຼັກທີ່ໄດ້ຮັບຜົນກະທົບ[3] ໃນການພັດທະນາບົດວິພາກເພື່ອຂໍທຶນ, ລວມທັງປະຊາກອນທີ່ມີຄວາມສ່ຽງສູງ.*

***ເງື່ອນໄຂທີ 2:*** *ດັ່ງນັ້ນກອງທຶນໂລກຕ້ອງການໃຫ້ CCM ທັງໝົດ ຕ້ອງ:*

*i. ສະເໜີ ໜຶ່ງ ຫຼື ຫຼາຍຜູ້ຮັບທຶນຕົ້ນຕໍ (PR) ໃນເວລາຍື່ນຄໍາຮ້ອງເພື່ອຂໍທຶນ[4].*

[3] ປະຊາກອນຫຼັກທີ່ໄດ້ຮັບຜົນກະທົບລວມມີ: ແມ່ຍິງແລະຍິງໜຸ່ມ, ຜູ້ຊາຍຮ່ວມເພດກັບຊາຍ (ຊພຊ), ຜູ້ສັກຢາເສບຕິດ, ກະເທີຍ, ຜູ້ບໍລິການທາງເພດ, ຜູ້ທີ່ຖືກຄຸມຂັງ, ອົບພະຍົກແລະກຸ່ມຄົນທີ່ເຄື່ອນຍ້າຍ, ຜູ້ຕິດເຊື້ອເຮສໄອວີ, ໜຸ່ມສາວແລະຊາວໜຸ່ມ, ກໍາພ້າແລະເດັກທີ່ມີຄວາມສ່ຽງ, ແລະ ປະຊາກອນທີ່ມີບັນຫາດ້ານມະນຸດສະທໍາ.

[4] ໃນກໍລະນີຍົກເວັ້ນ, ກອງທຶນໂລກຈະເລືອກຜູ້ຮັບທຶນຕົ້ນຕໍໂດຍກົງ ໃຫ້ CCM ພາຍໃຕ້ ນະໂຍບາຍການປ້ອງກັນເພີ່ມເຕີມ

*ii. ບັນທຶກຂັ້ນຕອນທີ່ໂປ່ງໃສໃນການສະເໜີເອົາຜູ້ຮັບທຶນຕົ້ນຕໍໃໝ່ ແລະ ສືບຕໍ່ຜູ້ຮັບທຶນຕົ້ນຕໍໃນປະຈຸບັນ ໂດຍອີງໃສ່ຈຸດປະສົງ ແລະ ເງື່ອນໄຂຢ່າງຊັດເຈນ.*

*iii. ບັນທຶກການຈັດການກ່ຽວກັບຜົນປະໂຫຍດຊໍ້າຊ້ອນທີ່ອາດມີ ຊຶ່ງອາດກະທົບຕໍ່ຂັ້ນຕອນການສະເໜີຜູ້ຮັບທຶນຕົ້ນຕໍ (ເບິ່ງພາກທີ 6 ກ່ຽວກັບການບໍລິຫານທີ່ດີ).*

***ເງື່ອນໄຂທີ 3:*** *ເຫັນໄດ້ເຖິງຄວາມສໍາຄັນຂອງການຕິດຕາມກວດກາ, ກອງທຶນໂລກຕ້ອງການໃຫ້ CCM ຕ້ອງຍື່ນ ແລະ ປະຕິບັດຕາມແຜນຕິດຕາມກວດກາສໍາລັບທຶນທັງໝົດທີ່ໄດ້ຮັບອະນຸມັດຈາກກອງທຶນ. ແຜນຕ້ອງປະກອບມີກິດຈະກໍາລະອຽດ, ແລະ ຕ້ອງອະທິບາຍວ່າ CCM ຈະເອົາພາກສ່ວນຕ່າງໆທີ່ຮັບຜິດຊອບໂຄງການເຂົ້າຮ່ວມໃນການຕິດຕາມກວດກາແນວໃດ, ລວມທັງສະມາຊິກ CCM ແລະ ບໍ່ແມ່ນສະມາຊິກ CCM, ແລະ ໂດຍສະເພາະພາກສ່ວນທີ່ບໍ່ສັງກັດລັດຖະບານ ແລະ ຜູ້ທີ່ຕິດເຊື້ອ ແລະ/ຫຼື ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດ.*

***ເງື່ອນໄຂທີ 4:*** *ກອງທຶນໂລກຕ້ອງການໃຫ້ CCM ທັງໝົດ ສະແດງຫຼັກຖານການເປັນສະມາຊິກຂອງ ຜູ້ທີ່ຕິດເຊື້ອເຮສໄອວີ ແລະ ຜູ້ທີ່ເປັນຕົວແທນຂອງຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກ * ແລະ ເປັນຕົວແທນຜູ້ທີ່ໄດ້ຮັບຜົນກະທົບຈາກວັນນະໂຣກ** ແລະ ໄຂ້ຍຸງ *** ຕະຫຼອດເຖິງຜູ້ທີ່ມາຈາກ ແລະ ເປັນຕົວແທນປະຊາກອນທີ່ໄດ້ຮັບຜົນກະທົບ ****, ໂດຍອີງໃສ່ສະພາບການລະບາດ ກໍຄື ພິຈາລະນາດ້ານສິດທິມະນຸດ ແລະ ບົດບາດຍິງ-ຊາຍ.*

** ຜູ້ທີ່ເປັນພະຍາດໃນໄລຍະຜ່ານມາ ຫຼື ຜູ້ທີ່ມາຈາກຊຸມຊົນທີ່ມີພະຍາດເຫຼົ່ານີ້ລະບາດ. ** ໃນປະເທດທີ່ມີພະຍາດວັນນະໂຣກເປັນບັນຫາຂອງສາທາລະນະສຸກ ຫຼື ທີ່ໄດ້ຍື່ນຂໍທຶນ ຫຼື ທີ່ໄດ້ຮັບອະນຸມັດທຶນສໍາລັບວັນນະໂຣກໃນໄລຍະຜ່ານມາ. *** ໃນປະເທດທີ່ມີຫຼັກຖານວ່າຍັງມີການແຜ່ເຊື້ອໄຂ້ຍຸງ ຫຼື ທີ່ໄດ້ຍື່ນຂໍທຶນ ຫຼື ທີ່ໄດ້ຮັບອະນຸມັດທຶນສໍາລັບໄຂ້ຍຸງໃນໄລຍະຜ່ານມາ. **** ກອງເລຂາອາດຍົກເວັ້ນການເປັນຕົວແທນຂອງຜູ້ທີ່ໄດ້ຮັບຜົນກະທົບ ຖ້າເຫັນວ່າມີຄວາມເໝາະສົມເພື່ອປົກປ້ອງບຸກຄົນ.*

***ເງື່ອນໄຂທີ 5:*** *ກອງທຶນໂລກຕ້ອງການໃຫ້ສະມາຊິກ CCM ທັງໝົດ ທີ່ເປັນຕົວແທນຈາກພາກສ່ວນທີ່ບໍ່ສັງກັດລັດ ຕ້ອງໄດ້ຖືກເລືອກໂດຍພາກສ່ວນດັ່ງກ່າວເອງ ຊຶ່ງອີງຕາມການບັນທຶກ, ຂັ້ນຕອນທີ່ໂປ່ງໃສ, ພັດທະນາພາຍໃນແຕ່ລະພາກສ່ວນ. ເງື່ອນໄຂນີ້ແມ່ນນໍາໃຊ້ຕໍ່ສະມາຊິກທຸກຄົນທີ່ບໍ່ສັງກັດລັດ ລວມທັງສະມາຊິກທີ່ໄດ້ລະບຸໃນເງື່ອນໄຂທີ 4, ຍົກເວັ້ນພາກສ່ວນຂອງອົງການຮ່ວມມືສອງຝ່າຍແລະຫຼາຍຝ່າຍ.*

***ເງື່ອນໄຂທີ 6:*** *ເພື່ອຮັບປະກັນໃຫ້ມີການຈັດການກ່ຽວກັບຜົນປະໂຫຍດຊໍ້າຊ້ອນ, ກອງທຶນໂລກຕ້ອງການໃຫ້ CCM ທັງໝົດຕ້ອງ:*

*i. ພັດທະນາແລະພິມນະໂຍບາຍເພື່ອຈັດການກ່ຽວກັບຜົນປະໂຫຍດຊໍ້າຊ້ອນ ຊຶ່ງມີຜົນຕໍ່ສະມາຊິກ CCM ທັງໝົດ , ຄອບຄຸມທຸກວຽກງານຂອງ CCM. ນະໂຍບາຍຕ້ອງລະບຸວ່າ ສະມາຊິກ CCM ທຸກຄົນຕ້ອງແຈ້ງເປັນໄລຍະກ່ຽວກັບຜົນປະໂຫຍດຊໍ້າຊ້ອນ ຊຶ່ງມີຜົນກະທົບຕໍ່ຕົນເອງ ຫຼື ສະມາຊິກ CCM ອື່ນໆ. ນະໂຍບາຍຕ້ອງລະບຸ, ແລະ CCM ຕ້ອງບັນທຶກ, ວ່າສະມາຊິກຈະບໍ່ເຂົ້າຮ່ວມໃນການຕັດສິນໃຈ ເມື່ອເຫັນຢ່າງຊັດເຈນວ່າມີຜົນປະໂຫຍດຊໍ້າຊ້ອນ, ລວມທັງການຕັດສິນໃຈທີ່ພົວພັນເຖິງການກວດກາ ແລະການຄັດເລືອກ ຫຼື ໃຫ້ທຶນແກ່ຜູ້ຮັບທຶນຕົ້ນຕໍ ຫຼື ຜູ້ຮັບທຶນຍ່ອຍ.*

ii. *ນຳໃຊ້ນະໂຍບາຍກ່ຽວກັບຜົນປະໂຫຍດຊ້ຳຊ້ອນ ຕະຫຼອດໄລຍະການນຳໃຊ້ທຶນຊ່ວຍເຫຼືອຈາກກອງທຶນໂລກ, ແລະ ຍື່ນເອກະສານທີ່ເປັນຫຼັກຖານໃນການນຳໃຊ້ນະໂຍບາຍໃຫ້ກອງທຶນໂລກ ເມື່ອຕ້ອງການ.*

ເອກະສານໄດ້ຖືກຈັດລຽງດັ່ງຕໍ່ໄປນີ້:

| | |
|---|---|
| ພາກທີ 1: | ອະທິບາຍຈຸດປະສົງແລະໂຄງຮ່າງຂອງເອກະສານ. |
| ພາກທີ 2: | ສັງລວມຫຼັກການສຳຄັນສຳລັບ CCM ທີ່ໄດ້ກຳນົດໃນເອກະສານໂຄງຮ່າງຂອງກອງທຶນໂລກ. |
| ພາກທີ 3: | ສ່ອງແສງໃຫ້ເຫັນບົດບາດ ແລະ ໜ້າທີ່ຫຼັກຂອງ CCMs, ສົນທະນາກ່ຽວກັບອຳນາດທາງກົດໝາຍ ແລະ ໜ້າທີ່ຫຼັກຂອງພວກເຂົາ, ຕະຫຼອດເຖິງຄູ່ຮ່ວມງານທີ່ສຳຄັນອື່ນໆ – ຜູ້ຮັບທຶນຕົ້ນຕໍ (PRs), ຜູ້ຮັບທຶນຍ່ອຍ (SRs), ກອງເລຂາຂອງກອງທຶນໂລກ, ແລະ ຕົວແທນກອງທຶນໂລກໃນປະເທດ ໃນການຄຸ້ມຄອງທຶນຊ່ວຍເຫຼືອ (LFA). |
| ພາກທີ 4 | ອະທິບາຍຫຼັກການ ແລະ ກົນໄກສຳລັບ **ການມີສ່ວນຮ່ວມຂອງຄູ່ຮ່ວມງານຈາກຫຼາຍພາກສ່ວນ**, ກຳນົດທິດທາງໃນການເຂົ້າເປັນສະມາຊິກ ແລະ ວິທີຄັດເລືອກ ແລະ ກຳນົດບົດບາດຂອງສະມາຊິກແຕ່ລະຄົນ. |
| ພາກທີ 5 | ໃຫ້ທິດທາງໃນການຈັດຕັ້ງໂຄງຮ່າງຂອງ CCM ເພື່ອບັນລຸຈຸດປະສົງ, ໂດຍສະເພາະກ່ຽວກັບ ກອງເລຂາ CCM, ຄະນະກຳມະການ ແລະ ໜ່ວຍງານດ້ານວິຊາການ ແລະ ບໍລິຫານ |
| ພາກທີ 6 | ອະທິບາຍຫຼັກການແລະການປະຕິບັດໃນ**ການບໍລິຫານທີ່ດີ**, ລວມທັງການພິຈາລະນາເລືອກປະທານແລະຮອງປະທານ, ສ້າງຂັ້ນຕອນໃນການຕັດສິນໃຈແບບໂປ່ງໃສ. |
| ພາກທີ 7 | ກອງທຶນໂລກໄດ້ຢັ້ງຢືນຄຳໝັ້ນສັນຍາຂອງຕົນກ່ຽວກັບ **ປະສິດທິຜົນຂອງການຊ່ວຍເຫຼືອ** ເຊິ່ງລວມມີ ຖະແຫຼງການປາຣີ ວ່າດ້ວຍປະສິດທິຜົນຂອງການຊ່ວຍເຫຼືອ ປີ 2005 (2005 Paris Declaration) ແລະ ແຜນປະຕິບັດງານອາກຣາ ປີ 2008 (2008 Accra Agenda for Action). ໄດ້ມີການກຳນົດ ຄຳແນະນຳພາກປະຕິບັດ ເພື່ອນຳໃຊ້ຫຼັກການປະສິດທິຜົນຂອງການຊ່ວຍເຫຼືອເຂົ້າໃນວຽກງານຂອງ CCM ພ້ອມທັງສົ່ງເສີມການເຊື່ອມໂຍງ ແລະ ການສອດຄ່ອງກັນ. |
| ພາກທີ 8 | ສັງລວມເງື່ອນໄຂຄວາມຕ້ອງການ **ເພື່ອມີສິດ** ໄດ້ຮັບທຶນ ສຳລັບ CCM, ບໍ່ແມ່ນ CCM ແລະ ການຂໍທຶນຮ່ວມຈາກຫຼາຍປະເທດ. |
| ພາກທີ 9 | ການທິບາຍການສະໜອງ **ການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນ** ແກ່ CCM ຜ່ານກອງເລຂາຂອງກອງທຶນໂລກ ແລະ ຄູ່ຮ່ວມງານ. |

| | |
|---|---|
| ພາກທີ 10 | ສັງລວມກົນໄກເພື່ອທົບທວນ **ການປະຕິບັດຂອງ CCM**, ລວມທັງ ຜ່ານການປະເມີນຕົນເອງຂອງ CCM, ກໍຄື ການຍົກບັນຫາ ແລະ ແກ້ໄຂບັນຫາ. |
| ເອກະສານຊ້ອນທ້າຍ 1 | ສະແດງປະເພດຕົວແທນຈາກພາກສ່ວນຕ່າງໆ ເພື່ອພິຈາລະນາເຂົ້າເປັນສະມາຊິກ CCM. |

ໄດ້ມີການບັນຈຸ ເວັບໄຊ, ອີເມວ ແລະ ເອກະສານອ້າງອີງເພີ່ມເຕີມ ທີ່ມີປະໂຫຍດ ໄວ້ໃນເອກະສານສະບັບນີ້ແລ້ວ.

**ພາກທີ 1: ຈຸດປະສົງ ແລະ ໂຄງສ້າງຂອງຄໍາແນະນໍາກ່ຽວກັບ CCM**

1. ເອກະສານສະບັບນີ້ ໄດ້ກໍານົດຄໍາແນະນໍາໃຫ້ແກ່ຄະນະກໍາມະການປະສານງານກອງທຶນໂລກ ໃນລະດັບປະເທດ (CCMs) ກ່ຽວກັບພາລະບົດບາດຂອງພວກເຂົາໃນຂະບວນການຂອງກອງທຶນໂລກ, ແລະ ຍັງໄດ້ກໍານົດນະໂຍບາຍທີ່ກອງທຶນໂລກຈະນໍາໃຊ້ເພື່ອປະເມີນຜົນການປະຕິບັດວຽກງານຂອງ CCM. ນອກຈາກນີ້, ຍັງໄດ້ອະທິບາຍກ່ຽວກັບແຫຼ່ງການຊ່ວຍເຫຼືອດ້ານວິຊາການ ແລະ ດ້ານການເງິນ ທີ່ມີໃຫ້ແກ່ CCM ອີກດ້ວຍ.

2. ຄໍາແນະນໍາສະບັບນີ້ ຍຶດໝັ້ນໃນຫຼັກການສໍາຄັນທີ່ໄດ້ຮວບຮວມໄວ້ໃນເອກະສານໂຄງຮ່າງຂອງກອງທຶນໂລກ. ທັງນີ້, ມັນໄດ້ສະແດງຄໍາໝັ້ນສັນຍາຕໍ່ແຜນງານທີ່ນໍາພາ ແລະ ຂັບເຄື່ອນໂດຍປະເທດ, ເຊິ່ງຮັບປະກັນການເຂົ້າຮ່ວມຈາກບັນດາຄູ່ຮ່ວມງານຕ່າງໆ, ແລະ ປະສານສົມທົບກັບ, ພ້ອມທັງສ້າງບົນພື້ນຖານໂຄງສ້າງທີ່ມີຢູ່ແລ້ວ ໃນຂອບເຂດທີ່ມີຄວາມເປັນໄປໄດ້.

3. ອີງຕາມຄວາມເໝາະສົມ, **ຄໍາແນະນໍາ**ສະບັບນີ້ໄດ້ກໍານົດໄວ້ດັ່ງນີ້:

   i. ***ເງື່ອນໄຂທີ່ຕ້ອງປະຕິບັດ***: ຊຶ່ງແມ່ນເງື່ອນໄຂຂັ້ນຕໍ່າສຸດທີ່ CCM ທັງໝົດຕ້ອງປະຕິບັດໃຫ້ໄດ້ ເພື່ອຈະມີສິດໄດ້ຮັບທຶນຈາກກອງທຶນໂລກ
   ii. **ມາດຕະຖານຂັ້ນຕໍ່າສຸດ**: ຊຶ່ງແມ່ນເງື່ອນໄຂຂັ້ນຕໍ່າທີ່ຖືວ່າມີຄວາມຈໍາເປັນຕໍ່ການປະຕິບັດວຽກງານຂອງ CCM ໃຫ້ມີປະສິດທິຜົນ, ໂດຍອີງໃສ່ປະສົບການທີ່ໄດ້ສະສົມ.
   iii. **ມາດຕະຖານ**: ຊຶ່ງແມ່ນເງື່ອນໄຂສໍາຄັນທີ່ຖືວ່າມີຄວາມຈໍາເປັນຕໍ່ການປະຕິບັດວຽກງານຂອງ CCM ໃຫ້ມີປະສິດທິຜົນ, ໂດຍອີງໃສ່ປະສົບການທີ່ໄດ້ສະສົມ.
   iv. **ຂໍ້ສະເໜີແນະ**: ຊຶ່ງແມ່ນຄໍາແນະນໍາກ່ຽວກັບການປະຕິບັດວຽກງານທີ່ດີ ທີ່ CCM ຄວນປະຕິບັດ ເພື່ອສົ່ງເສີມຫຼັກການສໍາຄັນ ແລະ ເພື່ອປັບປຸງຜົນການປະຕິບັດວຽກງານ.

4. ກອງເລຂາກອງທຶນໂລກ ຈະຕິດຕາມກວດກາການປະຕິບັດຕາມເງື່ອນໄຂທີ່ຕ້ອງປະຕິບັດຂອງ CCM ໜຶ່ງຄັ້ງຕໍ່ປີ, ແລະ ທຸກຄັ້ງທີ່ CCM ສະເໜີຂໍທຶນໃໝ່. ການສືບຕໍ່ປະຕິບັດຕາມທຸກເງື່ອນໄຂທີ່ຕ້ອງປະຕິບັດ (ແລະ ມາດຕະຖານຂັ້ນຕໍ່າສຸດ, ເຊິ່ງເລີ່ມຕົ້ນແຕ່ວັນທີ 1 ມັງກອນ 2015) ຕະຫຼອດໄລຍະການຈັດຕັ້ງປະຕິບັດແຜນງານ ແມ່ນຖືເປັນເງື່ອນໄຂສໍາລັບການເຂົ້າເຖິງທຶນຈາກກອງທຶນໂລກ.

5. ເພື່ອສົ່ງເສີມຫຼັກການຄຸ້ມຄອງທີ່ດີ, CCM ຄວນຮັບຮອງເອົາມາດຕະຖານ ແລະ ປະຕິບັດຕາມຂໍ້ສະເໜີແນະ. ມາດຕະຖານ ແລະ ຂໍ້ສະເໜີແນະ ເຫຼົ່ານີ້ ບໍ່ພຽງແຕ່ເປັນເງື່ອນໄຂໃນການຂໍທຶນຈາກກອງທຶນໂລກ, ແຕ່ກອງທຶນໂລກຍັງນໍາໃຊ້ຂໍ້ມູນເຫຼົ່ານີ້ເປັນພື້ນຖານໃນການປະເມີນຜົນການປະຕິບັດວຽກງານຂອງ CCM ທັງໝົດ. ການປະຕິບັດຕາມເງື່ອນໄຂທີ່ຕ້ອງປະຕິບັດ ເພື່ອໃຫ້ມີສິດໄດ້ຮັບທຶນ ແລະ ມາດຕະຖານຂັ້ນຕໍ່າສຸດ (ເຊິ່ງເລີ່ມຕົ້ນແຕ່ວັນທີ 1 ມັງກອນ 2015) ຕາມຄໍາແນະນໍາສໍາລັບ CCM ແມ່ນພັນທະທີ່ບັງຄັບ ແລະ ຈະຖືກນໍາໃຊ້ໂດຍ CCM ແລະ ກອງເລຂາຂອງກອງທຶນໂລກ ເພື່ອປັບປຸງໂຄງສ້າງການຈັດຕັ້ງປະຕິບັດຂອງ CCM, ອີງຕາມນະໂຍບາຍກ່ຽວກັບທຶນຂອງ CCM.

6. ກອງທຶນໂລກໄດ້ກໍານົດ 6 ເງື່ອນໄຂທີ່ຕ້ອງປະຕິບັດ ເພື່ອໃຫ້ CCM ມີສິດໄດ້ຮັບທຶນ, ດັ່ງນີ້:

**ເງື່ອນໄຂທີ 1:** ກອງທຶນໂລກກໍານົດໃຫ້ CCM ທັງໝົດຕ້ອງປະຕິບັດດັ່ງນີ້:

i. ການປະສານງານໃນການພັດທະນາເອກະສານຄໍາຮ້ອງຂໍທຶນ: ຕ້ອງດໍາເນີນການຜ່ານຂະບວນການທີ່ໂປ່ງໃສ ແລະ ມີການບັນທຶກໄວ້ ຊຶ່ງມີການເຂົ້າຮ່ວມຢ່າງກວ້າງຂວາງຈາກບັນດາຄູ່ຮ່ວມງານ—ລວມທັງສະມາຊິກ CCM ແລະ ບໍ່ແມ່ນສະມາຊິກ CCM—ໃນການຄົ້ນຫາຂໍ້ມູນ ແລະ ການທົບທວນກິດຈະກໍາຕ່າງໆ ເພື່ອຮວບຮວມເຂົ້າໃນເອກະສານຄໍາຮ້ອງ.
ii. ບັນທຶກຂັ້ນຕອນການເຂົ້າຮ່ວມຂອງກຸ່ມປະຊາກອນທີ່ໄດ້ຮັບຜົນກະທົບ[5] ໃນການພັດທະນາເອກະສານຄໍາຮ້ອງຂໍທຶນ, ລວມທັງກຸ່ມປະຊາກອນທີ່ມີຄວາມສ່ຽງສູງ.

**ເງື່ອນໄຂທີ 2: ກອງທຶນໂລກກໍານົດໃຫ້ CCM ທັງໝົດຕ້ອງປະຕິບັດດັ່ງນີ້:**

i. ສະເໜີຜູ້ຮັບທຶນຫຼັກ (Principal Recipient - PR) ໜຶ່ງຄົນ ຫຼື ຫຼາຍກວ່າ ໃນເວລາຍື່ນຄໍາຮ້ອງຂໍທຶນ[6].
ii. ບັນທຶກຂັ້ນຕອນທີ່ໂປ່ງໃສໃນການຄັດເລືອກຜູ້ຮັບທຶນຫຼັກຄົນໃໝ່ ແລະ ການຕໍ່ອາຍຸຜູ້ຮັບທຶນຫຼັກຄົນປັດຈຸບັນ, ໂດຍອີງໃສ່ຈຸດປະສົງ ແລະ ເງື່ອນໄຂທີ່ຊັດເຈນ.
iii. ບັນທຶກການຈັດການກ່ຽວກັບຜົນປະໂຫຍດຂັດແຍ່ງທີ່ອາດຈະເກີດຂຶ້ນ ເຊິ່ງອາດສົ່ງຜົນກະທົບຕໍ່ຂັ້ນຕອນການສະເໜີຜູ້ຮັບທຶນຫຼັກ (ເບິ່ງ ພາກທີ VI ກ່ຽວກັບການຄຸ້ມຄອງທີ່ດີ).

**ເງື່ອນໄຂທີ 3:** ເນື່ອງຈາກເຫັນໄດ້ເຖິງຄວາມສໍາຄັນຂອງການຕິດຕາມກວດກາ, ກອງທຶນໂລກກໍານົດໃຫ້ CCM ທັງໝົດ ຕ້ອງຍື່ນສະເໜີ ແລະ ຈັດຕັ້ງປະຕິບັດຕາມແຜນຕິດຕາມກວດກາ ສໍາລັບທຶນທັງໝົດທີ່ໄດ້ຮັບອະນຸມັດຈາກກອງທຶນ. ແຜນດັ່ງກ່າວຕ້ອງປະກອບມີລາຍລະອຽດກິດຈະກໍາ, ແລະ ຕ້ອງອະທິບາຍວ່າ CCM ຈະສົ່ງເສີມການມີສ່ວນຮ່ວມຂອງພາກສ່ວນຕ່າງໆທີ່ຮັບຜິດຊອບໂຄງການໃນການຕິດຕາມກວດກາແນວໃດ, ລວມທັງສະມາຊິກ CCM ແລະ ບໍ່ແມ່ນສະມາຊິກ CCM, ແລະ ໂດຍສະເພາະອົງກອນທີ່ບໍ່ສັງກັດລັດຖະບານ ແລະ ຜູ້ທີ່ຕິດເຊື້ອ ແລະ/ຫຼື ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດ.

---

[5] ປະຊາກອນທີ່ໄດ້ຮັບຜົນກະທົບລວມມີ: ແມ່ຍິງແລະຍິງໜຸ່ມ, ຜູ້ຊາຍຮ່ວມເພດກັບຊາຍ (ຊພຊ), ຜູ້ສັກຢາເສບຕິດ, ກະເທີຍ, ຜູ້ບໍລິການທາງເພດ, ຜູ້ທີ່ຖືກຄຸມຂັງ, ອົບພະຍົກແລະກຸ່ມຄົນທີ່ເຄື່ອນຍ້າຍ, ຜູ້ຕິດເຊື້ອເຮສໄອວີ, ໜຸ່ມສາວແລະຊາວໜຸ່ມ, ກໍາພ້າແລະເດັກທີ່ມີຄວາມສ່ຽງ, ແລະ ປະຊາກອນທີ່ມີບັນຫາດ້ານມະນຸດສະທໍາ.
[6] ໃນກໍລະນີຍົກເວັ້ນ, ກອງທຶນໂລກຈະເລືອກຜູ້ຮັບທຶນຕົ້ນຕໍໂດຍກົງ ໃຫ້ CCM ພາຍໃຕ້ ນະໂຍບາຍການປ້ອງກັນເພີ່ມເຕີມ

**ເງື່ອນໄຂທີ 4:** ກອງທຶນໂລກກຳນົດໃຫ້ CCM ທັງໝົດຕ້ອງສະແດງຫຼັກຖານການເປັນສະມາຊິກຂອງຜູ້ທີ່ຕິດເຊື້ອ ແລະ ເປັນຕົວແທນຂອງຜູ້ຕິດເຊື້ອ HIV, ພ້ອມທັງຜູ້ທີ່ໄດ້ຮັບຜົນກະທົບ * ແລະ ເປັນຕົວແທນຂອງຜູ້ທີ່ໄດ້ຮັບຜົນກະທົບຈາກວັນນະໂຣກ ** ແລະ ໄຂ້ຍຸງ *** , ລວມເຖິງຜູ້ທີ່ມາຈາກ ແລະ ເປັນຕົວແທນຂອງກຸ່ມປະຊາກອນທີ່ໄດ້ຮັບຜົນກະທົບອື່ນໆ ****. ການພິຈາລະນາການເປັນສະມາຊິກຕ້ອງອີງໃສ່ສະພາບການລະບາດຕົວຈິງ, ພ້ອມທັງຄຳນຶງເຖິງສິດທິມະນຸດ ແລະ ຄວາມສະເໝີພາບບົດບາດຍິງ-ຊາຍ.

* ຜູ້ທີ່ເຄີຍເປັນພະຍາດມາກ່ອນ ຫຼື ຜູ້ທີ່ມາຈາກຊຸມຊົນທີ່ມີພະຍາດເຫຼົ່ານີ້ແຜ່ລະບາດ.
** ໃນປະເທດທີ່ມີພະຍາດວັນນະໂຣກ ເປັນບັນຫາທາງສາທາລະນະສຸກ ຫຼື ທີ່ໄດ້ຍື່ນຂໍທຶນ ຫຼື ທີ່ໄດ້ຮັບອະນຸມັດທຶນສຳລັບວັນນະໂຣກໃນໄລຍະຜ່ານມາ.
*** ໃນປະເທດທີ່ມີຫຼັກຖານວ່າຍັງມີການແຜ່ລະບາດຂອງໄຂ້ຍຸງ ຫຼື ທີ່ໄດ້ຍື່ນຂໍທຶນ ຫຼື ທີ່ໄດ້ຮັບອະນຸມັດທຶນສຳລັບໄຂ້ຍຸງໃນໄລຍະຜ່ານມາ.
**** ກອງເລຂາ ອາດຈະພິຈາລະນາຍົກເວັ້ນ ການເປັນຕົວແທນຂອງຜູ້ທີ່ໄດ້ຮັບຜົນກະທົບ ຖ້າເຫັນວ່າມີຄວາມເໝາະສົມເພື່ອປົກປ້ອງຄວາມເປັນສ່ວນຕົວ ຂອງນິຕິບຸກຄົນ.

**ເງື່ອນໄຂທີ 5:** ກອງທຶນໂລກກຳນົດໃຫ້ ສະມາຊິກ CCM ທັງໝົດທີ່ເປັນຕົວແທນຈາກພາກສ່ວນທີ່ບໍ່ສັງກັດລັດຕ້ອງໄດ້ຖືກຄັດເລືອກໂດຍພາກສ່ວນດັ່ງກ່າວເອງ. ການຄັດເລືອກນີ້ຕ້ອງອີງຕາມຂັ້ນຕອນທີ່ໂປ່ງໃສ, ມີການບັນທຶກໄວ້, ແລະ ຖືກພັດທະນາຂຶ້ນພາຍໃນແຕ່ລະພາກສ່ວນ. ເງື່ອນໄຂນີ້ຖືກນຳໃຊ້ຕໍ່ສະມາຊິກທີ່ບໍ່ແມ່ນລັດຖະບານທຸກຄົນ, ລວມທັງສະມາຊິກທີ່ໄດ້ລະບຸໃນເງື່ອນໄຂທີ 4, ແຕ່ບໍ່ລວມເຖິງພາກສ່ວນຂອງອົງການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ.

**ເງື່ອນໄຂທີ 6:** ເພື່ອຮັບປະກັນໃຫ້ມີການຈັດການກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ, ກອງທຶນໂລກກຳນົດໃຫ້ CCM ທັງໝົດຕ້ອງປະຕິບັດດັ່ງນີ້:

i. ພັດທະນາ ແລະ ເຜີຍແຜ່ ນະໂຍບາຍເພື່ອຈັດການກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ ເຊິ່ງມີຜົນບັງຄັບໃຊ້ກັບສະມາຊິກ CCM ທຸກຄົນ ແລະ ຄອບຄຸມທຸກກິດຈະກຳຂອງ CCM. ນະໂຍບາຍດັ່ງກ່າວຕ້ອງລະບຸວ່າ ສະມາຊິກ CCM ທຸກຄົນຕ້ອງລາຍງານເປັນໄລຍະກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ ທີ່ອາດຈະສົ່ງຜົນກະທົບຕໍ່ຕົນເອງ ຫຼື ສະມາຊິກ CCM ອື່ນໆ. ນະໂຍບາຍຕ້ອງລະບຸຢ່າງຊັດເຈນ, ແລະ CCM ຕ້ອງບັນທຶກໄວ້, ວ່າສະມາຊິກ ຈະບໍ່ມີສ່ວນຮ່ວມໃນການຕັດສິນໃຈເມື່ອເຫັນຢ່າງຊັດເຈນວ່າ ມີຂໍ້ຂັດແຍ່ງດ້ານຜົນປະໂຫຍດ, ລວມທັງການຕັດສິນໃຈທີ່ພົວພັນເຖິງການກວດສອບ, ການຄັດເລືອກ, ຫຼື ການໃຫ້ທຶນແກ່ຜູ້ຮັບທຶນຫຼັກ ຫຼື ຜູ້ຮັບທຶນຍ່ອຍ.
ii. ການນຳໃຊ້ນະໂຍບາຍ ກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ ຕະຫຼອດໄລຍະການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຈາກກອງທຶນໂລກ, ແລະ ຍື່ນສະເໜີເອກະສານທີ່ເປັນຫຼັກຖານຢັ້ງຢືນການນຳໃຊ້ນະໂຍບາຍດັ່ງກ່າວໃຫ້ກອງທຶນໂລກເມື່ອມີການຮ້ອງຂໍ.

7. ເງື່ອນໄຂທີ່ຕ້ອງປະຕິບັດ ເຫຼົ່ານີ້ຍັງຖືກເນັ້ນຢ້ຳຕື່ມອີກໃນກ່ອງຂໍ້ຄວາມທີ່ຢູ່ໃນພາກສ່ວນທີ່ກ່ຽວຂ້ອງຂອງເອກະສານສະບັບນີ້, ແລະ ໄດ້ຖືກທົບທວນຄືນອີກຄັ້ງໃນພາກທີ VIII.

8. ເອກະສານນີ້ແບ່ງອອກເປັນພາກດັ່ງຕໍ່ໄປນີ້:

| | |
|---|---|
| ພາກທີ 1: | ຈຸດປະສົງ ແລະ ໂຄງຮ່າງຂອງບົດແນະນຳ CCM |
| ພາກທີ 2: | ຫຼັກການສຳຄັນ |
| ພາກທີ 3: | ບົດບາດ ແລະ ໜ້າທີ່ຫຼັກ ຂອງ CCMs |
| ພາກທີ 4 | ການມີສ່ວນຮ່ວມຂອງຄູ່ຮ່ວມງານຈາກຫຼາຍພາກສ່ວນໃນ CCMs |
| ພາກທີ 5 | ໂຄງຮ່າງຂອງ CCM |
| ພາກທີ 6 | ຫຼັກການແລະການປະຕິບັດໃນການບໍລິຫານທີ່ດີ |
| ພາກທີ 7 | ຫຼັກການແລະການປະຕິບັດປະສິດທິຜົນຂອງການຊ່ວຍເຫຼືອ |
| ພາກທີ 8 | ສິດໄດ້ຮັບທຶນ ສຳລັບ CCM |
| ພາກທີ 9 | ການຊ່ວຍເຫຼືອດ້ານວິຊາການແລະດ້ານການເງິນ ແກ່ CCM |
| ພາກທີ 10 | ການປະຕິບັດວຽກງານຂອງ CCM |
| ເອກະສານຊ້ອນທ້າຍ 1 | ບົດແນະນຳເລື້ອງການເປັນຕົວແທນຈາກພາກສ່ວນຕ່າງໆ |

9. ໄດ້ມີການແຊກຊ້ອນ ເວັບໄຊ, ອີເມວ ແລະ ເອກະສານເພີ່ມເຕີມ ທີ່ມີປະໂຫຍດ ພາຍໃນເອກະສານສະບັບນີ້. ຜູ້ອ່ານທີ່ບໍ່ສາມາດເຂົ້າເຖິງເອກະສານທາງລະບົບເອເລັກໂຕຣນິກໄດ້ ອາດພົວພັນກັບກອງທຶນໂລກ ໂດຍສົ່ງເອກະສານ ຫຼື ໂທລະສັບ/ໂທລະສານ/ອີເມວ ເພື່ອຂໍການຊ່ວຍເຫຼືອ[7].

## ພາກທີ 2: ຫຼັກການສຳຄັນ

10. ອີງໃສ່ ເອກະສານໂຄງການ ຂອງກອງທຶນໂລກ, ຈຸດປະສົງຂອງກອງທຶນໂລກແມ່ນ "ເພື່ອດຶງດູດ, ຄຸ້ມຄອງ ແລະ ແຈກຢາຍ ຊັບພະຍາກອນເພີ່ມເຕີມ ຜ່ານ ການເປັນຄູ່ຮ່ວມງານໃໝ່ ລະຫວ່າງລັດ-ເອກະຊົນ ຊຶ່ງຈະປະກອບສ່ວນແບບຍືນຍົງແລະສຳຄັນໃນການຫຼຸດຜ່ອນການຕິດເຊື້ອ, ການເຈັບປ່ວຍແລະການຕາຍ, ຊຶ່ງຈະນຳໄປສູ່ການຫຼຸດຜ່ອນຜົນກະທົບຈາກ ເຊື້ອເອສໄອວີ/ພະຍາດເອດສ໌, ວັນນະໂຣກ ແລະ ໄຂ້ຍຸງ ໃນປະເທດທີ່ຕ້ອງການ, ແລະ ປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ ຊຶ່ງເປັນພາກສ່ວນໜຶ່ງຂອງເປົ້າໝາຍສະຫັດສະວັດດ້ານການພັດທະນາ (MDGs)"

11. ໃນເອກະສານໂຄງຮ່າງ ມີຫຼັກການທີ່ສຳຄັນ ຊຶ່ງກອງທຶນໂລກໄດ້ນຳໃຊ້ເຂົ້າໃນນະໂຍບາຍແລະການຕັດສິນໃຈຕ່າງໆ, ແລະໄດ້ສະແດງເຖິງຄວາມໝັ້ນໝາຍຂອງກອງທຶນໂລກເພື່ອສະໜັບສະໜູນໂຄງການຕ່າງໆ, ດັ່ງນີ້:

   i. ສະແດງເຖິງ ຄວາມເປັນເຈົ້າຂອງປະເທດ ແລະ ເຄົາລົບການນຳພາໂດຍປະເທດ ຕໍ່ຂະບວນການສ້າງແລະປະຕິບັດແຜນງານ;

[7] The Global Fund (CCM team), Chemin de Blandonnet 8, Vernier 1214, Geneva, Switzerland. Tel: +4158 791 1700; Fax: +4158 791 1701 – e-mail: ccm@theglobalfund.org

ii. ເນັ້ນໃສ່ການສ້າງ, ພັດທະນາ ແລະ ຂະຫຍາຍຄູ່ຮ່ວມງານ ລະຫວ່າງ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ພາຍໃນປະເທດ, ແລະ ຂະແໜງການທາງສັງຄົມທັງໝົດ, ລວມທັງ ລັດຖະບານ, ອົງການຈັດຕັ້ງທາງສັງຄົມ[8], ອົງການຮ່ວມມືສອງຝ່າຍແລະຫຼາຍຝ່າຍ, ແລະ ຂະແໜງເອກະຊົນ;

iii. ເສີມຂະຫຍາຍການເຂົ້າຮ່ວມຂອງຊຸມຊົນແລະປະຊົນຊົນ,ໂດຍສະເພາະຜູ້ທີ່ໄດ້ຮັບຜົນກະທົບຈາກ ສາມພະຍາດ;

iv. ມີເປົ້າໝາຍເພື່ອຈຳກັດການລັງກຽດແລະການຈຳແນກຕໍ່ຜູ້ທີ່ຕິດເຊື້ອແລະຜູ້ທີ່ໄດ້ຮັບຜົນກະທົບຈາກ ສາມພະຍາດ, ໂດຍສະເພາະແມ່ຍິງ, ເດັກນ້ອຍ ແລະ ກຸ່ມທີ່ມີຄວາມສ່ຽງ;

v. ສ້າງບົນພື້ນຖານ, ເພີ່ມເຕີມ, ແລະ ປະສານສົມທົບ ກັບແຜນງານແຫ່ງຊາດແລະພາກພື້ນທີ່ມີຢູ່ແລ້ວ ເພື່ອສະໜັບສະໜູນນະໂຍບາຍແຫ່ງຊາດ, ບຸລິມະສິດ ແລະ ຄູ່ຮ່ວມງານ, ລວມທັງ ຍຸດທະສາດຫຼຸດຜ່ອນຄວາມທຸກຍາກ ແລະ ກົນໄກໂດຍມີຫຼາຍຂະແໜງການເຂົ້າຮ່ວມ; ແລະ

vi. ເສີມຂະຫຍາຍຄວາມໂປ່ງໃສ ແລະຄວາມເຊື່ອຖື.

12. ກອງທຶນໂລກເຫັນໄດ້ຄວາມສຳຄັນຂອງສະພາບພາຍໃນປະເທດ, ລະບົບການປົກຄອງ ແລະ ຂັ້ນຕອນການດຳເນີນງານຂອງລັດຖະບານ ທີ່ມີຄວາມແຕກຕ່າງກັນ. ກອງທຶນໂລກຍັງເຫັນໄດ້ບົດບາດຂອງລັດຖະບານໃນການປະສານງານລະຫວ່າງແຜນງານດ້ານສາທາລະນະສຸກທັງໝົດ ພາຍໃນປະເທດ, ລວມທັງບົດບາດ ໃນການວາງແຜນ, ການປະຕິບັດ ແລະ ການສະໜອງຊັບພະຍາກອນ ໃຫ້ ແຜນງານຕ່າງໆ.

13. ກອງທຶນໂລກມີຄວາມມຸ່ງໝັ້ນໃນວິທີການດ້ານສິດທິຕໍ່ສຸຂະພາບ ໂດຍການຂະຫຍາຍ ການເຂົ້າເຖິງ ການບໍລິການປ້ອງກັນ, ການປິ່ນປົວ, ການດູແລແລະການຊ່ວຍເຫຼືອ ຕໍ່ທຸກຄົນທີ່ກຳລັງຕິດເຊື້ອແລະໄດ້ຮັບຜົນກະທົບຈາກ ເຊື້ອເອສໄອວີ, ວັນນະໂຣກ ແລະ ໄຂ້ຍຸງ. ກອງທຶນໂລກສະໜັບສະໜູນແຜນງານທີ່ລວມເຂົ້າໃນການຈຳກັດການຈຳແນກແລະການລັງກຽດຕໍ່ຜູ້ກຳລັງຕິດເຊື້ອແລະໄດ້ຮັບຜົນກະທົບຈາກສາມພະຍາດ, ໂດຍສະເພາະປະຊາຊົນທີ່ດ້ອຍໂອກາດ ຫຼື ຖືກກົດໝາຍປະຕິເສດ, ເຊັ່ນ: ຊາຍຮ່ວມເພດກັບຊາຍ, ກະເທີຍ, ຜູ້ສັກຢາເສບຕິດ, ຜູ້ຊາຍແລະຜູ້ຍິງແລະກະເທີຍທີ່ບໍລິການທາງເພດ ແລະ ປະຊາກອນທີ່ໄດ້ຮັບຜົນກະທົບອື່ນໆ. ກອງທຶນໂລກອາດຈະບໍ່ຕົກລົງໃຫ້ທຶນ ຫຼື ສະໜັບສະໜູນ ກິດຈະກຳທີ່ລະເມີດສິດທິມະນຸດ ດັ່ງທີ່ໄດ້ກຳນົດໃນ ຖະແຫຼງການສາກົນວ່າດ້ວຍສິດທິມະນຸດຂອງສະຫະປະຊາຊາດ.

14. ເພື່ອເສີມຂະຫຍາຍ ຄວາມມຸ່ງໝັ້ນຕໍ່ຫຼັກການຂ້າງເທິງນັ້ນ, ກອງທຶນໂລກຕ້ອງການໃຫ້ລັດຖະບານແລະຄູ່ຮ່ວມງານທີ່ບໍ່ສັງກັດລັດຖະບານ ໃນລະດັບປະເທດ ກຳນົດກົນໄກຢ່າງຊັດເຈນໃນການປະສານງານຮ່ວມມືລະຫວ່າງໂຄງການຕ່າງໆທີ່ໄດ້ຮັບທຶນຈາກກອງທຶນໂລກ. ກົນໄກການປະສານງານຄວນຢູ່ໃນລະດັບສູງສຸດຂອງປະເທດ ຊຶ່ງຮັບຜິດຊອບໃນການວາງແຜນພັດທະນາແຫ່ງຊາດທີ່ມີການເຂົ້າຮ່ວມຂອງຫຼາຍພາກສ່ວນແລະຫຼາຍຂະແໜງການ. ເມື່ອມີຄວາມເໝາະສົມ, ອາດນຳໃຊ້ກົນໄກທີ່ມີຢູ່ແລ້ວ ເພື່ອເຮັດໜ້າທີ່ເຊິ່ງສາມາດສະໜອງຕາມເງື່ອນໄຂຄວາມຕ້ອງການເພື່ອມີສິດໃນການຮັບທຶນ ດັ່ງທີ່ໄດ້ກຳນົດໃນພາກທີ 1 ຂອງເອກະສານສະບັບນີ້. ເປົ້າໝາຍທຳອິດຂອງ ຄະນະກຳມະການປະສານງານ ຫຼື CCMs ນີ້ ຄວນເນັ້ນໃສ່ການມີສ່ວນຮ່ວມຂອງພາກສ່ວນຕ່າງໆ ໃນການສົ່ງເສີມຫຼັກການທີ່ໄດ້ສັງລວມໃນເອກະສານສະບັບນີ້ ໃນຂະນະດຽວກັນ ກໍປະຕິບັດຕາມໜ້າທີ່ຫຼັກດັ່ງຕໍ່ໄປນີ້:

---

[8] ເບິ່ງ "ຄຳນິຍາມຂອງອົງການຈັດຕັ້ງທາງສັງຄົມ" ກອງປະຊຸມດ້ານນະໂຍບາຍແລະຍຸດທະສາດ ຄັ້ງທີ 8; ເຈນີວາ, 19-21 ກັນຍາ 2001.GF/PSCB/07.

i. ປະສານການພັດທະນາແລະຍື່ນບົດສະເໜີເພື່ອຂໍທຶນ.
ii. ສະເໜີຜູ້ຮັບທຶນຫຼັກ.
iii. ຕິດຕາມກວດກາການປະຕິບັດໂຄງການຊ່ວຍເຫຼືອ.
iv. ອະນຸມັດການສະເໜີເພື່ອດັດແກ້ໂຄງການ.
v. ຮັບປະກັນການເຊື່ອມໂຍງແລະຄວາມສອດຄ່ອງກັນລະຫວ່າງໂຄງການຊ່ວຍເຫຼືອຈາກກອງທຶນໂລກ ແລະ ໂຄງການດ້ານສາທາລະນະສຸກແລະການພັດທະນາອື່ນໆ.

## ພາກທີ 3: ບົດບາດ ແລະ ໜ້າທີ່ຫຼັກ ຂອງ CCMs

***CCMs ແລະ ພາກສ່ວນອື່ນທີ່ສຳຄັນໃນການຄຸ້ມຄອງໂຄງການ***

15. ເພື່ອປະຕິບັດໜ້າທີ່ຫຼັກຂອງຕົນ, CCMs ຕ້ອງສົມທົບກັບພາກສ່ວນທີ່ສຳຄັນຕ່າງໆ ທີ່ມີບົດບາດດັ່ງຕໍ່ໄປນີ້:

i. ສະມາຊິກ CCM ແມ່ນເປັນຕົວແທນດ້ານຜົນປະໂຫຍດຂອງບັນດາຄູ່ຮ່ວມງານໃນລະດັບປະເທດ ໃນການຕ້ານແລະຄວບຄຸມ ເຊື້ອເອສໄອວີ, ວັນນະໂຣກ, ແລະ ໄຂ້ຍຸງ. CCMs ແມ່ນກົນໄກການຮ່ວມມືລະຫວ່າງລັດແລະເອກະຊົນ ໃນການຄຸ້ມຄອງແຜນງານແຫ່ງຊາດ. ໃນນາມນິຕິບຸກຄົນ, ສະມາຊິກ CCM ແມ່ນມີຄວາມຮັບຜິດຊອບຕໍ່ຂະແໜງການທີ່ຕົນໄດ້ຕາງໜ້າ ແລະ ໃນນາມຄະນະກຳມະການ, CCM ແມ່ນມີຄວາມຮັບຜິດຊອບຕໍ່ປະເທດ. ໃນນາມຕາງໜ້າປະເທດ, CCMs ສະເໜີຂໍທຶນຈາກກອງທຶນໂລກ, ແລະ ຕິດຕາມກວດກາ ເພື່ອຮັບປະກັນການປະຕິບັດແຜນງານໃຫ້ມີປະສິດທິຜົນ. ບົດບາດລະອຽດຂອງ CCM ຈະໄດ້ນຳສະເໜີຕໍ່ໄປໃນເອກະສານນີ້.
ii. ຜູ້ຮັບທຶນຕົ້ນຕໍ (PRs) ເຊັນສັນຍາຮັບທຶນກັບກອງທຶນໂລກ ຊຶ່ງແມ່ນເອກະສານສັນຍາຜູກພັນຕາມກົດໝາຍ. PRs ໄດ້ຮັບອະນຸມັດທຶນໂດຍກົງຈາກຄະນະກຳມະການຄຸ້ມຄອງກອງທຶນ ແລະ ບໍລິຫານຄຸ້ມຄອງການຈັດຕັ້ງປະຕິບັດແຜນງານຢ່າງໃກ້ຊິດ ໃນນາມ CCM. PRs ໄດ້ຖືກສະເໜີໂດຍ CCMs ແລະ ມີຄວາມຮັບຜິດຊອບຕໍ່ CCMs ເພື່ອບັນລຸຕາມຈຸດປະສົງຂອງແຜນງານ. PRs ສ່ວນຫຼາຍ ໄດ້ປະຕິບັດແຜນງານໂດຍກົງ ແລະ ໂດຍຜ່ານຜູ້ຮັບທຶນຍ່ອຍ (SRs).
iii. ຜູ້ຮັບທຶນຍ່ອຍ (SRs) ໄດ້ຮັບທຶນຈາກ PRs ເພື່ອປະຕິບັດອົງປະກອບຂອງແຜນງານທີ່ໄດ້ຮັບທຶນຈາກກອງທຶນໂລກ. SRs ລາຍງານຕໍ່ PRs ແລະ ການປະຕິບັດວຽກງານຂອງ SRs ແມ່ນມີຄວາມສຳຄັນຕໍ່ຄວາມສຳເລັດຂອງແຜນງານ.
iv. ກອງເລຂາຂອງກອງທຶນໂລກ ເຊັນສັນຍາອະນຸມັດກັບ PRs, ແລະ ບໍລິຫານຄຸ້ມຄອງການແຈກຢາຍທຶນໃຫ້ PRs ເປັນໄລຍະ ອີງໃສ່ຄວາມສຳເລັດຕາມເປົ້າໝາຍຂອງແຜນງານ - ແລະ ປະຕິບັດຕາມນະໂຍບາຍຂອງກອງທຶນໂລກ. ຜູ້ຈັດການກຸ່ມກອງທຶນ (FPM) ເປັນຈຸດປະສານງານຂອງກອງເລຂາກອງທຶນໂລກໃນການບໍລິຫານຄຸ້ມຄອງທຶນ ແລະ ຮັບຜິດຊອບເພື່ອຮັບປະກັນການສື່ສານແລະການພົວພັນທີ່ຈຳເປັນກັບພາກສ່ວນທີ່ມີສ່ວນຮ່ວມທີ່ສຳຄັນ ເພື່ອປະຕິບັດແຜນງານທີ່ໄດ້ຮັບທຶນຈາກກອງທຶນໂລກໃຫ້ມີປະສິດທິຜົນ.
v. ຜູ້ຕາງໜ້າກອງທຶນໃນປະເທດ (LFAs) ໄດ້ມີສັນຍາກັບກອງເລຂາຂອງກອງທຶນໂລກ ເພື່ອປະເມີນຄວາມສາມາດໃນການຈັດຕັ້ງປະຕິບັດ ແລະ ກວດສອບຜົນໄດ້ຮັບຂອງໂຄງການ ເຊິ່ງ ລາຍງານຈາກ PRs ແລະ SRs. LFAs ລາຍງານໂດຍກົງຕໍ່ກອງທຶນໂລກ. LFAs ບໍ່ແມ່ນຕົວແທນກອງເລຂາຂອງກອງທຶນໂລກ:

LFAs ສະເໜີຂໍ້ແນະນຳຕໍ່ກອງເລຂາ ແຕ່ບໍ່ໄດ້ຕັດສິນຕາງກອງເລຂາ. ລາຍລະອຽດເພີ່ມເຕີມກ່ຽວກັບບົດບາດຂອງ LFA ແມ່ນມີຢູ່ໃນ ປຶ້ມຄູ່ມື LFA ຂອງກອງທຶນໂລກ.

### *ສິດອຳນາດທາງກົດໝາຍຂອງ CCM ໃນພະລະບົດບາດຂອງຕົນ*

16. CCMs ອາດເຫັນວ່າມີປະໂຫຍດ ຖ້າປະກອບຕົນເອງໃຫ້ຖືກຕ້ອງຕາມກົດໝາຍ, ເຖິງແມ່ນວ່າບໍ່ແມ່ນເງື່ອນໄຂຄວາມຕ້ອງການຂອງກອງທຶນໂລກກໍຕາມ. ໃນທຸກກໍລະນີ, ຂໍ້ກຳນົດແລະເງື່ອນໄຂມາດຕະຖານຂອງກອງທຶນໂລກ (Standard Terms and Conditions: STCs) ສຳລັບການອະນຸມັດເງິນຊ່ວຍເຫຼືອ (ຫຼື, ເມື່ອຄົບກຳນົດຂອງ STCs, ຂໍ້ກຳນົດກ່ຽວກັບການອະນຸມັດເງິນຊ່ວຍເຫຼືອ 2014) ລວມມີຫຼາຍມາດຕາ[9] ທີ່ ໃຫ້ອຳນາດທາງກົດໝາຍແກ່ CCM ໃນການປະຕິບັດພາລະບົດບາດຂອງຕົນ ແລະ ໃຫ້ PR ຕ້ອງປະສານກັບ CCM ເພື່ອປະຕິບັດໜ້າທີ່ຮັບຜິດຊອບການຕິດຕາມກວດກາ. ມາດຕາເຫຼົ່ານີ້ມີຄື:

i. ມາດຕາ 7a[10] ຫຼື ພາກທີ 4.1 (1)[11] : CCM ຕິດຕາມກວດກາການປະຕິບັດແຜນງານທີ່ໄດ້ຮັບທຶນຈາກກອງທຶນໂລກ.
ii. ມາດຕາ 7b[11] ຫຼື ພາກທີ 4.1 (2) ແລະ 6.2 (1)(c)[12] : PRs ມີພັນທະທາງກົດໝາຍ ໃນການຮ່ວມມືກັບ CCMs ແລະ ພົບກັບ CCMs ເປັນປົກະຕິ ເພື່ອສົນທະນາກ່ຽວກັບແຜນການ, ແລກປ່ຽນຂໍ້ມູນ ແລະ ສື່ສານ ເລື່ອງທີ່ພົວພັນກັບແຜນງານ. PRs ຍັງມີພັນທະທາງກົດໝາຍໃນການລາຍງານແລະສະໜອງຂໍ້ມູນກ່ຽວກັບແຜນງານໃຫ້ CCM ຕາມຄວາມຕ້ອງການ.
iii. ມາດຕາ 15[11] ຫຼື ພາກທີ 6.2(1)(c)[12] : PR ມີພັນທະທາງກົດໝາຍໃນການສະໜອງສຳເນົາບົດລາຍງານທີ່ສົ່ງໃຫ້ກອງທຶນໂລກໃນແຕ່ລະໄລຍະ ໃຫ້ CCM.
iv. ມາດຕາ 23[11] ຫຼື ພາກທີ 10.1[12] : ຕ້ອງໄດ້ປຶກສາກັບ CCM ເມື່ອມີການຕັດສິນໃຈເພື່ອປ່ຽນ PRs.[12]
v. ມາດຕາ 25[11] ຫຼື ພາກທີ 4.3(4/)[13] : PRs ມີພັນທະທາງກົດໝາຍໃນການສະໜອງສຳເນົາໃຫ້ CCMs ທຸກໆ ແຈ້ງການ, ການສະເໜີ, ເອກະສານ, ການລາຍງານ ຫຼື ການແລກປ່ຽນຂໍ້ມູນຂ່າວສານອື່ນໆ ກັບກອງທຶນໂລກ.
vi. ມາດຕາ 28b[11] : PR ປະຕິບັດແຜນງານ ໃນນາມຂອງ CCM.

### *ໜ້າທີ່ຫຼັກ: ການພັດທະນາບົດສະເໜີຂໍທຶນຈາກກອງທຶນໂລກ*

17. CCMs ອາດເຂົ້າເຖິງທຶນຈາກກອງທຶນໂລກ ໄດ້ຫຼາຍກ່ວານຶ່ງຮູບແບບ, ຕົວຢ່າງ, ການສະເໜີຂໍທຶນຕາມຮອບວຽນ ແລະ ການສະເໜີຂໍທຶນຕາມຍຸດທະສາດແຫ່ງຊາດ. CCMs ມີຄວາມຮັບຜິດຊອບໃນການຄັດເລືອກຂັ້ນຕອນທີ່ເໝາະສົມທີ່ສຸດຊຶ່ງ CCMs ມີສິດໃນການສະເໜີຂໍທຶນ.

---

[9] ສັນຍາອະນຸມັດເງິນຊ່ວຍເຫຼືອສຳລັບອົງການຮ່ວມມືຫຼາຍຝ່າຍແມ່ນແຕກຕ່າງກັນ.

[10] ຂໍ້ກຳນົດແລະເງື່ອນໄຂມາດຕະຖານຂອງກອງທຶນໂລກ ຕ້ານພະຍາດເອດ, ວັນນະໂລກ ແລະ ໄຂ້ຍຸງ (2012)

[11] ຂໍ້ກຳນົດກ່ຽວກັບການອະນຸມັດເງິນຊ່ວຍເຫຼືອຂອງກອງທຶນໂລກ ຕ້ານພະຍາດເອດ, ວັນນະໂລກ ແລະ ໄຂ້ຍຸງ (2014)

[12] ຍົກເວັ້ນແຕ່ ນະໂຍບາຍການປົກປ້ອງເພີ່ມເຕີມ ຂອງກອງທຶນໂລກໄດ້ຖືກນຳໃຊ້.

[13] ສັນຍາກອບການຮ່ວມມືລະຫວ່າງກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ ແລະ ຜູ້ຮັບເງິນຊ່ວຍເຫຼືອ

18. ກອງທຶນໂລກຮັບຮູ້ວ່າ ມີພຽງແຕ່ຜ່ານຂະບວນການແບບ ປະເທດເປັນເຈົ້າຂອງ, ມີການປະສານງານ ແລະ ມີການເຂົ້າຮ່ວມຈາກຫຼາຍຂະແໜງການໂດຍລວມທຸກພາກສ່ວນທີ່ກ່ຽວຂ້ອງ - ເຊິ່ງມີຄວາມສາມາດ, ມີພື້ນຖານ ແລະ ມີປະສົບການທີ່ແຕກຕ່າງກັນ - ຈະເຮັດໃຫ້ຊັບພະຍາກອນເພີ່ມເຕີມນີ້ ມີຜົນກະທົບທີ່ສຳຄັນ ຕໍ່ ສາມພະຍາດ. ໃນທີ່ສຸດ - ໂດຍບໍ່ຄຳນຶງເຖິງຮູບແບບທີ່ນຳໃຊ້ໃນການຂໍທຶນ - ການເຂົ້າຮ່ວມຢ່າງກວ້າງຂວາງຂອງພາກສ່ວນຕ່າງໆ ຈາກລັດຖະບານ ແລະ ບໍ່ສັງກັດລັດຖະບານ ໃນການພັດທະນາບົດສະເໜີຂໍທຶນຊ່ວຍເຫຼືອ ແມ່ນເຫັນວ່າມີຄວາມຈຳເປັນ.

19. **ເງື່ອນໄຂທີ 1:** ກອງທຶນໂລກ**ຕ້ອງການ**ໃຫ້ CCM ທັງໝົດ ຕ້ອງ:

i. ປະສານງານໃນການພັດທະນາບົດສະເໜີເພື່ອຂໍທຶນ ໂດຍຜ່ານຂະບວນການທີ່ໂປ່ງໃສ ແລະ ມີການບັນທຶກເຊິ່ງມີການເຂົ້າຮ່ວມຢ່າງກວ້າງຂວາງຈາກບັນດາຄູ່ຮ່ວມງານ - ລວມທັງ ສະມາຊິກ CCM ແລະ ບໍ່ແມ່ນສະມາຊິກ CCM - ໃນການສອບຖາມແລະການທົບທວນກິດຈະກຳ ເພື່ອສັງລວມເຂົ້າໃນບົດຄຳຮ້ອງ.
ii. ບັນທຶກຂັ້ນຕອນໃນການເຂົ້າຮ່ວມຂອງປະຊາກອນທີ່ໄດ້ຮັບຜົນກະທົບ[14] ໃນການພັດທະນາບົດສະເໜີເພື່ອຂໍທຶນ, ລວມທັງປະຊາກອນທີ່ມີຄວາມສ່ຽງສູງ.

20. ນອກຈາກນັ້ນ, ກອງທຶນໂລກໄດ້ແນະນຳໃຫ້ CCMs ໃນການພັດທະນາບົດສະເໜີເພື່ອຂໍທຶນ ດັ່ງນີ້:

i. ຮັບປະກັນວ່າບົດສະເໜີເພື່ອຂໍທຶນຕ້ອງສອດຄ່ອງກັບຈຸດປະສົງການພັດທະນາແຫ່ງຊາດ ແລະ ເຊື່ອມໂຍງກັບຄວາມພະຍາຍາມທີ່ມີຢູ່ແລ້ວຂອງພາກສ່ວນອື່ນໆທັງພາຍໃນແລະສາກົນ. ການຂໍທຶນຊ່ວຍເຫຼືອຄວນອີງໃສ່ຊ່ອງຫວ່າງທາງດ້ານງົບປະມານໃນແຜນງານແຫ່ງຊາດ.
ii. ພິຈາລະນາການປະກອບສ່ວນໃນການສ້າງຄວາມເຂັ້ມແຂງລະບົບສາທາລະນະສຸກ ແລະ ຊຸມຊົນ ໂດຍຜ່ານການຊ່ວຍເຫຼືອຂອງກອງທຶນໂລກ. CCMs ຄວນຊອກຫາວິທີ ເພື່ອເພີ່ມການຮ່ວມມືກັນລະຫວ່າງທຶນຊ່ວຍເຫຼືອທັງໝົດພາຍໃຕ້ການຕິດຕາມກວດກາຂອງ CCMs, ໂດຍສະເພາະໃນຂົງເຂດທີ່ມີການພົວພັນກັນຢ່າງໃກ້ສິດ, ເຊັ່ນ ເອສໄອວີ ແລະ ວັນນະໂຣກ.
iii. ເພີ່ມການເຂົ້າຮ່ວມຂອງພາກສ່ວນວິຊາການແລະຊອກຫາການຊ່ວຍເຫຼືອດ້ານວິຊາການທີ່ຈຳເປັນ ເພື່ອຮັບປະກັນວ່າແຜນງານທີ່ໄດ້ຂໍການຊ່ວຍເຫຼືອນັ້ນ ບັນລຸຕາມເປົ້າໝາຍ ໂດຍມີປະສິດທິພາບແລະຄວາມຍືນຍົງ.
iv. ລວມເອົາແຜນງົບປະມານສຳລັບການບໍລິຫານຄຸ້ມຄອງ ແລະ/ຫຼື ການຊ່ວຍເຫຼືອດ້ານວິຊາການ ເພື່ອຮັບປະກັນໃຫ້ການປະຕິບັດແຜນງານມີຄວາມເຂັ້ມແຂງ. ສິ່ງນີ້ ອາດສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິຫານຄຸ້ມຄອງແຜນງານ ແລະ/ຫຼື ຄວາມສາມາດໃນການປະຕິບັດວຽກງານຂອງ PRs ຫຼື SRs. ຍິ່ງໄປກວ່ານັ້ນ, ການຊ່ວຍເຫຼືອດ້ານວິຊາການຄວນຈະສ້າງຄວາມສາມາດພາຍໃນປະເທດໃນໄລຍະຍາວ, ຮູ້ຊ່ອງຫວ່າງແລະຈຸດອ່ອນຂອງແຜນງານ, ແລະ ຄວນນຳໄປສູ່ການມີຄຸນນະພາບສູງຂອງການບໍລິການ.
v. ພິຈາລະນາຢ່າງຮອບຄອບຂໍ້ແນະນຳກ່ຽວກັບບົດວິພາກເພື່ອຂໍທຶນຂອງກອງທຶນໂລກ ຊຶ່ງອາດນຳໄປພິຈາລະນາໃນນະໂຍບາຍທີ່ກ່ຽວຂ້ອງ, ແລະນຳໄຊ້ຕາມຄວາມເໝາະສົມຂອງແຕ່ລະປະເທດ. ສຳລັບຂໍ້ແນະນຳເພີ່ມ

[14] ປະຊາກອນຫຼັກທີ່ໄດ້ຮັບຜົນກະທົບປະກອບດ້ວຍ: ປະຊາກອນທີ່ໄດ້ຮັບຜົນກະທົບລວມມີ: ແມ່ຍິງແລະຍິງໜຸ່ມ, ຜູ້ຊາຍຮ່ວມເພດກັບຊາຍ (ຊພຊ), ຜູ້ສັກຢາເສບຕິດ, ກະເທີຍ, ຜູ້ບໍລິການທາງເພດ, ຜູ້ທີ່ຖືກຄຸມຂັງ, ອົບພະຍົກແລະກຸ່ມຄົນທີ່ເຄື່ອນຍ້າຍ, ຜູ້ຕິດເຊື້ອເອສໄອວີ, ໜຸ່ມສາວແລະຊາວໜຸ່ມ, ກຳພ້າແລະເດັກທີ່ມີຄວາມສ່ຽງ, ແລະ ປະຊາກອນທີ່ມີບັນຫາດ້ານມະນຸດສະທຳ.

ເຕີມໃນການພັດທະນາບົດວິພາກເພື່ອຂໍທຶນ, ກະລຸນາເບິ່ງ ພາກຜູ້ສະໝັກຂໍທຶນໃນໜ້າແວັບ (webpage) ຂອງກອງທຶນໂລກ.

21. CCMs ຕ້ອງຮັບຮູ້ວ່າການພັດທະນາບົດສະເໜີ ເພື່ອຂໍທຶນໂດຍມີການປຶກສາຫາລືກັບພາກສ່ວນຕ່າງໆນັ້ນ ແມ່ນໃຊ້ເວລາຫຼາຍ ແລະ ຕ້ອງໃຊ້ຈ່າຍງົບປະມານ ເຊັ່ນ ການປະຊຸມກັບຄູ່ຮ່ວມງານ, ການພົວພັນສື່ສານ, ການແປພາສາ, ແລະ ການຊ່ວຍເຫຼືອດ້ານວິຊາການ. ກອງທຶນໂລກບໍ່ໄດ້ສະໜັບສະໜູນງົບປະມານໃຫ້ແກ່ການພັດທະນາບົດສະເໜີ

22. ກອງທຶນໂລກຈະຮັບຮອງບົດສະເໜີທີ່ນຳໄປສູ່ "ກະແສດຽວຂອງທຶນຊ່ວຍເຫຼືອ" ຈາກ PR ໃນຂົງເຂດພະຍາດໃດໜຶ່ງເທົ່ານັ້ນ. ອັນນີ້ ບໍ່ມີຜົນຕໍ່ການແນະນຳ PR ໃໝ່ ຫຼື ຫຼາຍ PR ຫຼື PR ໃນຂົງເຂດພະຍາດ. CCMs ຍັງໄດ້ຮັບການສະໜັບສະໜູນໃຫ້ນຳນະໂຍບາຍຈັດຫາທຶນແບບຕິດຕາມສອງຊ່ອງທາງ (dual-track financial policy). ງົບປະມານແລະແຜນວຽກໃນບົດສະເໜີຕ້ອງມີ:

i. ເງິນຊ່ວຍເຫຼືອໃໝ່ທີ່ຂໍສຳລັບ PR ແລະ ຂົງເຂດພະຍາດ, ແລະ
ii. ເງິນຊ່ວຍເຫຼືອທີ່ໄດ້ຮັບອະນຸມັດຈາກກອງທຶນແລ້ວ ສຳລັບ PR ແລະ ຂົງເຂດພະຍາດດຽວກັນ.

23. ບົດສະເໜີ ແລະ ລັກສະນະອື່ນໆຂອງການໃຫ້ທຶນໃນຮູບແບບໃໝ່ຂອງກອງທຶນໂລກ ແມ່ນອະນຸຍາດໃຫ້ CCMs ເພື່ອຫຼຸດຜ່ອນອົງປະກອບຍ່ອຍຂອງແຜນງານ ມາເປັນທຶນຊ່ວຍເຫຼືອລວມ (ຕໍ່ PR), ຮັກສາລັກສະນະຂອງແຜນງານ (program-based perspective) ໃນລະຫວ່າງການພັດທະນາແລະທົບທວນແຜນງານ, ແລະ ເພື່ອໃຫ້ບັນລຸປະສິດທິພາບໃນການບໍລິຫານທຶນຊ່ວຍເຫຼືອ.

***ໜ້າທີ່ຫຼັກ: ສະເໜີຜູ້ຮັບທຶນຕົ້ນຕໍເພື່ອປະຕິບັດທຶນຊ່ວຍເຫຼືອຈາກກອງທຶນໂລກ***

24. ໃນບົດສະເໜີ, CCMs ຕ້ອງໄດ້ອະທິບາຍການກະກຽມໃນການຈັດຕັ້ງປະຕິບັດ ເພື່ອສະແດງໃຫ້ເຫັນເຖິງຄວາມເປັນໄປໄດ້ຂອງແຜນງານທີ່ໄດ້ສະເໜີ. ເພື່ອໃຫ້ສຳເຫຼັດຜົນຕາມແຜນ, ການສະເໜີເອົາ PR ຕ້ອງປະຕິບັດຕາມຂັ້ນຕອນທີ່ໂປ່ງໃສ ໂດຍມີເປົ້າໝາຍເພື່ອຄັດເລືອກເອົາອົງການຈັດຕັ້ງທີ່ມີຄວາມສາມາດທີ່ສຸດ ທີ່ຈະບັນລຸເປົ້າໝາຍຕາມແຜນການທີ່ວາງໄວ້.

25. **ເງື່ອນໄຂທີ 2:** ກອງທຶນໂລກຕ້ອງການໃຫ້ CCM ທັງໝົດ ຕ້ອງ:

i. ສະເໜີ ໜຶ່ງ ຫຼື ຫຼາຍຜູ້ຮັບທຶນຕົ້ນຕໍ (PR) ໃນເວລາຍື່ນຄຳຮ້ອງເພື່ອຂໍທຶນ[15].
ii. ບັນທຶກຂັ້ນຕອນທີ່ໂປ່ງໃສໃນການສະເໜີເອົາຜູ້ຮັບທຶນຕົ້ນຕໍໃໝ່ແລະສືບຕໍ່ຜູ້ຮັບທຶນຕົ້ນຕໍໃນປະຈຸບັນ ໂດຍອີງໃສ່ຈຸດປະສົງແລະເງື່ອນໄຂຢ່າງຊັດເຈນ.
iii. ບັນທຶກການຈັດການກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດທີ່ອາດມີ ເຊິ່ງອາດກະທົບຕໍ່ຂັ້ນຕອນການສະເໜີຜູ້ຮັບທຶນຕົ້ນຕໍ (ເບິ່ງພາກທີ 6 ກ່ຽວກັບການບໍລິຫານທີ່ດີ).

[15] ໃນກໍລະນີຍົກເວັ້ນ, ກອງທຶນໂລກຈະເລືອກຜູ້ຮັບທຶນຕົ້ນຕໍໂດຍກົງ ໃຫ້ CCM ພາຍໃຕ້ ນະໂຍບາຍການປ້ອງກັນເພີ່ມເຕີມ

26. ກອງທຶນໂລກຍັງໄດ້ກໍານົດ**ມາດຖານໃຫ້ CCM** ໃນການສະເໜີເອົາ PR ດັ່ງລຸ່ມນີ້:

i. CCMs ຄວນສະເໜີເອົາ PR ທັງຈາກລັດຖະບານແລະບໍ່ສັງກັດລັດຖະບານ ສ□າລັບແຜນງານຂອງແຕ່ລະພະຍາດ ເພື່ອເສີມຂະຫຍາຍບົດບາດຂອງພາກສ່ວນສັງຄົມແລະຂະແໜງການເອກະຊົນ ໃນການຕອບໂຕ້ຕໍ່ສາມພະຍາດ[16]. ລາຍລະອຽດເພີ່ມເຕີມຂອງນະໂຍບາຍກອງທຶນໂລກນີ້ ໄດ້ກໍານົດໃນໝາຍເຫດ ກ່ຽວກັບ ການຈັດຫາທຶນແບບຕິດຕາມສອງຊ່ອງທາງ (Dual Track Financing).

27. ຫຼັງຈາກບົດສະເໜີໄດ້ຮັບອະນຸມັດ, PRs ທີ່ໄດ້ຮັບການສະເໜີຈາກ CCM ຕ້ອງໄດ້ຜ່ານການປະເມີນ ລະບົບແລະຊັບພະຍາກອນຕ່າງໆ ກ່ອນທີ່ຈະໄດ້ຮັບການຢືນຢັນ. ກອງທຶນໂລກແນະນໍາໃຫ້ CCMs ຕ້ອງ:

i. ສະເໜີເອົາ PR ໂດຍຜ່ານຂັ້ນຕອນ ທີ່ໂປ່ງໃສ ໃນໄລຍະທໍາອິດຂອງຂະບວນການກະກຽມບົດສະເໜີ ເພື່ອຈະເອົາເຂົ້າໃນແຜນການຊ່ວຍເຫຼືອດ້ານວິຊາການ ຖ້າມີຄວາມຕ້ອງການໃນການສ້າງຄວາມສາມາດ, ເຊິ່ງບັນຫານີ້ຕ້ອງໄດ້ພິຈາລະນາໃນເວລາເຮັດການປະເມີນຄວາມສາມາດຂອງ PR.
ii. ຮ່ວມວຽກກັບ PRs ເພື່ອຮັບປະກັນໃຫ້ຂະບວນການຄັດເລືອກ SR ມີການເປີດກວ້າງ, ຍຸຕິທໍາ ແລະ ອີງຕາມຈຸດປະສົງ ເງື່ອນໄຂ ຄວາມສາມາດໃນການປະຕິບັດວຽກງານ. CCMs ຕ້ອງຮັບປະກັນວ່າ - ເທົ່າທີ່ເປັນໄປໄດ້ - PRs ທີ່ໄດ້ຮັບການສະເໜີ ໂດຍມີການປຶກສາຫາລືກັບ CCM ຈະກໍານົດເອົາ SRs ໃນເວລາພັດທະນາບົດສະເໜີຂໍທຶນ ເພື່ອໃຫ້ຄວາມເປັນໄປໄດ້ຂອງແຜນງານທີ່ນໍາສະເໜີສາມາດປະເມີນໄດ້.
iii. ໃນບ່ອນໃດທີ່ເປັນໄປໄດ້ CCMs ຄວນສະເໜີເອົາ PRs ພາຍໃນປະເທດ ເພື່ອຮັບປະກັນວ່າຄວາມສາມາດພາຍໃນປະເທດໄດ້ຮັບການພັດທະນາ ເຮັດໃຫ້ການຕອບໂຕ້ມີຄວາມຍືນຍົງເພີ່ມຂຶ້ນ. ກອງທຶນໂລກຮັບຮູ້ວ່າໃນບາງສະພາບການ ອົງການຈັດຕັ້ງສາກົນ (ອົງການຮ່ວມມືຫຼາຍຝ່າຍ ຫຼື ອົງການສາກົນທີ່ບໍ່ສັງກັດລັດຖະບານ: INGOs) ແມ່ນ ເໝາະສົມທີ່ສຸດ ທີ່ຈະເປັນ PRs ຊົ່ວຄາວ. ໃນກໍລະນີນີ້, CCMs ຄວນເອົາແຜນພັດທະນາຄວາມສາມາດພາຍໃນປະເທດແລະແຜນສົ່ງຕໍ່ຄວາມສາມາດ ເປັນແຜນງານບຸລິມະສິດໃນບົດສະເໜີເພື່ອຂໍທຶນຊ່ວຍເຫຼືອ.

### *ໜ້າທີ່ຫຼັກ: ຕິດຕາມກວດກາ PRs ແລະການປະຕິບັດແຜນງານ*

28. ເມື່ອຮັບປະກັນວ່າ CCMs ໄດ້ຮັບທຶນຈາກກອງທຶນໂລກແລ້ວ, ໜ້າທີ່ທີ່ສ□າຄັນຂອງ CCMs ກໍຄື ຕິດຕາມກວດກາ. CCMs ຕ້ອງຕິດຕາມກວດກາການປະຕິບັດວຽກງານຂອງ PRs ເພື່ອຮັບປະກັນວ່າ PRs ຈະສາມາດບັນລຸເປົ້າໝາຍທີ່ວາງໄວ້ໃນແຜນງານທີ່ປະຕິບັດ. ໂດຍຜ່ານການຕິດຕາມກວດກາຂອງ CCMs, PRs ຕ້ອງມີຄວາມຮັບຜິດຊອບຕໍ່ທຸກພາກສ່ວນທີ່ກ່ຽວຂ້ອງພາຍໃນປະເທດ.

---

[16] ເປັນທີ່ຮັບຮູ້ກັນວ່າ ການຈັດຫາທຶນແບບຕິດຕາມສອງຊ່ອງທາງ (Dual Track Financing) ອາດເປັນໄປບໍ່ໄດ້ໃນທຸກການສະເໜີຂໍທຶນ ຍ້ອນສະພາບພາຍໃນຂອງແຕ່ລະປະເທດ. ໃນກໍລະນີນີ້, ຜູ້ສະເໜີຂໍທຶນໄດ້ຖືກສະເໜີໃຫ້ສັງລວມເຫດຜົນ ວ່າເປັນຫຍັງທາງເລືອກນີ້ຈຶ່ງບໍ່ໄດ້ຮັບເລືອກ, ແລະ ສືບທະນາ ເບິ່ງວິທີອື່ນ ເຊິ່ງຂໍ້ສະເໜີຂອງພວກເຂົາມີຈຸດມຸ້ງໝາຍເພື່ອຮັບປະກັນວ່າທັງຂະແໜງການລັດຖະບານແລະບໍ່ສັງກັດລັດຖະບານ ເຂົ້າຮ່ວມໃນການປະຕິບັດ ຖ້າບໍ່ຢູ່ໃນລະດັບ PR. Global Fund Information Note: Dual-track Financing (May 2010).

29. **ເງື່ອນໄຂທີ 3:** ເຫັນໄດ້ເຖິງຄວາມສໍາຄັນຂອງການຕິດຕາມກວດກາ, ກອງທຶນໂລກຕ້ອງການໃຫ້ CCM ທັງໝົດ ຕ້ອງຍື່ນແລະ ປະຕິບັດຕາມແຜນຕິດຕາມກວດກາ ສໍາລັບທຶນທັງໝົດທີ່ໄດ້ຮັບອະນຸມັດຈາກກອງທຶນ. ແຜນຕ້ອງປະກອບມີກິດຈະກໍາລະອຽດ, ແລະ ຕ້ອງອະທິບາຍວ່າ CCM ຈະເອົາພາກສ່ວນຕ່າງໆທີ່ຮັບຜິດຊອບໂຄງການເຂົ້າຮ່ວມໃນການຕິດຕາມກວດກາແນວໃດ, ລວມທັງ ສະມາຊິກ CCM ແລະ ບໍ່ແມ່ນສະມາຊິກ CCM, ແລະ ໂດຍສະເພາະພາກສ່ວນທີ່ບໍ່ສັງກັດລັດຖະບານ ແລະ ຜູ້ທີ່ຕິດເຊື້ອ ແລະ/ຫຼື ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດ.

30. ກອງທຶນໂລກໄດ້ກໍານົດ **ສ່ວນປະກອບຂອງການດໍາເນີນວຽກງານ ໃນເງື່ອນໄຂທີ 3** ດັ່ງຕໍ່ໄປນີ້:

i. CCM ໄດ້ມີແຜນຕິດຕາມກວດກາ ພ້ອມດ້ວຍກິດຈະກໍາສະເພາະ ລະອຽດ, ມີຄວາມຮັບຜິດຊອບໂດຍບຸກຄົນ ແລະ/ຫຼື ພາກສ່ວນອື່ນໆ, ກໍານົດຕາຕະລາງເວລາ ແລະ ງົບປະມານ ເຊິ່ງລວມຢູ່ໃນງົບປະມານຂອງ CCM.

ii. CCM ໄດ້ຈັດຕັ້ງຄະນະກໍາມະການປະຈໍາເພື່ອຕິດຕາມກວດກາ ເຊິ່ງປະກອບດ້ວຍທີມງານທີ່ມີຄວາມຮູ້ຄວາມຊໍານານຄົບຊຸດ ເພື່ອຮັບປະກັນການຕິດຕາມກວດກາເປັນໄລຍະ.

iii. ຄະນະກໍາມະການຕິດຕາມກວດກາ ຫຼື CCM ຂໍຄວາມຄິດເຫັນຈາກຜູ້ທີ່ບໍ່ແມ່ນສະມາຊິກ CCM ແລະຈາກຜູ້ທີ່ກໍາລັງຕິດເຊື້ອ ແລະ/ຫຼື ໄດ້ຮັບຜົນກະທົບຈາກພະຍາດ.

31. ກອງທຶນໂລກໄດ້ກໍານົດ **ມາດຕະຖານຂັ້ນຕໍ່າສຸດສໍາລັບ CCM** ໃນ **ເງື່ອນໄຂທີ 3** ດັ່ງຕໍ່ໄປນີ້:

i. ຄະນະກໍາມະການຕິດຕາມກວດກາ ປະຕິບັດກິດຈະກໍາຕິດຕາມກວດກາ ເພື່ອປຶກສາຫາລືກັບ PR ກ່ຽວກັບສິ່ງທ້າທາຍ, ບັນຫາຕ່າງໆ, ດັດແກ້ແຜນງານແລະຈັດສັນງົບປະມານຄືນໃໝ່, ຖ້າມີຄວາມຈໍາເປັນ.

ii. CCM ຕ້ອງຕັດສິນໃຈແລະວາງມາດຕະການເພື່ອແກ້ໄຂບັນຫາແລະສິ່ງທ້າທາຍທີ່ພົບເຫັນ.

iii. CCM ຕ້ອງສົ່ງລາຍງານຜົນຂອງການຕິດຕາມກວດກາໃຫ້ກອງເລຂາຂອງກອງທຶນໂລກ ແລະ ພາກສ່ວນທີ່ກ່ຽວຂ້ອງພາຍໃນປະເທດ ປະຈໍາໄຕຣມາດໂດຍຜ່ານຂັ້ນຕອນທີ່ໄດ້ກໍານົດໃນແຜນຕິດຕາມກວດກາຂອງຕົນ.

32. ດັ່ງທີ່ໄດ້ສັງລວມຢູ່ໃນວັກທີ 15, CCMs ຕ້ອງສົມທົບກັບພາກສ່ວນທີ່ສໍາຄັນຕ່າງໆ ເຊິ່ງລວມມີ PRs, SRs, ກອງເລຂາຂອງກອງທຶນໂລກ ແລະ LFAs. ການພົວພັນກັບພາກສ່ວນເຫຼົ່ານີ້ຈະຊ່ວຍຮັບປະກັນວ່າ CCMs ຈະສາມາດໄດ້ຮັບຂໍ້ມູນຕ່າງໆທີ່ຕົນຕ້ອງການເພື່ອຕິດຕາມກວດກາ. ດັ່ງລາຍລະອຽດໃນວັກທີ 16, PRs ແມ່ນມີພັນທະທາງກົດໝາຍໃນການຮ່ວມມືກັບ CCM, ແລະ ແລກປ່ຽນຂໍ້ມູນໃນແຕ່ລະໄລຍະ ແລະ ເມື່ອຕ້ອງການ.

33. ນອກຈາກລາຍງານຈາກ PRs, ກອງເລຂາຂອງກອງທຶນໂລກຍັງໄດ້ຮັບລາຍງານຈາກ LFA ດ້ານການເງິນ ແລະການປະຕິບັດແຜນງານ ເຊິ່ງໄດ້ສົ່ງຄືນໃຫ້ CCMs ເປັນລະບົບໂດຍຜ່ານທາງຈົດໝາຍກ່ຽວກັບການບໍລິຫານຄຸ້ມຄອງທຶນຊ່ວຍເຫຼືອ. ກອງທຶນໂລກ**ແນະນໍາ**ໃຫ້ CCMs ຊອກຫາຂໍ້ມູນເພີ່ມເຕີມຈາກ LFAs ໂດຍ:

i. ແຕ່ງຕັ້ງສະມາຊິກ CCM ໄປຮ່ວມປະຊຸມ ກັບ LFA ແລະ PR ກ່ຽວກັບຜົນໄດ້ຮັບຈາກວຽກງານຂອງເຂົາເຈົ້າ.

ii. ເຊີນ LFAs ມາຮ່ວມກອງປະຊຸມຂອງ CCM (ໂດຍການປະສານກັບກອງເລຂາຂອງກອງທຶນໂລກ).

34. ການພົວພັນທີ່ດີລະຫວ່າງ CCM ກັບ LFAs ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ໄດ້ມີລາຍລະອຽດໃນ ບົດລາຍງານທີ່ມີຫົວຂໍ້ກ່ຽວກັບການສື່ສານລະຫວ່າງ PR-LFA (PR-LFA Communication Themed Report) ແລະ ພິທີການສື່ສານ ຂອງ LFA (LFA Communication Protocol).

35. ກອງທຶນໂລກໄດ້ກໍານົດມາດຕະຖານສໍາລັບ CCM ໃນການຕິດຕາມກວດກາດັ່ງຕໍ່ໄປນີ້:

i. CCM ຄວນຮັບປະກັນວ່າກິດຈະກໍາໃນແຜນງານ ລວມເຂົ້າໃນການຈໍາກັດການລັງກຽດແລະຈໍາແນກຕໍ່ຜູ້ທີ່ກໍາລັງຕິດເຊື້ອ ແລະ ໄດ້ຮັບຜົນກະທົບຈາກພະຍາດ, ໂດຍສະເພາະໃນປະຊາກອນທີ່ດ້ອຍໂອກາດ ຫຼື ຜິດກົດມາຍ.

ii. ແຕ່ລະ CCM ຄວນມີຍຸດທະສາດໃນການສື່ສານໂດຍມີການຕົກລົງກັບ PRs, ເຊິ່ງມີລາຍລະອຽດຂອງກິດຈະກໍາສື່ສານ ຕະຫຼອດຮອບວຽນຂອງທຶນຊ່ວຍເຫຼືອ, ແລະ ລວມທັງຕາຕະລາງລາຍງານ ການປະຕິບັດວຽກງານຂອງ PR ແລະ SR ດ້ານການເງິນແລະແຜນງານ ໃຫ້ CCM.

36. ອີງຕາມປະສົບການທີ່ໄດ້ສະສົມຜ່ານມາກ່ຽວກັບຕົວຢ່າງທີ່ດີຂອງການຕິດຕາມກວດກາ, ກອງທຶນໂລກແນະນໍາໃຫ້ CCMs ປະຕິບັດເປັນປົກກະຕິ ດັ່ງຕໍ່ໄປນີ້:

i. ທົບທວນ ບົດລາຍງານການປະຕິບັດວຽກງານແລະການສະເໜີຂໍເງິນຮອບຕໍ່ໄປ (PUDR) ຂອງ PRs ທີ່ກໍາລັງສົ່ງໃຫ້ກອງທຶນໂລກ.

ii. ລົງຢ້ຽມຢາມສະຖານທີ່ໃຫ້ບໍລິການເປັນໄລຍະ ເພື່ອເກັບກໍາຂໍ້ມູນໂດຍກົງ ກ່ຽວກັບກິດຈະກໍາແລະຄຸນນະພາບຂອງແຜນງານ.

37. ບົດບາດໃນການຕິດຕາມກວດກາຂອງ CCMs ແມ່ນມີຄວາມສໍາຄັນໂດຍສະເພາະເພື່ອຫຼຸດຜ່ອນອຸບປະສັກໃນການປະຕິບັດວຽກງານ. ຍ້ອນແນວນີ້, ກອງທຶນໂລກຈຶ່ງ**ແນະນໍາ**ໃຫ້ CCMs ດັ່ງຕໍ່ໄປນີ້:

i. ຄາດການ ແລະ ກໍານົດສິ່ງທ້າທາຍໃນການປະຕິບັດວຽກງານໄວ້ລ່ວງໜ້າ, ແລະ ປະຊຸມກັບ PR ແລະ SR ເປັນປະຈໍາ ເພື່ອສົນທະນາກ່ຽວກັບສິ່ງທ້າທາຍ ກ່ອນທີ່ມັນຈະມີຜົນກະທົບໃສ່ການຈັດຕັ້ງປະຕິບັດວຽກງານ.

ii. ເອົາໃຈໃສ່ເປັນພິເສດຕໍ່ສິ່ງທ້າທາຍ ເຊິ່ງສາມາດກະທົບຕໍ່ການຈັດຫາແລະຕອບສະໜອງຢາແລະອຸບປະກອນຕ່າງໆ.

iii. ປະສານງານໃນການຈັດຫາການຊ່ວຍເຫຼືອດ້ານວິຊາການໃຫ້ ແກ່ PR ແລະ/ຫຼື SRs ຕາມຄວາມຈ□າເປັນ.

iv. ອໍານວຍຄວາມສະດວກແກ່ການມີສ່ວນຮ່ວມຂອງພາກສ່ວນລັດຖະບານແລະຄູ່ຮ່ວມງານອື່ນ ໃນການແກ້ໄຂສິ່ງທ້າທາຍ ເມື່ອມີຄວາມຈໍາເປັນ.

v. ພິຈາລະນາການສະເໜີຂໍດັດແກ້ແຜນງານຂອງທຶນຊ່ວຍເຫຼືອ ຫຼື ແມ້ກະທັ້ງ ຂໍປ່ຽນ PR ໃນກໍລະນີທີ່ມີຄວາມຫຍຸ້ງຍາກທີ່ສຸດ, ດັ່ງທີ່ໄດ້ອະທິບາຍໃນວັກທີ 41 ຂ້າງລຸ່ມ.

38. ໃນການລົງຕິດຕາມກວດກາ, ສິ່ງສຳຄັນ CCMs ຕ້ອງຫຼີກລ້ຽງການກວດກາລະອຽດແບບມື້ຕໍ່ມື້ໃນການຈັດຕັ້ງປະຕິບັດແຜນງານ. ກອງທຶນໂລກ**ແນະນຳ**ໃຫ້ CCMs ເລືອກເຟັ້ນຂໍ້ມູນໃນການຕິດຕາມ PRs ເພື່ອຮັບປະກັນຜົນໄດ້ຮັບຂອງໂຄງການ. ເຄື່ອງມືໃນການຕິດຕາມກວດກາຂອງ CCM ຊ່ວຍໃຫ້ CCMs ສາມາດເນັ້ນໃຫ້ເຫັນຂໍ້ມູນຍຸດທະສາດເພື່ອກວດກາວ່າ:

i. ກິດຈະກຳຂອງແຜນງານຈະໄດ້ຮັບການຈັດຕັ້ງປະຕິບັດຕາມກຳນົດເວລາ ແລະ ເປົ້າໝາຍທີ່ໄດ້ກຳນົດໄວ້ນັ້ນຈະບັນລຸ.
ii. ການກະກຽມດ້ານຜະລິດຕະພັນການຢາແລະວັດຖຸອຸປະກອນ ຈະໄດ້ຮັບການຈັດຊື້ແລະນຳສົ່ງຕາມກຳນົດເວລາ, ແລະ ຈະບໍ່ມີຄວາມສ່ຽງຕໍ່ການຂາດສາງ.
iii. ເງື່ອນໄຂໃນການໃຫ້ທຶນຊ່ວຍເຫຼືອຂອງກອງທຶນໂລກ ຈະໄດ້ຮັບຄວາມພໍໃຈຕາມກຳນົດ ເພື່ອຫຼີກລ້ຽງບັນຫາຫຼ້າຊ້າໃນການບໍລິຫານດ້ານການເງິນ ຫຼື ຄວາມສ່ຽງຕໍ່ການຢຸດໂຄງການ.

39. ບົດແນະນຳໃນການຕິດຕາມກວດກາຂອງ CCM ໄດ້ກຳນົດລາຍລະອຽດເພີ່ມເຕີມໜ້າທີ່ສຳຄັນນີ້, ແລະ ບົດລາຍງານກ່ຽວກັບການປະຕິບັດການຕິດຕາມກວກກາ ໄດ້ອະທິບາຍກ່ຽວກັບປະສົບການແລະຕົວຢ່າງທີ່ດີໃນພາກປະຕິບັດພາຍໃນປະເທດ.

40. ກ່ຽວຂ້ອງກັບການຕິດຕາມກວດກາ ຍັງມີຫຼາຍເຫດການທີ່ພົວພັນກັບທຶນຊ່ວຍເຫຼືອ. ກອງທຶນໂລກຈະໃຫ້ CCM ເຂົ້າຮ່ວມໃນກິດຈະກຳເຫຼົ່ານີ້ ແລະ ແນະນຳໃຫ້ CCM ອ□ານວຍຄວາມສະດວກໃຫ້ແກ່ກິດຈະກຳເຫຼົ່ານີ້ ເພື່ອຫຼີກເວັ້ນການຊັກຊ້າໃນການໃຫ້ທຶນ. ກິດຈະກຳລວມມີ ແຕ່ບໍ່ຈຳກັດພຽງເທົ່ານີ້:

i. **ກະກຽມການຕົກລົງໃຫ້ທຶນຊ່ວຍເຫຼືອແລະເຊັນສັນຍາ:** ເມື່ອບົດສະເໜີຂໍທຶນໄດ້ຮັບອະນຸມັດແລ້ວ , ກອງທຶນໂລກຈະເຈລະຈາຂໍ້ຕົກລົງໃນການໃຫ້ທຶນຊ່ວຍເຫຼືອເພື່ອເຊັນກັບແຕ່ລະ PR. ຂໍ້ຕົກລົງໃຫ້ການຊ່ວຍເຫຼືອທຶນແມ່ນເປັນພື້ນຖານໃຫ້ແກ່ການຊຳລະທຶນ. ການຕິດຕາມກວດກາຂອງ CCM ໃນການກະກຽມການຕົກລົງໃຫ້ທຶນຊ່ວຍເຫຼືອແລະເຊັນສັນຍາ ຈະຮັບປະກັນວ່າຜົນໄດ້ຮັບຂອງໂຄງການຈະຍັງສອດຄ່ອງກັບບົດສະເໜີຂໍທຶນເດີມ. ກອງທຶນໂລກຈະບໍ່ເຊັນຂໍ້ຕົກລົງໃຫ້ທຶນຊ່ວຍເຫຼືອ ໂດຍປາດສະຈາກການຮັບຮອງຈາກປະທານ ຫຼື ຮອງປະທານ ຂອງ CCM, ແລະ ສະມາຊິກ CCM ທີ່ມາຈາກການຈັດຕັ້ງທາງສັງຄົມ.
ii. **ການກວດສອບ PR ແບບປົກກະຕິ:** ໃນແຕ່ລະປີ PR ຈະຕ້ອງໄດ້ດຳເນີນການກວດສອບແບບອິດສະລະ. CCM ຄວນອຳນວຍຄວາມສະດວກໃຫ້ແກ່ຂະບວນການກວດສອບນີ້, ຖ້າເຫັນວ່າເໝາະສົມ, ແລະຄວນທົບທວນເບິ່ງຜົນຂອງການກວດສອບ ເພື່ອກຳນົດຄວາມສ່ຽງທີ່ອາດມີໃນການປະຕິບັດໂຄງການ.
iii. **ການກວດສອບໃນປະເທດທີ່ໄດ້ຮັບທຶນຊ່ວຍເຫຼືອຈາກກອງທຶນໂລກ:** ໂດຍວິທີການສຸ່ມຕົວຢ່າງ, ຫຼື ຖ້າເຫັນວ່າບໍ່ໄດ້ເຮັດການກວດສອບເປັນປົກກະຕິ, ຫ້ອງການກວດສອບຂອງກອງທຶນໂລກ ອາດເຮັດການກວດສອບແບບຄົບຊຸດໃນກຸ່ມຍ່ອຍຂອງປະເທດທີ່ໄດ້ຮັບທຶນ. ເຊັ່ນດຽວກັນກັບການກວດສອບແບບປົກກະຕິ, CCM ຄວນຊ່ວຍເຫຼືອຂະບວນການກວດສອບ ແລະ ທົບທວນເບິ່ງຜົນຂອງການກວດສອບນີ້.

41. CCM ຕ້ອງຮູ້ວ່າ ທຸກເງື່ອນໄຂທີ່ຕ້ອງການຂອງ CCM - ລວມທັງເງື່ອນໄຂກ່ຽວກັບການພັດທະນາບົດສະເໜີຂໍທຶນແລະການສະເໜີເອົາ PRs - ຕ້ອງປະຕິບັດໃຫ້ໄດ້ ຕະຫຼອດໄລຍະຮອບວຽນຂອງທຶນຊ່ວຍເຫຼືອ. ການປະຕິບັດ

ຕາມທຸກ ທີກ ເງື່ອນໄຂ ຂອງ CCM ແມ່ນຈະໄດ້ຖືກທົບທວນຄືນ ເມື່ອ CCM ໄດ້ຍື່ນບົດສະເໜີຂໍທຶນຕໍ່ ເຖິງກອງທຶນໂລກ.

## ພາກທີ 4: ການມີສ່ວນຮ່ວມຂອງຄູ່ຮ່ວມງານຈາກຫຼາຍພາກສ່ວນໃນ CCMs

### *ອົງປະກອບຂອງ CCM*

42. CCM ແມ່ນກົນໄກສໍາລັບຄູ່ຮ່ວມງານລະຫວ່າງ ລັດແລະເອກະຊົນ ໃນການບໍລິຫານແຜນງານຕ້ານພະຍາດແຫ່ງຊາດ. ຄວນມີການຊອກຫາຄູ່ຮ່ວມງານທີ່ຫ້າວຫັນ ເຂົ້າມາມີສ່ວນຮ່ວມໃນການຕ້ານຕໍ່ສາມພະຍາດ ອີງຕາມສະພາບພາຍໃນປະເທດ.

43. ກອງທຶນໂລກໄດ້ກໍານົດມາດຕະຖານສໍາລັບອົງປະກອບຂອງ CCM ດັ່ງຕໍ່ໄປນີ້:

i. CCMs ທັງໝົດ ອາດປະກອບດ້ວຍສະມາຊິກທີ່ເປັນຕົວແທນມາຈາກພາກສ່ວນຕ່າງໆເຊັ່ນ: ລັດຖະບານ, ການຈັດຕັ້ງທາງສັງຄົມ, ຂະແໜງເອກກະຊົນ, ຕະຫຼອດເຖິງພາກສ່ວນອື່ນໆ, ເຊັ່ນ: ຄູ່ຮ່ວມມືສາກົນສອງຝ່າຍ ແລະຫຼາຍຝ່າຍທີ່ກໍາລັງປະຕິບັດວຽກງານພາຍໃນປະເທດ. ເບິ່ງຕົວຢ່າງຂອງລາຍຊື່ໃນເອກະສານຊ້ອນທ້າຍ 1.

ii. CCMs ຄວນຮັບປະກັນວ່າ CCMs ຕ້ອງປະກອບດ້ວຍຊ່ຽວຊານທີ່ມາຈາກທັງຊາຍແລະຍິງ ແລະ ເຊື່ອມສານຄວາມຮູ້ເຫຼົ່ານີ້ເຂົ້າໃນການຕອບໂຕ້ຕໍ່ສາມພະຍາດຢ່າງມີປະສິດຕິພາບ. CCM ຄວນມີຕົວແທນຈາກຊາຍແລະຍິງສະເມີພາບກັນ. ຍຸດທະສາດກ່ຽວກັບຄວາມສະເໝີພາບທາງເພດ ຂອງກອງທຶນໂລກໄດ້ກໍານົດທິດທາງເພີ້ມເຕີມກ່ຽວກັບເລື້ອງນີ້.

iii. CCMs ຄວນຮັບປະກັນວ່າ ຕົວແທນຈາກປະຊາກອນຫຼັກທີ່ໄດ້ຮັບຜົນກະທົບ (ເບິ່ງ footnote 2) ໄດ້ຮັບການພິຈາລະນາ ອີງຕາມສະພາບສັງຄົມແລະການລະບາດຂອງສາມພະຍາດ ແລະ ສະພາບພາຍໃນປະເທດ. ຍຸດທະສາດກ່ຽວກັບຄວາມນິຍົມແລະເອກກະລັກທາງເພດ ຂອງກອງທຶນໂລກ ໄດ້ກໍານົດທິດທາງເພີ້ມເຕີມກ່ຽວກັບເລື້ອງນີ້ ສໍາລັບປະຊາກອນທີ່ມີຄວາມສ່ຽງສູງຕໍ່ເຊື້ອເອສໄອວີ.

iv. CCMs ຄວນຮັບປະກັນໃຫ້ມີຄວາມດຸ່ນດ່ຽງຂອງຕົວແທນແຕ່ລະພາກ ໂດຍສະເພາະຈາກ ແຂວງ/ເມືອງ ທີ່ໄດ້ຮັບຜົນກະທົບຈາກພະຍາດ ເຊິ່ງ CCM ໄດ້ສະເໜີຂໍທຶນຊ່ວຍເຫຼືອຈາກກອງທຶນໂລກ. ໃນປະເທດໃຫຍ່ອາດສາມາດພິຈາລະນາ ຈັດຕັ້ງ CCMs ໃນລະດັບພາກ.

v. CCMs ຄວນສົ່ງລາຍຊື່ຂອງສະມາຊິກ CCM ພ້ອມທັງລາຍລະອຽດເຊັ່ນ: ຊື່, ອົງການຈັດຕັ້ງ, ຂະແໜງການ ແລະ ຂໍ້ມູນເພື່ອຕິດຕໍ່ພົວພັນ ໃຫ້ກອງທຶນໂລກເປັນໄລຍະ ແລະ ອີງຕາມການສະເໜີ. ກອງທຶນໂລກ ຈະນໍາສະເໜີຂໍ້ມູນເຫຼົ່ານີ້ຕໍ່ສາທາລະນະ, ເວັ້ນແຕ່ຈະມີການຕົກລົງກັບສະມາຊິກ CCM ທີ່ກ່ຽວຂ້ອງ. ເພື່ອຮັບປະກັນວ່າ ຂໍ້ມູນລະອຽດຂອງສະມາຊິກ CCM ໄດ້ມີການປັບໃຫ້ທັນກັບສະພາບໃນແຕ່ລະໄລຍະ, CCM ຄວນແຈ້ງໃຫ້ກອງເລຂາຂອງກອງທຶນໂລກຊາບກ່ຽວກັບການປ່ຽນແປງ.

44. **ເງື່ອນໄຂທີ 4**: ກອງທຶນໂລກຕ້ອງການໃຫ້ CCM ທັງໝົດ ສະແດງຫຼັກຖານການເປັນສະມາຊິກຂອງຜູ້ທີ່ທັງຕິດເຊື້ອພະຍາດ ແລະ ເປັນຕົວແທນຂອງຜູ້ຕິດເຊື້ອເອສໄອວີ, ແລະ ຂອງຜູ້ໄດ້ຮັບຜົນກະທົບຈາກ *

| |
|---|
| ແລະເປັນຕົວແທນຜູ້ທີ່ໄດ້ຮັບຜົນກະທົບຈາກວັນນະໂຣກ ** ແລະ ໄຂ້ຍຸງ *** ຕະຫຼອດເຖິງຜູ້ທີ່ມາຈາກ ແລະ ເປັນຕົວແທນປະຊາກອນທີ່ໄດ້ຮັບຜົນກະທົບ ****, ໂດຍອີງໃສ່ສະພາບການລະບາດ ກໍຄື ພິຈາລະນາດ້ານສິດທິມະນຸດ ແລະ ບົດບາດຍິງ-ຊາຍ.<br><br>* ຜູ້ທີ່ເປັນພະຍາດໃນໄລຍະຜ່ານມາ ຫຼື ຜູ້ທີ່ມາຈາກຊຸມຊົນທີ່ມີພະຍາດເຫຼົ່ານີ້ລະບາດ.<br>** ໃນປະເທດທີ່ມີພະຍາດວັນນະໂຣກເປັນບັນຫາຂອງສະທາລະນະສຸກ ຫຼື ທີ່ໄດ້ຍື່ນຂໍທຶນ ຫຼື ທີ່ໄດ້ຮັບອະນຸມັດທຶນສຳລັບວັນນະໂຣກໃນໄລຍະຜ່ານມາ.<br>*** ໃນປະເທດທີ່ມີຫຼັກຖານວ່າຍັງມີການແຜ່ເຊື້ອໄຂ້ຍຸງ ຫຼື ທີ່ໄດ້ຍື່ນຂໍທຶນ ຫຼື ທີ່ໄດ້ຮັບອະນຸມັດທຶນສຳລັບໄຂ້ຍຸງໃນໄລຍະຜ່ານມາ.<br>**** ກອງເລຂາອາດຍົກເວັ້ນການເປັນຕົວແທນຂອງຜູ້ທີ່ໄດ້ຮັບຜົນກະທົບ ຖ້າເຫັນວ່າມີຄວາມເໝາະສົມເພື່ອປົກປ້ອງນິຕິບຸກຄົນ. |

45. ກອງທຶນໂລກໄດ້ກຳນົດ **ອົງປະກອບໃນການຈັດຕັ້ງປະຕິບັດເງື່ອນໄຂທີ 4** ດັ່ງນີ້:

i. CCMs ຄວນຮັບປະກັນໃຫ້ມີ ຕົວແທນຂອງປະຊາກອນຫຼັກທີ່ໄດ້ຮັບຜົນກະທົບຢ່າງພຽງພໍ ເຊິ່ງໄດ້ຮັບການພິຈາລະນາ ອີງຕາມສະພາບສັງຄົມແລະການລະບາດຂອງສາມພະຍາດ.

ii. CCMs ຄວນຮັບປະກັນໃຫ້ມີ ຕົວແທນຂອງຜູ້ທີ່ກຳລັງຕິດເຊື້ອພະຍາດຢ່າງພຽງພໍ ຊຶ່ງໄດ້ຮັບການພິຈາລະນາ ອີງຕາມສະພາບສັງຄົມແລະການລະບາດຂອງສາມພະຍາດ.

46. ກອງທຶນໂລກໄດ້ກຳນົດ **ມາດຕະຖານຂັ້ນຕ່ຳສຸດໃນການຈັດຕັ້ງປະຕິບັດເງື່ອນໄຂທີ 4** ດັ່ງນີ້:

iii. CCMs ມີຕົວແທນຂອງເພດຊາຍແລະເພດຍິງດຸ່ນດ່ຽງກັນ (ຍຸດທະສາດກ່ຽວກັບຄວາມສະເໝີພາບທາງເພດ ຂອງກອງທຶນໂລກໄດ້ອະທິບາຍວ່າ ແມ່ຍິງແລະຍິງໜຸ່ມແມ່ນເປັນກຸ່ມທີ່ໄດ້ຮັບຜົນກະທົບຫຼັກແນວໃດ ໃນສະພາບເງື່ອນໄຂຂອງ 3 ພະຍາດ).

***ບົດບາດແລະຄວາມຮັບຜິດຊອບຂອງ ສະມາຊິກ CCM***

47. ສະມາຊິກ CCM ແຕ່ລະທ່ານ ແມ່ນເປັນຕົວແທນດ້ານຜົນປະໂຫຍດໃຫ້ແກ່ທຸກການຈັດຕັ້ງຂອງພາກສ່ວນທີ່ຂອງຕົນເປັນຕົວແທນ, ບໍ່ແມ່ນພຽງແຕ່ເປັນຕົວແທນໃຫ້ແກ່ຕົນເອງ ຫຼື ອົງການຈັດຕັ້ງຂອງຕົນເອງເທົ່ານັ້ນ. ກອງທຶນໂລກໄດ້ພິມບົດແນະນຳກ່ຽວກັບຂະບວນການເລືອກຕັ້ງ ໃຫ້ແກ່ຄະນະບໍລິຫານຂອງຕົນ ເພື່ອຈັດຕັ້ງປະຕິບັດຄ້າຍກັບ CCMs. ຂໍ້ແນະນ□າເຫຼົ່ານີ້ ແມ່ນເປັນປະໂຫຍດຕໍ່ຂະບວນການເລືອກ ເຊິ່ງສາມາດນຳໃຊ້ໂດຍສະມາຊິກ CCM.

48. ກອງທຶນໂລກໄດ້ກຳນົດມາດຕະຖານ ໂດຍຄຳນຶງເຖິງບົດບາດຂອງສະມາຊິກ CCM ດັ່ງນີ້:

i. ສະມະຊິກ CCM ຄວນແລກປ່ຽນຂໍ້ມູນຂ່າວສານກັບພາກສ່ວນການຈັດຕັ້ງຂອງຕົນ ຢ່າງເປີດເຜີຍແລະທັນເວລາ, ແລະຄວນຕອບສະໜອງຕໍ່ການສະເໜີຂໍຂໍ້ມູນເພີ່ມເຕີມ.
ii. ສະມາຊິກ CCM ຄວນປຶກສາກັບພາກສ່ວນການຈັດຕັ້ງຂອງຕົນຢ່າງສະໝໍ່າສະເໝີ ເພື່ອເຮັດໃຫ້ຕົນສາມາດນໍາເອົາຄວາມຄິດເຫັນ ແລະ ຄວາມເປັນຫ່ວງເຫຼົ່ານັ້ນ ມາສະເໜີຕໍ່ກອງປະຊຸມ ແລະການຕົກລົງຂອງ CCM.

49. ບົດບາດແລະໜ້າທີ່ຂອງສະມາຊິກ CCM ແຕ່ລະທ່ານ ຈະມີການຕົກລົງກັນລະຫວ່າງບັນດາຄູ່ຮ່ວມງານຕ່າງໆພາຍໃນປະເທດ. ຍຸດທະສາດດ້ານການຮ່ວມມືຂອງກອງທຶນໂລກ ໄດ້ກໍານົດຂໍ້ແນະນໍາກ່ຽວກັບ ບົດບາດການຮ່ວມມືສະເພາະໃນລະດັບປະເທດ ເຊິ່ງຕົກລົງໂດຍຄູ່ຮ່ວມງານທີ່ເປັນຕົວແທນໃນຄະນະກໍາມະການບໍລິຫານກອງທຶນໂລກ. ພ້ອມດຽວກັນນັ້ນ, ກອງທຶນໂລກຍັງໄດ້ໃຫ້ຄໍາແນະນໍາສໍາລັບບົດບາດສະເພາະຂອງສະມາຊິກດັ່ງນີ້:

i. ສະມະຊິກຈາກລັດຖະບານຄວນຈະໄດ້ຮັບຄໍາສັ່ງຈາກ, ສະແດງຄວາມເຫັນຂອງ, ແລະ ລາຍງານຄືນຕໍ່ຂັ້ນນໍາຂອງຕົນ. ສະມະຊິກຈາກລັດຖະບານມີບົດບາດສໍາຄັນໃນການປະສານກິດຈະກໍາຂອງ CCM ແລະ ຕົກລົງກັບໂຄງການແຫ່ງຊາດອື່ນໆ, ເຮັດໜ້າທີ່ເປັນຜູ້ປະສານງານ ລະຫວ່າງ CCM ກັບ ອົງການຈັດຕັ້ງລັດຖະບານ , ແລະ ຮັບປະກັນຄວາມຍືນຍົງຂອງໂຄງການ.
ii. ຂະແໜງການເອກະຊົນສາມາດແລກປ່ຽນຄວາມຊໍານິຊໍານານແລະຊັບພະຍາກອນກັບ CCMs, ແລະສາມາດເຮັດໜ້າທີ່ໂຄສະນາເຜີຍແຜ່ໂຄງການຕ້ານພະຍາດຢ່າງມີປະສິດທິພາບ, ໂດຍສະເພາະ ບັນຫາທີ່ພົວພັນກັບການພັດທະນາເສດຖະກິດ. ຕົວຢ່າງ, ຕົວແທນຈາກຂະແໜງການຮັກສາສຸກຂະພາບເອກະຊົນສາມາດໃຫ້ຂໍ້ມູນລົງເລິກໃນການອອກແບບໂຄງການ ເຊິ່ງສາມາດຍົກລະດັບການບໍລິການຮັກສາສຸກຂະພາບເອກະຊົນທີ່ດີຂຶ້ນ ເພື່ອສົມທົບເຂົ້າໃນລະບົບສາທາລະນະສຸກຂອງລັດ. ເຂົາເຈົ້າຍັງສາມາດແນະນໍາບັນດາທ່ານໝໍແລະຫ້ອງກວດພະຍາດ ເພື່ອມີສ່ວນຮ່ວມໃນການປະຕິບັດໂຄງການຊ່ວຍເຫຼືອອີກດ້ວຍ.
iii. ຂໍ້ແນະນໍາເພີ່ມເຕີມກ່ຽວກັບບົດບາດຂອງຂະແໜງການເອກກະຊົນ ໃນ CCMs ສາມາດເຂົ້າເບິ່ງໄດ້ໃນເວັບໄຊຂອງກອງທຶນໂລກ.
iv. ຄູ່ຮ່ວມງານຈາກການຈັດຕັ້ງທາງສັງຄົມ ເຊິ່ງລວມມີ ອົງການທີ່ບໍ່ສັງກັດລັດຖະບານ, ຜູ້ທີ່ກໍາລັງຕິດເຊື້ອ ຫຼື ໄດ້ຮັບຜົນກະທົບຈາກ ສາມພະຍາດ ແລະ ປະຊາກອນທີ່ໄດ້ຮັບຜົນກະທົບຫຼັກ ຄວນຮັກສາການພົວພັນອັນແໜ້ນແກ່ນກັບຊຸມຊົນຂອງຕົນ, ເພື່ອໃຫ້ຂໍ້ສະເໜີແນະ ກ່ຽວກັບຄຸນນະພາບແລະຜົນໄດ້ຮັບຂອງໂຄງການ. ນັກເຄື່ອນໄຫວອິດສະລະທາງສັງຄົມ ທີ່ບໍ່ໄດ້ມີສ່ວນຮ່ວມໂດຍກົງໃນການປະຕິບັດໂຄງການ ກໍສາມາດມີບົດບາດເປັນຜູ້ສັງເກດການທີ່ມີຄຸນຄ່າ, ແລະສາມາດໂຄສະນາຂັບຂວາຍເພື່ອຜົນປະໂຫຍດຂອງຊຸມຊົນໄດ້. ຂໍ້ແນະນໍາເພີ່ມເຕີມກ່ຽວກັບບົດບາດຂອງການຈັດຕັ້ງທາງສັງຄົມ ແມ່ນມີຢູ່ໃນ ຫົວຂໍ້ ເຮັດໃຫ້ CCM ດໍາເນີນວຽກງານໄດ້ດີ ໂດຍການມີສ່ວນຮ່ວມຮອບດ້ານຂອງການຈັດຕັ້ງທາງສັງຄົມ ແລະ ບົດແນະນໍາ ສໍາລັບການປັບປຸງ CCM ໂດຍການມີສ່ວນຮ່ວມຢ່າງແຂງແຮງຂອງຜູ້ຕິດເຊື້ອເອສໄອວີ.
v. ຄູ່ຮ່ວມມືສອງຝ່າຍແລະຫຼາຍຝ່າຍ, ລວມທັງສະຫະປະຊາຊາດ, ແມ່ນມີຄວາມສໍາຄັນ ໃນຖານະເປັນຜູ້ໃຫ້ການຊ່ວຍເຫຼືອດ້ານວິຊາການແລະການບໍລິຫານຄຸ້ມຄອງ ແກ່ CCM. ບົດບາດຂອງເຂົາເຈົ້າຄວນຈະເປັນການຮ່ວມມືທີ່ນໍາພາໂດຍປະເທດ (country-partnership driven), ແລະ ເຂົາເຈົ້າຢູ່ໃນຖານະທີ່ດີໃນການອໍານວຍຄວາມສະດວກໃນການປະສານກິດຈະກໍາຂອງ CCM ກັບ ບັນດາໂຄງການຊ່ວຍເຫຼືອຈາກສາກົນອື່ນໆ ພາຍໃນປະເທດ.

***ການຄັດເລືອກສະມາຊິກ CCM***

50. **ເງື່ອນໄຂທີ 5:** ກອງທຶນໂລກຕ້ອງການໃຫ້ ສະມາຊິກ CCM ທັງໝົດ ທີ່ເປັນຕົວແທນຈາກພາກສ່ວນທີ່ບໍ່ສັງກັດລັດຕ້ອງໄດ້ຖືກເລືອກໂດຍພາກສ່ວນດັ່ງກ່າວເອງ ຊຶ່ງອີງຕາມການບັນທຶກ, ຂັ້ນຕອນທີ່ໂປ່ງໃສ, ພັດທະນາພາຍໃນແຕ່ລະພາກສ່ວນ. ເງື່ອນໄຂນີ້ ແມ່ນນຳໃຊ້ຕໍ່ ສະມາຊິກທຸກຄົນທີ່ບໍ່ສັງກັດລັດ ລວມທັງສະມາຊິກທີ່ໄດ້ລະບຸໃນເງື່ອນໄຂທີ 4, ຍົກເວັ້ນພາກສ່ວນຂອງອົງການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ.

51. ກອງທຶນໂລກໄດ້ກຳນົດ **ອົງປະກອບໃນການຈັດຕັ້ງປະຕິບັດເງື່ອນໄຂທີ 5** ດັ່ງນີ້:

i. ທຸກພາກສ່ວນທີ່ບໍ່ສັງກັດລັດທີ່ເປັນຕົວແທນໃນ CCM ໄດ້ເລືອກຕົວແທນຂອງຕົນເອງ ໂດຍຜ່ານຂັ້ນຕອນທີ່ໂປ່ງໃສແລະມີບົດບັນທຶກ.
ii. ໃນຈຳນວນສະມະຊິກ CCM ທັງໝົດ ປະກອບດ້ວຍຢ່າງນ້ອຍ 40% ຂອງຕົວແທນທີ່ມາຈາກການຈັດຕັ້ງທາງສັງຄົມພາຍໃນປະເທດ.

52. ກອງທຶນໂລກໄດ້ກຳນົດ **ມາດຕະຖານຂັ້ນຕ່ຳສຸດໃນການຈັດຕັ້ງປະຕິບັດເງື່ອນໄຂທີ 5** ດັ່ງນີ້:

i. CCM ໄດ້ກຳນົດຂັ້ນຕອນທີ່ຊັດເຈນໃນການນຳເອົາຄຳຄິດເຫັນຈາກ ແລະ ກັບຄືນໄປໃຫ້ພາກສ່ວນຂອງຕົນທີ່ໄດ້ເລືອກຕົນໃຫ້ມາເປັນຕົວແທນໃນ CCM.
ii. CCM ເລືອກປະທານແລະຮອງປະທານ ຈາກຂະແໜງການທີ່ແຕກຕ່າງກັນ (ລັດຖະບານ, ການຈັດຕັ້ງທາງສັງຄົມພາຍໃນປະເທດ ແລະ ຄູ່ຮ່ວມພັດທະນາ) ແລະ ຍັງປະຕິບັດຕາມຫຼັກການບໍລິຫານທີ່ດີ ໃນການປ່ຽນແປງແລະ ໝູນວຽນ ຂອງການນຳພາ ໂດຍອີງໃສ່ ລະບຽບກົດໝາຍຂອງ CCM.

53. ພ້ອມດຽວກັນນັ້ນ, ກອງທຶນໂລກໄດ້ກຳນົດ**ມາດຕະຖານຂອງ CCM** ໃນການຄັດເລືອກ ສະມາຊິກ CCM.

i. ໃນການຄັດເລືອກ ສະມາຊິກ CCM ໂດຍພາກສ່ວນຂອງຕົນນັ້ນ ຄວນອີງໃສ່ເງື່ອນໄຂທີ່ຊັດເຈນ, ແລະຄວນພິຈາລະນາຕາມປະສົບການໃນການເຮັດວຽກກັບ ພະຍາດເອດສ໌, ວັນນະໂຣກ ຫຼື ໄຂ້ຍຸງ ແລະ ຄວາມສາມາດຂອງສະມາຊິກ ໃນການພົວພັນກັບ ພາກສ່ວນຂອງຕົນ. ເອກະສານໃນຂະບວນການຄັດເລືອກສະມາຊິກ CCM ຄວນເປີດເຜີຍຕໍ່ສາທາລະນະ.
ii. CCM ຄວນເຜີຍແຜ່ລາຍລະອຽດຂອງສະມາຊິກ, ແລະ ພາກສ່ວນຕ່າງໆ ຄວນພັດທະນາພາລະບົດບາດສຳລັບສະມາຊິກຂອງຕົນ, ແລະທົບທວນເບິ່ງການປະຕິບັດວຽກງານຂອງສະມາຊິກ ເພື່ອຮັບປະກັນຄວາມເຊື່ອໝັ້ນຕໍ່ພາກສ່ວນຂອງຕົນ. ຕົວຢ່າງຂອງພາລະບົດບາດສາມາດເຂົ້າເຖິງ ທີ່ນີ້.
iii. CCM ຄວນອະນຸບາດໃຫ້ພາກສ່ວນຕ່າງໆ ສັບປ່ຽນສະມາຊິກທີ່ປະຕິບັດວຽກງານບໍ່ໄດ້ດີ (ເຊັ່ນ: ສະມາຊິກທີ່ບໍ່ໄດ້ເຂົ້າຮ່ວມ ແລະ ບໍ່ໄດ້ແລກປ່ຽນຂໍ້ມູນຂ່າວສານ).
iv. ສະມາຊິກຄວນໄດ້ຮັບການອົບຮົບເປັນໄລຍະ ແລະ ໄດ້ຮັບການອົບຮົມໃນເວລາເລີ່ມປະຕິບັດວຽກງານ ເພື່ອກຳໄດ້ນະໂຍບາຍຂອງກອງທຶນໂລກ ແລະ ສະພາບຂອງແຜນງານເອສໄອວີ, ວັນນະໂຣກ ແລະ ໄຂ້ຍຸງ ພາຍໃນປະເທດຂອງຕົນ.

54. ກອງທຶນໂລກຍັງໄດ້**ແນະນຳ**ການປະຕິບັດທີ່ກ່ຽວກັບການເປັນສະມາຊິກ CCM.

i. ໄລຍະເວລາທີ່ເປັນສະມາຊິກຄວນຈຳກັດ ໃນ 2 ຫຼື 3 ປີ, ພ້ອມທັງມີກົດລະບຽບສຳລັບຕໍ່ອາຍຸ, ເພື່ອເຮັດໃຫ້ການເຂົ້າເຖິງການເປັນຕົວແທນເພີ່ມຂຶ້ນ.
ii. ສະມາຊິກ CCM ຄວນປະຕິບັດຕາມກຳນົດເວລາສັບປ່ຽນການເປັນສະມາຊິກ (ຕົວຢ່າງ, 1 ສ່ວນ 3 ຂອງສະມາຊິກ ຕ້ອງໄດ້ຖືກສັບປ່ຽນໃນແຕ່ລະປີ) ເພື່ອຮັກສາຄວາມຊົງຈຳຂອງສະຖາບັນ CCM.
iii. ແຕ່ລະພາກສ່ວນຄວນເລືອກສະມາຊິກສຳຮອງສຳລັບແຕ່ລະທີ່ນັ່ງ ເພື່ອເພີ່ມຄວາມໂປ່ງໃສ ແລະ ເພື່ອເຮັດໃຫ້ຄົບອົງປະກອບຂອງກອງປະຊຸມ.

55. ເອກກະສານເພີ້ມເຕີມກ່ຽວກັບຂະບວນການຄັດເລືອກສະມາຊິກ ສາມາດເບິ່ງໄດ້ ໃນປຶດລາຍງານກ່ຽວກັບການບໍລິຫານຂອງກອງທຶນໂລກ ແລະ ການມີສ່ວນຮ່ວມຂອງການຈັດຕັ້ງທາງສັງຄົມ, ແລະ Aidspan Guide to Building and Running an Effective CCM.

## ພາກທີ 5: ໂຄງຮ່າງຂອງ CCM

### *ກອງເລຂາ CCM*

56. ກອງເລຂາ CCM ມີໜ້າທີ່ເຮັດວຽກບໍລິຫານແລະ ສະໜັບສະໜູນການປະຕິບັດຂໍ້ຕົກລົງຂອງ CCM. ພາລະກິດຂອງ CCM ແມ່ນກ່ຽວຂ້ອງກັບການປະສານງານຢ່າງກວ້າງຂວາງດ້ານຂໍ້ມູນຂ່າວສານແລະການຈັດປະຊຸມ. ດັ່ງນັ້ນ, ກອງທຶນໂລກໄດ້ກຳນົດ**ມາດຕະຖານຂອງ CCM** ທີ່ພົວພັນກັບກອງເລຂາ CCM ດັ່ງນີ້:

i. ທຸກໆ CCM ຄວນຈັດຕັ້ງກອງເລຂາ CCM ເພື່ອ ເຮັດໜ້າທີ່ບໍລິຫານໃຫ້ CCM.
ii. CCM ຄວນມີຊັບພະຍາກອນມະນຸດແລະງົບປະມານພຽງພໍ, ໂດຍນຳໃຊ້ປະໂຫຽດຈາກນະໂຍບາຍດ້ານທຶນຊ່ວຍເຫຼືອ CCM ຂອງກອງທຶນໂລກ ເພື່ອຊ່ວຍສະໜັບສະໜູນການໃຊ້ຈ່າຍເຂົ້າໃນວຽກງານຂອງຕົນ.
iii. ກອງເລຂາ CCM, ໃນແນວຄວາມຄິດ, ຄວນເປັນເອກະລາດຈາກຫ້ອງການ PR ແລະ SR ເພື່ອຈຳກັດຂໍ້ຂັດແຍ່ງດ້ານຜົນປະໂຫຍດ (ເບິ່ງພາກທີ 6), ແລະ ພະນັກງານຂອງກອງເລຂາຄວນຈະຮັບຜິດຊອບຕໍ່ CCM ໂດຍລວມ, ແລະ ບໍ່ແມ່ນເພື່ອພາກສ່ວນ ຫຼື ສະມາຊິກໃດໜຶ່ງ.
iv. ພະນັກງານກອງເລຂາ CCM ຄວນມີພາລະບົດບາດທີ່ຊັດເຈນ, ຖືກເລືອກໂດຍຜ່ານຂະບວນການທີ່ໂປ່ງໃສແລະມີການບັນທຶກ ອີງໃສ່ຄວາມສາມາດດ້ານພາລະບົດບາດ, ແລະ ໄດ້ຮັບການປະເມີນເປັນປົກກະຕິ ໂດຍມີການເຂົ້າຮ່ວມຂອງທຸກໆພາກສ່ວນ CCM.

57. ກິດຈະກຳຕໍ່ໄປນີ້ **ແມ່ນຖືວ່າ**ເປັນໜ້າທີ່ສຳຄັນຂອງກອງເລຂາ CCM:

i. ເຮັດ, ເກັບຮັກສາ ແລະ ແຈກຢາຍປຶດບັນທຶກ ທຸກໆກອງປະຊຸມ ຂອງ CCM.

ii. ຮັບປະກັນວ່າ ຂໍ້ມູນລະອຽດຂອງການເປັນສະມາຊິກ CCM ແມ່ນທັນສະພາບ ແລະ ໄດ້ເຜີຍແຜ່ຕໍ່ສາທາລະນະ,ແລະ ໄດ້ແຈ້ງໃຫ້ກອງເລຂາຂອງກອງທຶນໂລກຮູ້ເມື່ອມີການປ່ຽນແປງ.
iii. ປະສານດ້ານບໍລິຫານໃນການຈັດກອງປະຊຸມ CCM, ແລະ ການລົງຕິດຕາມກວດກາ.
iv. ຊ່ວຍ CCM ໃນການສ້າງແຜນກິດຈະກໍາແລະຕາຕະລາງເວລາກອງປະຊຸມປະຈໍາປີຂອງຕົນ.
v. ປະສານໃນການສັງລວມແລະແຈກຢາຍເອກະສານ ໃນວຽກງານທີ່ສໍາຄັນຂອງ CCM ເຊັ່ນ: ການພັດທະນາບົດສະເໜີເພື່ອຂໍທຶນ, ການສະເໜີເອົາ PR, ແລະ ຂະບວນການຄັດເລືອກສະມາຊິກ ເປັນຕົ້ນ.
vi. ອໍານວຍຄວາມສະດວກໃຫ້ແກ່ການເຂົ້າຮ່ວມຂອງສະມາຊິກ CCM ທຸກໆທ່ານ ໃນກອງປະຊຸມ CCM ແລະ ຂະບວນການໃນການຕົກລົງເຫັນດີ.

### *ໂຄງຮ່າງການຈັດຕັ້ງຂອງ CCM*

58. ກອງທຶນໂລກແນະນໍາໃຫ້ CCMs ພິຈາລະນາໂຄງຮ່າງການຈັດຕັ້ງຂອງຕົນຢ່າງຮອບຄອບ. ຫຼາຍ CCMs ເລືອກທີ່ຈະມີຄະນະກໍາມະການປະຈໍາ ຫຼື ໜ່ວຍງານວິຊາການ ທີ່ເຮັດໜ້າທີ່ບໍລິຫານ ຫຼື ວິຊາການ. ຕົວຢ່າງຂອງໂຄງຮ່າງ CCM ທີ່ແຕກຕ່າງກັນ ສາມາດເຂົ້າເບິ່ງໂດຍຜ່ານການເຊື່ອມຕໍ່ນີ້ (ເຂົ້າແວັບໄຊກອງທຶນໂລກ). ໃນການກ□ານົດໂຄງຮ່າງຂອງຕົນ, ກອງທຶນໂລກໄດ້ແນະນໍາໃຫ້ CCMs:

i. ພິຈາລະນາໂຄງຮ່າງການຈັດຕັ້ງ ເຊິ່ງຈະເຮັດໃຫ້ CCM ສາມາດປະຕິບັດຕາມຂໍ້ແນະນໍາເຫຼົ່ານີ້ ໄດ້ເປັນຢ່າງດີ.
ii. ກໍານົດແລະບັນທຶກເອກະສານກ່ຽວກັບການຈັດຕັ້ງ, ພາລະບົດບາດ ແລະຂັ້ນຕອນໃນການປະຕິບັດຂອງ CCM ທັງໝົດ ແລະ ຂອງ ແຕ່ລະ ຄະນະກໍາມະການ ຫຼື ໜ່ວຍງານວິຊາການ. ພາລະບົດບາດເຫຼົ່ານີ້ ຄວນໄດ້ຖືກຮັບຮອງໂດຍທຸກພາກສ່ວນຂອງ CCM ແລະ ເຜີຍແຜ່ສູ່ສາທາລະນະ.
iii. ຮັບປະກັນວ່າ ຄະນະກໍາມະການ ຫຼື ໜ່ວຍງານວິຊາການ ບໍ່ໄດ້ເຮັດໜ້າທີ່ແທນ CCM ທັງໝົດ.

## ພາກທີ 6: ຫຼັກການແລະການປະຕິບັດໃນການບໍລິຫານທີ່ດີ

### *ການບໍລິຫານທີ່ດີ: ການບໍລິຫານຈັດການຂໍ້ຂັດແຍ່ງດ້ານຜົນປະໂຫຍດ.*

59. ຂໍ້ຂັດແຍ່ງດ້ານຜົນປະໂຫຍດເກີດຂຶ້ນເມື່ອຜົນປະໂຫຽດບຸກຄົນ ຫຼື ອົງການຈັດຕັ້ງ ຂອງສະມາຊິກ CCM ມີອິດທິພົນ ຫຼື ອາດມີອິດທິພົນ ຕໍ່ການຕັດສິນໃຈຂອງຕົນ. ຂໍ້ຂັດແຍ່ງດ້ານຜົນປະໂຫຍດ ສາມາດທໍາລາຍຄວາມເຊື່ອຖື ຂອງ CCM ແລະ ໂຄງການທີ່ຕົນຕິດຕາມກວດກາ. ຄວາມຈິງ, ຄວາມເປັນໄປໄດ້ ຫຼື ປາກົດການ ຂອງຂໍ້ຂັດແຍ່ງດ້ານຜົນປະໂຫຍດ ສາມາດຄາດການໃນທຸກໆອົງກອນທີ່ມີການຕັດສິນໃຈ ແລະ ຄວນມີການບໍລິຫານຈັດການ ເພື່ອຮັບປະກັນວ່າ ການຕັດສິນໃຈ ແມ່ນເຮັດໄປຕາມຈຸດປະສົງແລະມີຄວາມເຊື່ອຖືໄດ້.

| |
|---|
| 60. ເງື່ອນໄຂທີ 6: ເພື່ອຮັບປະກັນໃຫ້ມີການຈັດການກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ, ກອງທຶນໂລກຕ້ອງການໃຫ້ CCM ທັງໝົດຕ້ອງ: |

| |
|---|
| i. ພັດທະນາແລະພິມນະໂຍບາຍເພື່ອຈັດການກ່ຽວກັບຜົນປະໂຫຽດຊ້ຳຊ້ອນ ເຊິ່ງມີຜົນຕໍ່ສະມາຊິກ CCM ທັງໝົດ, ກວມລວມທຸກວຽກງານຂອງ CCM. ນະໂຍບາຍຕ້ອງລະບຸວ່າ ສະມາຊິກ CCM ທຸກຄົນຕ້ອງແຈ້ງເປັນໄລຍະກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ ເຊິ່ງມີຜົນກະທົບຕໍ່ຕົນເອງ ຫຼື ສະມາຊິກ CCM ອື່ນໆ. ນະໂຍບາຍຕ້ອງລະບຸ, ແລະ CCM ຕ້ອງບັນທຶກ ວ່າ ສະມາຊິກຈະບໍ່ເຂົ້າຮ່ວມໃນການຕັດສິນໃຈ ເມື່ອເຫັນຢ່າງຊັດເຈນວ່າມີຂໍ້ຂັດແຍ່ງດ້ານຜົນປະໂຫຍດ, ລວມທັງການຕັດສິນໃຈທີ່ພົວພັນເຖິງການກວດກາ ແລະການຄັດເລືອກ ຫຼື ໃຫ້ທຶນແກ່ ຜູ້ຮັບທຶນຕົ້ນຕໍ ຫຼື ຜູ້ຮັບທຶນຍ່ອຍ.<br>ii. ນຳໃຊ້ນະໂຍບາຍກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ ຕະຫຼອດໄລຍະການນຳໃຊ້ທຶນຊ່ວຍເຫຼືອຈາກກອງທຶນໂລກ, ແລະ ຍື່ນເອກະສານທີ່ເປັນຫຼັກຖານໃນການນຳໃຊ້ນະໂຍບາຍໃຫ້ກອງທຶນໂລກເມື່ອຕ້ອງການ. |

61. ກອງທຶນໂລກໄດ້ກຳນົດ **ອົງປະກອບໃນການຈັດຕັ້ງປະຕິບັດເງື່ອນໄຂທີ 6** ດັ່ງນີ້:

i. CCM ມີນະໂຍບາຍກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ (Conflict of Interest, CoI) ພ້ອມທັງກົດລະບຽບ ແລະ ຂະບວນການ ເພື່ອຫຼີກລ່ຽງ ຫຼື ຫຼຸດຜ່ອນຂໍ້ຂັດແຍ່ງດ້ານຜົນປະໂຫຍດ, ແລະ ສະມາຊິກ CCM ເຊັນຟອມເພື່ອແຈ້ງກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ.
ii. ບົດບັນທຶກກອງປະຊຸມຂອງ CCM ສະແດງໃຫ້ເຫັນວ່າ CCMs ປະຕິບັດຕາມຂະບວນການເພື່ອປ້ອງກັນ, ບໍລິຫານຈັດການ ແລະ ຫຼຸດຜ່ອນ ຂໍ້ຂັດແຍ່ງດ້ານຜົນປະໂຫຍດ.

62. ກອງທຶນໂລກໄດ້ກຳນົດ **ມາດຕະຖານຂັ້ນຕ່ຳສຸດໃນການຈັດຕັ້ງປະຕິບັດເງື່ອນໄຂທີ 6** ດັ່ງນີ້:

i. ເພື່ອຮັບປະກັນປະສິດທິພາບໃນການຕັດສິນໃຈ, CCM ຮັບປະກັນວ່າ ຈຳນວນສະມາຊິກໃນ CCM ທີ່ມີຂໍ້ຂັດແຍ່ງດ້ານຜົນປະໂຫຍດ ບໍ່ເກີນ 1 ທ່ານ ຕໍ່ ພາກສ່ວນ (ບໍ່ລວມອະດີດສະມາຊິກ ທີ່ບໍ່ມີສິດອອກສຽງ).

63. ກອງທຶນໂລກຮັບຮູ້ວ່າຈະມີຜົນປະໂຫຍດຊ້ຳຊ້ອນໂດຍປະລິຍາຍ ເມື່ອມີ SRs ແລະ PR ເປັນສະມາຊິກ CCM ທີ່ມີອຳນາດໃນການຕັດສິນໃຈ, ໂດຍສະເພາະໃນຕຳແໜ່ງ ປະທານ ແລະ ຮອງປະທານ.

64. ກອງທຶນໂລກເຂົ້າໃຈວ່າ CCMs ຕ້ອງພິຈາລະນາບົດບາດຂອງ PRs ແລະ SRs ອີງຕາມສະພາບພາຍໃນປະເທດ ແລະ **ແນະນຳ** ໃຫ້ກຳນົດ ບົດບາດບໍ່ລົງຄະແນນສຽງ ສຳລັບສະມາຊິກເຫຼົ່ານີ້.

65. ປະສົບການແລະການປະຕິບັດທີ່ດີພາຍໃນປະເທດ ໃນການບໍລິຫານຈັດການກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດພາຍໃນ CCM ແມ່ນມີຢູ່ໃນບົດລາຍງານຂອງກອງທຶນໂລກກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ.

66. ທຸກພາກສ່ວນທີ່ກ່ຽວຂ້ອງກັບ CCM ຄວນຮັບຮູ້ວ່າ ໃນມາດຕາ 21 (c) ຂອງຂໍ້ຕົກລົງໃຫ້ທຶນຊ່ວຍເຫຼືອຂອງກອງທຶນໂລກ, PRs ມີພັນທະທາງກົດໝາຍໃນການເປີດເຜີຍຄວາມຈິງ, ປາກົດການ ຫຼື ຄວາມເປັນໄປໄດ້ ທີ່ຂໍ້ຂັດແຍ່ງດ້ານຜົນປະໂຫຍດ ຈະກະທົບໃສ່ບຸກຄົນທີ່ກ່ຽວຂ້ອງກັບ PR ຫຼື SRs, LFA ຫຼື CCM.

## *ການບໍລິຫານທີ່ດີ: ຄວາມສະເໝີພາບພາຍໃນສະມາຊິກ*

67. ກອງທຶນໂລກຖືວ່າສະມາຊິກຂອງ CCM ທຸກຄົນແມ່ນຄູ່ຮ່ວມງານທີ່ສະເໝີພາບກັນ, ໂດຍມີສິດເຕັມທີ່ໃນການສະແດງຄວາມຄິດເຫັນ ແລະ ເຂົ້າຮ່ວມໃນການຕັດສິນໃຈ ອີງຕາມຄວາມຊໍານິຊໍານານຂອງຕົນ.

68. ກອງທຶນໂລກແນະນໍາການປະຕິບັດທີ່ດີດັ່ງຕໍ່ໄປນີ້ ເພື່ອຊ່ວຍໃຫ້ CCMs ຮັບປະກັນວ່າ ການຕັດສິນໃຈແມ່ນສະທ້ອນເຖິງສຽງຂອງສະມາຊິກ CCM ທຸກຄົນ ແລະ ຂອງທຸກພາກສ່ວນ:

i. ສະມາຊິກ CCM - ແລະ ໂດຍສະເພາະປະທານ ແລະ ຮອງປະທານ - ໄດ້ຮັບການຊຸກຍູ້ໃຫ້ສະໜັບສະໜູນວັດທະນະທໍາຂອງຄວາມຍຸຕິທໍາ ແລະ ການສົນທະນາຢ່າງເປີດເຜີຍ ໃນກອງປະຊຸມ CCM, ແລະ ການເຂົ້າຢ່າງສະເໝີພາບໃນການຕັດສິນໃຈຂອງສະມາຊິກທຸກຄົນ (ໃນບ່ອນທີ່ບໍ່ມີຂໍ້ຂັດແຍ່ງດ້ານຜົນປະໂຫຍດເຂົ້າມາກ່ຽວຂ້ອງ). ບົດລາຍງານກ່ຽວກັບ ການຮ່ວມມື ແລະ ການເປັນຜູ້ນໍາ ທີ່ມີຢູ່ໃນແວັບໄຊຂອງກອງທຶນໂລກ ຈະໃຫ້ຂໍ້ແນະນໍາເພີ່ມເຕີມ.

ii. CCM ໄດ້ຮັບການຊຸກຍູ້ໃຫ້ພິຈາລະນາການລົງຄະແນນສຽງແບບປິດລັບ, ຖ້າຈໍາເປັນ, ເພື່ອຄຸ້ມຄອງອິດທິພົນຕໍ່ການຕັດສິນໃຈຂອງສະມາຊິກ ຈາກສະມາຊິກຜູ້ອື່ນ. ການປະຕິບັດທີ່ດີໃນຂະບວນການລົງຄະແນນສຽງສາມາດເບິ່ງໄດ້ໃນແວັບໄຊຂອງກອງທຶນໂລກ.

iii. ຂະບວນການເລືອກຕັ້ງ CCM ຄວນມີການກໍານົດອາຍຸການ ສໍາລັບ ຕໍາແໜ່ງປະທານ ແລະ ຮອງປະທານ ໂດຍອີງໃສ່ສະພາບພາຍໃນປະເທດ ແລະ ລັກສະນະສະເພາະຂອງຕໍາແຕ່ງລັດ[17]. ການໝູນວຽນຂອງຕໍາແໜ່ງການນໍາພາຍໃນ ແລະ ລະຫວ່າງພາກສ່ວນຕ່າງໆ ຍັງແມ່ນການປະຕິບັດທີ່ດີ.

69. ການປະຕິບັດແບບບໍ່ສະເໝີພາບ ຫຼື ບໍ່ເປັນທໍາ ຂອງສະມາຊິກ CCM ອາດຖືກລາຍງານເຖິງກອງເລຂາຂອງກອງທຶນໂລກ ແລະ ຈະຖືກທົບທວນຄືນ (ເບິ່ງພາກທີ 10).

## *ການບໍລິຫານທີ່ດີ: ຄວາມໂປ່ງໃສ*

70. ເພື່ອເສີມຂະຫຍາຍຄວາມຮັບຜິດຊອບ, ແລະເພື່ອຮັບປະກັນວ່າມີການປ້ອງກັນທຸກການນໍາໃຊ້ທຶນທີ່ບໍ່ຖືກຕ້ອງ, ມີຄວາມຈໍາເປັນທີ່ CCM ຕ້ອງຊອກຫາຄວາມໂປ່ງໃສ ໃນທຸກຂັ້ນຕອນ. ຄວາມໂປ່ງໃສເຮັດໃຫ້ຄວາມໜ້າເຊື່ອຖືຂອງໂຄງການ ແລະ ສົ່ງເສີມຄວາມເຊື່ອໝັ້ນຂອງປະຊາຊົນແລະເພີ່ມຄວາມເຂັ້ມແຂງໃນການປະຕິບັດວຽກງານ. ຄວາມໂປ່ງໃສຂຶ້ນກັບການແລກປ່ຽນຂໍ້ມູນຂ່າວສານທີ່ທັນເວລາ, ສະເໝີພາບ ແລະຄົບຊຸດ, ແລະ ມີຄວາມຈໍາເປັນສໍາລັບການເຂົ້າຮ່ວມຂອງພາກສ່ວນຕ່າງໆຢ່າງມີປະສິດທິຜົນ.

---

[17] ລັດຖະບານອາດມີການຈັດການແຕ່ງຕັ້ງຕໍາແໜ່ງລັດ, ຕະຫຼອດເຖິງ ກໍານົດອາຍຸການແລະຕົວກໍານົດສໍາລັບການໝູນວຽນ. ການຈັດການຂອງລັດຖະບານເຫຼົ່ານີ້ ຄວນຈະໄດ້ຮັບການເຄົາລົບຈາກ CCM.

71. ດັ່ງນັ້ນກອງທຶນໂລກໄດ້ກຳນົດ**ມາດຕະຖານ**ດັ່ງຕໍ່ໄປນີ້ ເພື່ອຄວາມໂປ່ງໃສຂອງ CCM:

i. ທຸກໆ CCM ຄວນພິມເຜີຍແຜ່ ແລະ ປະຕິບັດຕາມ ຍຸດທະສາດການສື່ສານ ເພື່ອແລກປ່ຽນຂໍ້ມູນຂ່າວສານກັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ ແລະ ກັບປະຊາຊົນທົ່ວໄປ. ແຜນການຕ້ອງກຳນົດກິດຈະກຳເພື່ອເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບໂອກາດໃນການຮັບທຶນຊ່ວຍເຫຼືອຈາກກອງທຶນໂລກ, ການສົນທະນາແລະການຕັດສິນໃຈຂອງ CCM, ແລະ ການປະຕິບັດໂຄງການຊ່ວຍເຫຼືອຈາກກອງທຶນໂລກ ຫຼື ການອະນຸມັດການສະເໜີຂໍທຶນ.

ii. ທຸກໆ CCM ຄວນພິມເຜີຍແຜ່ ແລະ ປະຕິບັດຕາມແຜນວຽກປະຈຳປີຂອງຕົນ ເພື່ອໃຫ້ພາກສ່ວນອື່ນມີເວລາວາງແຜນແລະກະກຽມລ່ວງໜ້າ. ແຜນວຽກຄວນກຳນົດຕາຕະລາງເວລາຂອງກອງປະຊຸມ CCM, ກິດຈະກຳການຕິດຕາມກວດກາທີ່ສຳຄັນ, ແລະ ເຫດການທີ່ສຳຄັນ ເຊັ່ນ: ແຜນການຍື່ນບົດສະເໜີຂໍທຶນ, ການທົບທວນແຕ່ລະໄລຍະ ແລະ ສະເໜີເພື່ອທຶນຕໍ່ໄປ.

72. ອີງໃສ່ປະສົບການທີ່ສະສົມມາ, ການປະຕິບັດທີ່ດີໃນການສື່ສານແລະຄວາມໂປ່ງໃສ ແມ່ນມີຢູ່ໃນບົດລາຍງານກ່ຽວກັບ ການບໍລິຫານຄຸ້ມຄອງແລະການມີສ່ວນຮ່ວມຂອງການຈັດຕັ້ງທາງສັງຄົມ ຊຶ່ງມີຢູ່ໃນແວັບໄຊຂອງກອງທຶນໂລກ. ກອງທຶນໂລກ**ແນະນຳ** ກິດຈະກຳຕໍ່ໄປນີ້ ເພື່ອເສີມຂະຫຽາຍການແລກປ່ຽນຂໍ້ມູນຂ່າວສານ ກັບທຸກພາກສ່ວນທີ່ກ່ຽວຂ້ອງທີ່ຢູ່ນອກ CCM:

i. ສ້າງແວັບໄຊຂອງ CCM ເພື່ອລົງເອກະສານແລະແຈ້ງການທີ່ສຳຄັນຂອງ CCM. ອາດນ□າໃຊ້ສື່ໂຄສະນາທີ່ບໍ່ແມ່ນອີເລັກໂຕຣນິກ ໃນບ່ອນທີ່ແວັບໄຊບໍ່ແມ່ນຊ່ອງທາງຂອງພາກສ່ວນທີ່ກ່ຽວຂ້ອງ ເຂົ້າເຖິງເປັນສ່ວນຫຼາຍ. ຕົວຢ່າງເອກະສານທີ່ສຳຄັນຂອງ CCM ລວມມີ ຂັ້ນຕອນໃນການປະຕິບັດຂອງ CCM, ແລະ ເອກະສານທີ່ສະແດງເຖິງການປະຕິບັດຕາມເງື່ອນໄຂຂອງ CCM.

ii. ແຈ້ງວັນເວລາແລະວາລະກອງປະຊຸມຂອງ CCM ລ່ວງໜ້າ (ຢ່າງນ້ອຍ ສອງອາທິດ), ແລະ ແຈກຢາຍບົດບັນທຶກກອງປະຊຸມໂດຍໄວ, ແລະ ຂໍ້ສະເໜີແນະຈາກການທົບທວນເບິ່ງລາຍງານ ຫຼື ຈາກການລົງຕິດຕາມກວດກາ. ບົດບັນທຶກກອງປະຊຸມຂອງ CCM ຄວນຊັດເຈນແລະຄະທັດລັດ ເພື່ອເຮັດໃຫ້ເຂົ້າເຖິງຂໍ້ມູນຂ່າວສານໄດ້ງ່າຍ, ແລະ ຄວນສ່ອງແສງເຖິງຄຳເຫັນທີ່ແຕກຕ່າງກັນໃນເວລາທີ່ມີການຕັດສິນໃຈ. ບົດບັນທຶກ, ໂດຍສະເພາະກ່ຽວກັບການຕັດສິນໃຈຂອງ CCM, ຄວນເກັບຮັກສາໄວ້ໂດຍ CCM ແລະ ສົ່ງໃຫ້ກອງເລຂາຂອງກອງທຶນໂລກເມື່ອຕ້ອງການ.

## ພາກທີ 7: ຫຼັກການແລະພາກປະຕິບັດ ກ່ຽວກັບ ປະສິດທິຜົນຂອງການຊ່ວຍເຫຼືອ

73. ໃນຖານະທີ່ໄດ້ເຊັນ ຖະແຫຼງການປາຣີ 2005 (2005 Paris Declaration) ກ່ຽວກັບ ປະສິດທິຜົນຂອງການຊ່ວຍເຫຼືອ ແລະ ກອງປະຊຸມສຳລັບແຜນງານປະຕິບັດທີ່ ອາກຣາ 2008 (2008 Accra Agenda for Action), ກອງທຶນໂລກມີຄວາມມຸ້ງໝັ້ນທີ່ຈະເຫັນຫຼັກການດ້ານປະສິດທິຜົນຂອງການຊ່ວຍເຫຼືອ ໄດ້ຮັບການຜັນຂະຫຍາຍໃນ CCMs. ໃນພາກນີ້ໄດ້ໃຫ້ຂໍ້ແນະນຳດ້ານການປະຕິບັດແລະຕົວຢ່າງໃນການຜັນຂະຫຽາຍ ຫຼັກການດ້ານປະສິດທິຜົນຂອງການຊ່ວຍເຫຼືອ ໂດຍຜ່ານການປະຕິບັດໜ້າທີ່ຂອງຕົນ. ຂໍ້ແນະນຳເພີ່ມເຕີມກ່ຽວກັບຫົວຂໍ້ນີ້ ແມ່ນມີຢູ່

ໃນບົດລາຍງານຂອງກອງທຶນໂລກກ່ຽວກັບ ຄວາມກົມກຽວແລະການສອດຄ່ອງ (Harmonization and Alignment).

74. ກອງທຶນໂລກ**ແນະນຳ**ໃຫ້ CCM ຜັນຂະຫຍາຍ ຫຼັກການແລະການປະຕິບັດດ້ານປະສິດທິຜົນຂອງການຊ່ວຍເຫຼືອ ໂດຍຜ່ານ**ການພັດທະນາບົດສະເໜີໂຄງການ:**

   i. ໃນລັກສະນະການມີສ່ວນຮ່ວມຢ່າງເຕັມທີ່ ເພື່ອຮັບປະກັນວ່າວິທີການແມ່ນມີຄວາມກົມກຽວແລະມີການປະສານກັບການຊ່ວຍເຫຼືອທີ່ມີຢູ່ໃນປະເທດ ລວມທັງ ກົນໄກສະໜອງທຶນທົ່ວໄປ ແລະ SWAps ຕາມຄວາມເໝາະສົມ;
   ii. ເຊິ່ງສອດຄ່ອງກັບນະໂຍບາຍແລະຍຸດທະສາດແຫ່ງຊາດ, ແລະ ໄດ້ກຳນົດໃນງົບປະມານແຫ່ງຊາດ;
   iii. ເຊິ່ງອີງໃສ່ເປົ້າໝາຍ, ຕົວຊີ້ວັດ ແລະ ແບບຟອມລາຍງານ ທີ່ລວມຢູ່ໃນແຜນຕິດຕາມແລະປະເມີນຜົນແຫ່ງຊາດ ແລະ ຊຶ່ງໄດ້ຮັບການຍອມຮັບ ແລະ ສອດຄ່ອງກັບຄູ່ຮ່ວມງານທັງໝົດພາຍໃນປະເທດ;
   iv. ເຊິ່ງມີການປະສານກັບຮອບວຽນແຜນງານແຫ່ງຊາດ ເພື່ອລຸດຜ່ອນຄ່າບໍລິຫານ ແລະ ພາລະໃນການລາຍງານ;
   v. ໃນລັກສະນະການມີສ່ວນຮ່ວມຢ່າງເຕັມທີ່ ເພື່ອເສີມຂະຫຍາຍຄວາມເປັນເຈົ້າການແລະຄວາມຮັບຜິດຊອບຂອງປະເທດ;
   vi. ໃນບ່ອນທີ່ເໝາະສົມແລະບ່ອນທີ່ມີຄວາມສາມາດພຽງພໍ, ສະເໜີເອົາລະບົບແຫ່ງຊາດ ເປັນທາງເລືອກໃນເບື້ອງຕົ້ນ ເມື່ອຄັດເລືອກວິທີການຈັດຕັ້ງປະຕິບັດ; ແລະ
   vii. ລວມມາດຕະການເສີມສ້າງລະບົບ (ສຳລັບ ການຈັດຊື້, ການເງິນ ຫຼື ການຕິດຕາມ ແລະ ປະເມີນຜົນ) ໃຫ້ເປັນສ່ວນໜຶ່ງຂອງບົດສະເໜີ ຕາມຄວາມຕ້ອງການ.

75. ກອງທຶນໂລກຍັງ**ແນະນຳ**ໃຫ້ CCMs ຜັນຂະຫຍາຍ ຫຼັກການແລະການປະຕິບັດດ້ານປະສິດທິຜົນຂອງການຊ່ວຍເຫຼືອ ໂດຍຄັດເລືອກ**ວິທີການຈັດຕັ້ງປະຕິບັດ**:

   i. ສ້າງຄວາມສາມາດພາຍໃນປະເທດ ໂດຍສະເໜີເອົາ PRs ພາຍໃນປະເທດ ໃນບ່ອນທີ່ເປັນໄປໄດ້;
   ii. ສ້າງຄວາມສາມາດພາຍໃນປະເທດ ໂດຍ ປະຕິບັດການຈັດຫາທຶນແບບຕິດຕາມສອງສົ້ນ (Dual Track Financing) ແລະ ນະໂຍບາຍດ້ານສຸຂະພາບ ແລະ ເສີມສ້າງລະບົບຊຸມຊົນ;
   iii. ຈັດຕາຕະລາງເວລາໃນການຈັດຕັ້ງປະຕິບັດແລະການລາຍງານຂອງທຸກຂະແໜງການປະຕິບັດໃຫ້ສອດຄ່ອງກັບຮອບວຽນແຜນງານແຫ່ງຊາດທີ່ໄດ້ຕົກລົງແລ້ວ.

76. ນອກຈາກນັ້ນ, ເພື່ອຜັນຂະຫຽາຍປະສິດທິຜົນຂອງການຊ່ວຍເຫຼືອໂດຍຜ່ານວຽກງານ**ການຕິດຕາມກວດກາ**, ກອງທຶນໂລກໄດ້**ແນະນຳ**ວ່າ CCM ຄວນ:

   i. ຮັບປະກັນວ່າສະມາຊິກໄດ້ເຜີຍແຜ່ຂໍ້ມູນການຕິດຕາມກວດກາພາຍໃນພາກສ່ວນຂອງຕົນ;
   ii. ເຊື່ອມໂຍງການທົບທວນແຜນງານເຂົ້າກັບຮອບວຽນຂອງການທົບທວນແຫ່ງຊາດ;
   iii. ເຂົ້າຮ່ວມໃນການທົບທວນແຜນງານແຫ່ງຊາດ ເມື່ອສາມາດຮ່ວມໄດ້ ເພື່ອເພີ່ມຄວາມເຊື່ອໝັ້ນໃຫ້ແກ່ແຜນງານທີ່ໄດ້ຮັບທຶນຊ່ວຍເຫຼືອຈາກກອງທຶນໂລກ;

iv. ສົ່ງເສີມຄວາມເຊື່ອໝັ້ນ ແລະ ຄວາມເປັນເຈົ້າການພາຍໃນປະເທດ ໂດຍເປີດໃຫ້ມີສ່ວນຮ່ວມຢ່າງກວ້າງຂວາງຈາກຄູ່ຮ່ວມງານຕ່າງໆ ໃນບົດບາດການຕິດຕາມກວດກາ; ແລະ
v. ຮັບປະກັນການພົວພັນສື່ສານແລະການລາຍງານທຶນຊ່ວຍເຫຼືອຂອງກອງທຶນໂລກແບບໂປ່ງໃສ ເຂົ້າໃນການລາຍງານດ້ານງົບປະມານແຫ່ງຊາດ ແລະ/ຫຼື ກັບຜູ້ຮັບຜິດຊອບໃນການວາງແຜນແຫ່ງຊາດ.

77. ໃນຫຼາຍປະເທດ, ໄດ້ມອບໜ້າທີ່ຫຼັກຂອງ CCM ໃຫ້ແກ່ອົງກອນໂດຍມີຫຼາຍພາກສ່ວນເຂົ້າຮ່ວມ ທີ່ມີແລ້ວພາຍໃນປະເທດ. ກອງທຶນໂລກຊຸກຍູ້ກົນໄກດັ່ງກ່າວ ຕາມຄວາມເໝາະສົມກັບສະພາບພາຍໃນປະເທດ ເຊິ່ງສາມາດສະໜອງຄວາມຕ້ອງການເພື່ອໃຫ້ CCM ບັນລຸຕາມເງື່ອນໄຂຂອງກອງທຶນໂລກ. CCM ຄວນພົວພັນທີມງານ CCM ຂອງກອງທຶນໂລກເພື່ອຂໍຄວາມຊ່ວຍເຫຼືອໃນການນໍາໃຊ້ກົນໄກທີ່ມີພາຍໃນປະເທດ ເຮັດໜ້າທີ່ CCM.

## ພາກທີ 8: ເງື່ອນໄຂຄວາມຕ້ອງການເພື່ອມີສິດໄດ້ຮັບທຶນ ຂອງ CCM

78. ດັ່ງທີ່ໄດ້ອະທິບາຍໃນພາກທີ 1, ແລະໄດ້ເນັ້ນໃຫ້ເຫັນໃນກ່ອງຂໍ້ຄວາມຕະຫຼອດເອກະສານນີ້, ກອງທຶນໂລກໄດ້ກໍານົດ 6 ເງື່ອນໄຂຄວາມຕ້ອງການ ເພື່ອເປັນເງື່ອນໄຂໃຫ້ CCM ມີສິດຂໍທຶນຊ່ວຍເຫຼືອ. **CCM ຕ້ອງບັນລຸແຕ່ລະເງື່ອນໄຂເຫຼົ່ານີ້ ເພື່ອມີສິດຂໍທຶນຊ່ວຍເຫຼືອຈາກກອງທຶນໂລກ**. ເງື່ອນໄຂພົວພັນເຖິງ:

i. ຄວາມໂປ່ງໃສແລະການມີສ່ວນຮ່ວມໃນຂະບວນການພັດທະນາບົດສະເໜີຂໍທຶນ (ເງື່ອນໄຂທີ 1)
ii. ຂະບວນການຄັດເລືອກ PR ແບບເປີດກວ້າງແລະໂປ່ງໃສ (ເງື່ອນໄຂທີ 2)
iii. ການສ້າງແຜນຕິດຕາມກວດກາແລະການປະຕິບັດແຜນການ (ເງື່ອນໄຂທີ 3)
iv. ຂະບວນການຄັດເລືອກສະມາຊິກ CCM ຂອງພາກສ່ວນທີ່ບໍ່ສັງກັດລັດຖະບານ (ເງື່ອນໄຂທີ 4)
v. ການເປັນສະມາຊິກ CCM ຂອງຊຸມຊົນທີ່ໄດ້ຮັບຜົນກະທົບ (ເງື່ອນໄຂທີ 5)
vi. ການບໍລິຫານຈັດການກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດພາຍໃນ CCM (ເງື່ອນໄຂທີ 6)

79. ກອງເລຂາຂອງກອງທຶນໂລກໄດ້ກວດກາເບິ່ງຜູ້ຂໍທຶນທຸກໆພາກສ່ວນ ໃນການປະຕິບັດຕາມເງື່ອນໄຂຄວາມຕ້ອງການຂອງ CCM. ການປະຕິບັດຕາມເງື່ອນໄຂທີ 1 ແລະ 2 ຈະຖືກປະເມີນໃນເວລາຍື່ນບົດສະເໜີຂໍທຶນ. ການປະຕິບັດຕາມເງື່ອນໄຂທີ 3 ເຖິງ 6 ຈະຖືກປະເມີນທັງໃນເວລາຍື່ນບົດສະເໜີຂໍທຶນໃໝ່ ແລະ ໃນຕະຫຼອດໄລຍະຮັບທຶນຈາກກອງທຶນໂລກ (ໂດຍຜ່ານ *ການປະເມີນເງື່ອນໄຂແລະການຈັດຕັ້ງປະຕິບັດຂອງ CCM*). ການບໍ່ປະຕິບັດຕາມ ອາດນໍາໄປສູ່ການປະຕິເສດບົດສະ ເໜີຂໍທຶນ, ຫຼື ຢຸດການໃຫ້ທຶນຊົ່ວຄາວ (ລວມທັງທຶນໃຫ້ CCM).

80. ເງື່ອນໄຂທັງ 6 ຂໍ້ ສໍາລັບ CCM ແມ່ນນໍາໃຊ້ທັງ CCM ໃນລະດັບທ້ອງຖິ່ນ (sub-national CCMs) ແລະ ໃນລະດັບພາກພື້ນ (Regional Coordinating Mechanisms, RCMs).

81. ດັ່ງທີ່ໄດ້ກ່າວຂ້າງເທິງ, ຄວາມຄືບໜ້າຂອງ CCM ຈະຖືກປະເມີນຕະຫຼອດໄລຍະຂອງການຮັບທຶນຊ່ວຍເຫຼືອຈາກກອງທຶນໂລກ ເຊິ່ງອາດມີການສະໜອງດ້ານວິຊາການ ເມື່ອມີຄວາມຈໍາເປັນ.

### *ການສະເໜີຂໍທຶນໂດຍບໍ່ຜ່ານ CCM*

82. ພາຍໃຕ້ເງື່ອນໄຂຂໍ້ຍົກເວັ້ນ, ກອງທຶນໂລກຈະຮັບເອົາການສະເໜີຂໍທຶນໂດຍບໍ່ຜ່ານ CCM ເຊິ່ງບໍ່ມີຄວາມຕ້ອງການຕ້ອງປະຕິບັດຕາມ 6 ເງື່ອນໄຂ. ເງື່ອນໄຂຂໍ້ຍົກເວັ້ນເຫຼົ່ານີ້ແມ່ນຈຳກັດຢູ່ໃນ:

    i. ປະເທດທີ່ປາສະຈາກລັດຖະບານທີ່ຖືກຕ້ອງຕາມກົດໝາຍ; ຫຼື
    ii. ປະເທດທີ່ມີຄວາມຂັດແຍ່ງ, ກຳລັງປະເຊີນຕໍ່ໄພທຳມະຊາດ, ຫຼື ໃນສະພາບສຸກເສີນຫຍຸ້ງຍາກ (ກຳນົດໂດຍກອງທຶນໂລກ ເຊິ່ງອ້າງອີງເຖິງຖະແຫຼງການສາກົນ ເຊັ່ນ: ຖະແຫຼງການຂອງຫ້ອງການອົງການສະຫະປະຊາຊາດເພື່ອການປະສານງານວຽກງານມະນຸດສະທຳ), ຫຼື
    iii. ປະເທດທີ່ລະງັບ ຫຼື ຍັງບໍ່ທັນສ້າງຄູ່ຮ່ວມງານກັບອົງການຈັດຕັ້ງທາງສັງຄົມ ແລະ ອົງການທີ່ບໍ່ສັງກັດລັດຖະບານ. ສະພາບການເຫຼົ່ານີ້ ລວມມີ CCM ມີຄວາມລົ້ມເຫຼວ ຫຼື ປະຕິເສດການພິຈາລະນາບົດສະເໜີຂໍທຶນຂອງອົງການຈັດຕັ້ງທາງສັງຄົມ ຫຼື ອົງການທີ່ບໍ່ສັງກັດລັດຖະບານ, ໂດຍສະເພາະບົດສະເໜີທີ່ມີເປົ້າໝາຍແນໃສ່ກຸ່ມຄົນທີ່ດ້ອຍໂອກາດ ແລະ/ຫຼື ມີຄະດີອາດຍາ, ເຂົ້າໃນບົດສະເໜີຂອງລວມຂອງ CCM.

83. ສຳລັບຜູ້ສະເໜີຮ່ວມກັນຫຼາຍປະເທດ, ການສະເໜີຮ່ວມຂອງອົງການໃນພາກພື້ນ (Regional Organization, RO) ນັ້ນ ແມ່ນເປັນທາງເລືອກໃນການສະເໜີຜ່ານ RCM. ຜູ້ສະເໜີຂໍທຶນທີ່ບໍ່ຜ່ານ CCM ແລະ RO ຈະບໍ່ຜູກພັນກັບ 6 ເງື່ອນໄຂຂອງ CCM ຫຼື ກັບຮູບແບບຂອງຄູ່ຮ່ວມງານຫຼາຍພາກສ່ວນ ທີ່ໄດ້ອະທິບາຍໃນບົດແນະນຳສະບັບນີ້. ຕົວຢ່າງ, ອົງການຈັດຕັ້ງນຶ່ງສາມາດຍື່ນບົດສະເໜີຂໍທຶນແບບເອກະລາດໂດຍບໍ່ຜ່ານ CCM ໄດ້ ຖ້າຢ່າງນ້ອຍ ມີໜຶ່ງໃນສາມຂໍ້ຍົກເວັ້ນໃນ ປາຣາກຼາຟ 84. ຂໍ້ມູນເພີ່ມເຕີມກ່ຽວກັບ ການສະເໜີຂໍທຶນທີ່ບໍ່ຜ່ານ CCM ແລະ ການສະເໜີຮ່ວມຂອງອົງການໃນພາກພື້ນ (RO) ສາມາດເບິ່ງໄດ້ໃນແວັບໄຊຂອງກອງທຶນໂລກ www.theglobalfund.org.

84. ສິດຂອງຜູ້ສະເໜີຂໍທຶນທີ່ພົວພັນກັບປະເທດທີ່ມີລາຍຮັບຕ່ຳແມ່ນມີລາຍລະອຽດ ໃນແວັບໄຊຂອງກອງທຶນໂລກ www.theglobalfund.org.

## ພາກທີ 9: ການຊ່ວຍເຫຼືອດ້ານງົບປະມານແລະວິຊາການສຳລັບ CCM

### *ການຊ່ວຍເຫຼືອດ້ານວິຊາການ*

85. ກອງເລຂາຂອງກອງທຶນໂລກແລະຄູ່ຮ່ວມງານດ້ານວິຊາການ ສະໜອງການສະໜັບສະໜູນດ້ານວິຊາການໃຫ້ແກ່ CCM ໃນວິທີການດັ່ງຕໍ່ໄປນີ້:

    i. ອຳນວຍຄວາມສະດວກ ແລະ/ຫຼື ໃຫ້ທຶນແກ່ຄູ່ຮ່ວມງານໃນການມາຊ່ວຍດ້ານວິຊາການແກ່ CCM.
    ii. ພະນັກງານຂອງກອງທຶນໂລກທີ່ມີຄວາມຊ່ຽວຊານດ້ານ CCM ມາຊ່ວຍເຫຼືອໂດຍກົງ.
    iii. ທົບທວນເອກະສານການບໍລິຫານຂອງ CCM ເພື່ອໃຫ້ຄຳຄິດເຫັນ.
    iv. ພັດທະນາເຄື່ອງມືສະໜັບສະໜູນ CCM ລວມທັງເຄື່ອງມືໃນການຕິດຕາມກວດກາ.

v. ຈັດການອົບຮົມສຳມະນາ ໃຫ້ແກ່ CCM ໃນພາກພື້ນ ເພື່ອແລກປ່ຽນ ບົດຮຽນການປະຕິບັດທີ່ດີ ພາຍໃນພາກພື້ນ.

86. ເພື່ອຊອກຫາໂອກາດເພີ່ມເຕີມໃນການສະໜັບສະໜູນດ້ານວິຊາການໃຫ້ແກ່ CCM, ກະລຸນາຕິດຕໍ່ຫາທີມງານ CCM ທີ່ກອງເລຂາຂອງກອງທຶນໂລກ ໂດຍສົ່ງອີເມວໄປທີ່ ccm@theglobalfund.org.

87. ໃນການຮ່ວມມືກັບຄູ່ຮ່ວມງານດ້ານວິຊາການ, ກອງທຶນໂລກໄດ້ພັດທະນາແຫຼ່ງຊັບພະຍາກອນດັ່ງຕໍ່ໄປນີ້ ຊຶ່ງອາດມີປະໂຫຍດຕໍ່ CCM, ແລະ ມີຢູ່ໃນແວັບໄຊ CCM ຂອງກອງທຶນໂລກ www.theglobalfund.org:

i. ເຄື່ອງມືສະໜັບສະໜູນ ລວມທັງເຄື່ອງມືຕິດຕາມກວດກາຂອງ CCM.
ii. ເອກະສານກ່ຽວກັບ ການປະຕິບັດທີ່ດີແລະດີສຸດ ສຳລັບ CCM, ແລະ ບົດລາຍງານການສຶກສາໃນຫົວຂໍ້ທີ່ໜ້າສົນໃຈຂອງ CCM.
iii. ບົດລາຍງານກອງປະຊຸມ CCM ໃນພາກພື້ນ ແລະ ເວທີຕ່າງໆທີ່ກ່ຽວຂ້ອງ.
iv. ທຶນສຳລັບ CCM (ເບິ່ງຂ້າງລຸ່ມ).

### *ທຶນຊ່ວຍເຫຼືອສຳລັບ CCM*

88. ກອງທຶນໂລກສະໜອງທຶນສະໜັບສະໜູນໃຫ້ແກ່ CCM ໂດຍຜ່ານ ສັນຍາຕົກລົງໃຫ້ທຶນໃນໄລຍະສອງປີ. ສັນຍາຕົກລົງໃຫ້ທຶນ ອະນຸຍາດໃຫ້ CCM ເຂົ້າເຖິງທຶນຊ່ວຍເຫຼືອ ເຊິ່ງເຊື່ອມໂຍງກັບການຈັດຕັ້ງປະຕິບັດຕາມເງື່ອນໄຂ ແລະມາດຖານຂັ້ນຕໍ່າຂອງ CCM ໂດຍກົງ.

89. CCM ທີ່ສົນໃຈຂໍທຶນຊ່ວຍເຫຼືອນີ້ ຄວນສະເໜີຂໍຄຳຮ້ອງ ເຊິ່ງມີລາຍລະອຽດໃນພາກທຶນຊ່ວຍເຫຼືອສຳລັບ CCM ຂອງເວັບໄຊກອງທຶນໂລກ. ນະໂຍບາຍກ່ຽວກັບທຶນຊ່ວຍເຫຼືອສຳລັບ CCM ໄດ້ອະທິບາຍລາຍລະອຽດ ເຊິ່ງມີຢູ່ໃນເວັບໄຊອັນດຽວກັນນີ້.

90. CCM ຍັງຕ້ອງໄດ້ຊອກຫາແຫຼ່ງທຶນຂອງຕົນເພີ້ມເຕີມ ຈາກຄູ່ຮ່ວມງານທັງພາຍໃນແລະສາກົນ ທີ່ຢູ່ພາຍໃນປະເທດ.

## **ພາກທີ 10: ການປະຕິບັດວຽກງານຂອງ CCM**

### *ທົບທວນການປະຕິບັດວຽກງານຂອງ CCM*

91. CCM ອາດຈະໄດ້ຮັບຮູບແບບຕ່າງໆຂອງການປະເມີນໂດຍກອງທຶນໂລກ, ເຊິ່ງລວມມີ:

i. ການປະເມີນເງື່ອນໄຂແລະການຈັດຕັ້ງປະຕິບັດຂອງ CCM (ການປະເມີນຕົນເອງ).

ii. ການປະເມີນໃນການປະຕິບັດຂອງ CCM ຕາມເງື່ອນໄຂຄວາມຕ້ອງການ ແລະ ຄວາມຄືບໜ້າໃນການປະຕິບັດ ໂດຍກອງເລຂາຂອງກອງທຶນໂລກ.
iii. ລາຍງານການຈັດຕັ້ງປະຕິບັດທີ່ພົວພັນກັບທຶນຊ່ວຍເຫຼືອຂອງ CCM (ເບິ່ງຂໍ້ທີ 90 ຂ້າງເທິງ).
iv. ປະເມີນໂດຍ ສຳນັກງານຫ້ອງການກວດກາ (Office of the Inspector General, OIG) ໂດຍສະເພາະສຳລັບ CCM ທີ່ຢູ່ໃນສະພາບແວດລ້ອມທີ່ມີຄວາມທ້າທາຍ.

92. ກອງທຶນໂລກຂໍໃຫ້ CCM ເຮັດການປະເມີນຕົນເອງໃຫ້ສຳເລັດໃນແຕ່ລະປີ ໂດຍນຳໃຊ້ເຄື່ອງມືການປະເມີນເງື່ອນໄຂຄວາມຕ້ອງການແລະການຈັດຕັ້ງປະຕິບັດຂອງ CCM ຊຶ່ງມີຢູ່ໃນແວັບໄຊພາກ CCM ຂອງກອງທຶນໂລກ. CCM ຄວນຂໍຜູ້ຊ່ວຍດ້ານວິຊາການ (TA) ຈາກໜ້າ Technical Assistance Providers ເພື່ອອຳນວຍຄວາມສະດວກໃນການປະເມີນຕົນເອງ ແລະ ເຮັດລາຍງານຜົນການວິເຄາະ ໂດຍພິຈາລະນາຂໍ້ມູນຈາກຄູ່ຮ່ວມງານພາຍໃນປະເທດ. ບັນຊີລາຍຊື່ຂອງຜູ້ສະໜອງການຊ່ວຍເຫຼືອດ້ານວິຊາການ ເພື່ອໃຫ້ການສະໜັບສະໜູນໃນການປະເມີນຕົນເອງ ແມ່ນມີຢູ່ໃນແວັບໄຊຂອງກອງທຶນໂລກ.

### *ການພົວພັນສື່ສານກັບກອງເລຂາ*

93. ສະມາຊິກ CCM ແຕ່ລະຄົນ ໄດ້ຮັບການສະໜັບສະໜູນໃຫ້ພົວພັນກັບກອງເລຂາຂອງກອງທຶນໂລກ, ໂດຍຮັກສາຄວາມລັບ ຖ້າຈຳເປັນ, ເມື່ອເຫັນຈຸດອ່ອນພາຍໃນການຈັດຕັ້ງແລະການປະຕິບັດຂອງ CCM (ຕົວຢ່າງ: ຂາດຄວາມໂປ່ງໃສ, ມີຂໍ້ຂັດແຍ່ງດ້ານຜົນປະໂຫຍດ, ການຕິດຕາມກວດກາບໍ່ໄດ້ດີ). ໂດຍສະເພາະ, ບັນຫາການບໍ່ປະຕິບັດຕາມເງື່ອນໄຂ ແລະ ຄວາມຫຍຸ້ງຍາກຂອງ CCM ຫຼື ມີຄວາມຄືບໜ້າຊ້າ ຕໍ່ການບັນລຸມາດຖານທີ່ໄດ້ອະທິບາຍໃນເອກະສານນີ້, ຄວນໄດ້ຖືກນຳສະເໜີຕໍ່ກອງເລຂາຂອງກອງທຶນໂລກເພື່ອຮັບຊາບໂດຍບໍ່ຊັກຊ້າ ໂດຍຜ່ານຈຸດປະສານງານດັ່ງຕໍ່ໄປນີ້:

Email: ccm@theglobalfund.org
Fax: +41587911701 (ກະລຸນາລະບຸ “Attention: CCM Hub” ຢູ່ຂ້າງເທິງສຸດຂອງໜັງສືຂອງທ່ານ)
ຕິດຕໍ່ໂດຍກົງກັບພະນັກງານຂອງກອງທຶນໂລກໃນລະຫວ່າງກອງປະຊຸມ
Mail: The Global Fund to Fight AIDS (CCM Team), Tuberculosis and Malaria, Chermin de Blandonnet 8, 1214 Vernier – Geneva, Switzerland

94. ຄວນຈື່ໄວ້ວ່າ PR ມີພັນທະທາງກົດໝາຍ ໂດຍຜ່ານ ສັນຍາຕົກລົງຮັບທຶນຊ່ວຍເຫຼືອ ເພື່ອລາຍງາຍບັນຫາກ່ຽວກັບການສໍ້ລາດບັງຫຼວງ ຫຼື ຂໍ້ຂັດແຍ່ງດ້ານຜົນປະໂຫຍດ ຕໍ່ກອງທຶນໂລກ.

95. ເມື່ອຈຸດອ່ອນຂອງ CCM ໄດ້ຖືກລາຍງານໃຫ້ກອງທຶນໂລກແລ້ວ, ກອງເລຂາຈະຕ້ອງປະເມີນບັນຫາທີ່ຖືກຮ້ອງຟ້ອງນີ້ ໂດຍມີການຊ່ວຍເຫຼືອຈາກ LFA ເມື່ອມີຄວາມຈຳເປັນ. ຖ້າຂໍ້ກ່າວຫາໄດ້ຮັບການຢືນຢັນ, ມາດຕະການຕອບໂຕ້ຈະຕ້ອງໄດ້ຖືກກຳນົດ ອີງຕາມແຕ່ລະກໍລະນີ.

96. ຄວາມຜິດປົກກະຕິ ແລະ ການປະຕິບັດທີ່ບໍ່ຖືກຕ້ອງ ກໍອາດຈະຕ້ອງໄດ້ລາຍງານຕໍ່ສຳນັກງານຫ້ອງການກວດກາທີ່ກອງທຶນໂລກໂດຍກົງ. ນະໂຍບາຍຂອງກອງທຶນໂລກ ກ່ຽວກັບການເປົ່າໝາກຫວີດພາຍໃນປະເທດ (The In-

country Whistle Blowing Policy of the Global Fund) ໄດ້ກຳນົດຂໍ້ແນະນຳເພີ່ມເຕີມກ່ຽວກັບບັນຫານີ້.

**ເອກະສານຕິດຄັດ 1 ໃນ ບົດແນະນຳແລະເງື່ອນໄຂຄວາມຕ້ອງການ ສຳລັບ ຄະນະກຳມະການປະສານງານກອງທຶນໂລກ CCM**

***ບົດແນະນຳກ່ຽວກັບປະເພດຂອງຕົວແທນຈາກພາກສ່ວນຕ່າງໆ***

ສຳລັບແຕ່ລະ CCM, ມີຄວາມຈຳເປັນທີ່ຈະຕ້ອງພິຈາລະນາປະເພດຕົວແທນຂອງລັດຖະບານ, ການຈັດຕັ້ງທາງສັງຄົມ ແລະ ພາກສ່ວນອື່ນ ທີ່ຈະມີຄຸນຄ່າຕໍ່ CCM ໃນປະຈຸບັນ ແລະ ໃນອະນາຄົດ, ໃນເມື່ອພາລະບົດບາດ ແລະ ການຮ່ວມມືລະຫວ່າງ ຂະແໜງການເຫຼົ່ານີ້ເພີ່ມຂຶ້ນ, ໂດຍສະເພາະໃນການພັດທະນາບົດສະເໜີໂຄງການ ແລະ ການຕິດຕາມກວດກາທຶນຊ່ວຍເຫຼືອ. ເອກະສານຕິດຄັດນີ້ມີເຈດຈຳນົງເພື່ອສະໜອງຕົວຊີ້ບອກກ່ຽວກັບທາງເລືອກທີ່ເປັນໄປໄດ້ ແລະ ໂດຍສະເພາະ ເພື່ອສະໜອງຂໍ້ແນະນຳ ສຳລັບ CCM ທີ່ຕ້ອງການເສີມຂະຫຍາຍ ແລະ/ຫຼື ປັບປຸງການເປັນຕົວແທນຂອງການຈັດຕັ້ງສັງຄົມແລະຂະແໜງການເອກະຊົນ. ລາຍຊື່ຂອງຕົວຢ່າງບໍ່ໄດ້ຈຳກັດສະເພາະ. CCM ສາມາດ ແລະ ຄວນຕັດສິນໃຈວ່າ ຂະແໜງການໃດເໝາະສົມທີ່ສຸດ ທີ່ຈະປະກອບເຂົ້າ ຕາມເງື່ອນໄຂສະເພາະຂອງເຂົາເຈົ້າ.

***ຕົວແທນຈາກລັດຖະບານ***[18]

ລັດຖະບານໃນບັນດາປະເທດທີ່ປະຕິບັດ ໄດ້ກຳນົດສະພາບແວດລ້ອມທາງກົດໝາຍແລະນະໂຍບາຍ ໃນການຕອບໂຕ້ແຫ່ງຊາດຕໍ່ສາມພະຍາດ. ລັດຖະບານຍັງຄຸ້ມຄອງສ່ວນແບ່ງເປັນສ່ວນໃຫຍ່ໃນໂຄງລ່າງຂອງສາທາລະນະສຸກ ແລະ ກຳລັງແຮງງານ ໃນແຕ່ລະປະເທດ. ດັ່ງນັ້ນ, ພາລະບົດບາດຂອງລັດຖະບານ ໃນການສະໜັບສະໜູນສະພາບແວດລ້ອມທີ່ເສີມສ້າງຄວາມເຂັ້ມແຂງ, ຂໍການສະໜັບສະໜູນ, ການຕິດຕາມກວດກາ, ແລະ ການປະຕິບັດ, ໂດຍສະເພາະກັບບັນດາກະຊວງ ແລະ ຂະແໜງການພະຍາດສະເພາະ ເຊັ່ນ: ຄະນະກຳມະການແຫ່ງຊາດຕ້ານເອດ ຫຼື ສູນຄວບຄຸມພະຍາດແມ່ນມີຄວາມສຳຄັນ. ການມີສ່ວນຮ່ວມລະຫວ່າງລັດຖະບານ ກັບບັນດາຄູ່ຮ່ວມງານ ຍັງເປັນໃຈກາງຂອງການປະສານງານ ແລະ ເສີມຂະຫຍາຍປະສິດທິຜົນຂອງການຊ່ວຍເຫຼືອ. ຕົວແທນຂອງລັດຖະບານອາດລວມມີ, ແຕ່ບໍ່ຈຳກັດພຽງເທົ່ານີ້, ກະຊວງສາທາລະນະສຸກ, ແຜນການແລະການເງິນ, ກິດຈະການແມ່ຍິງແລະສັງຄົມ, ການຮ່ວມມືສາກົນ ແລະ ກິດຈະການພາຍໃນ.

***ຕົວແທນການຈັດຕັ້ງທາງສັງຄົມ***[19]

ປະເພດຕົວແທນຂອງການຈັດຕັ້ງທາງສັງຄົມຜູ້ທີ່ຈະເປັນສ່ວນໜຶ່ງໃນວຽກງານຂອງ CCM ຄວນປະກອບດ້ວຍ, ແຕ່ບໍ່ຈຳກັດພຽງເທົ່ານີ້, ບຸກຄົນ ຫຼື ອົງການຈັດຕັ້ງທີ່ເປັນຕົວແທນ:

---

[18] ດັ່ງທີ່ອະທິບາຍໃນແຜນປະຕິບັດຍຸດທະສາດການຮ່ວມມືຂອງກອງທຶນໂລກ, 2010-2012

[19] ເບິ່ງ "ນິຍາມຂອງການຈັດຕັ້ງທາງສັງຄົມ" ກອງປະຊຸມຄະນະກຳມະການນະໂຍບາຍແລະຍຸດທະສາດຄັ້ງທີ 8, ທີ່ ເຈນີວາ, 19-21 ກັນຍາ 2007.

i. ***ອົງການຕິດຕາມກວດກາ*** (Watchdog organizations): ນອກເໜືອຈາກການບໍລິການ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ບໍ່ຫວັງຜົນກຳໄລ ແມ່ນມີບົດບາດທີ່ເປັນເອກະລັກໃນການເພີ່ມຜົນຮັບດ້ານສຸຂະພາບ ໂດຍຜ່ານການໂຄສະນາຂົນຂວາຍ ແລະ ການເຄື່ອນໄຫວ. ກອງທຶນໂລກຮັບຮູ້ວ່າ ການຈັດຕັ້ງທາງສັງຄົມໄດ້ປະກອບສ່ວນທີ່ສຳຄັນໃນການໃຫ້ຄຳຄິດຄຳເຫັນ ແລະ ປັບປຸງນະໂຍບາຍຂອງລັດ ໂດຍຜ່ານກິດຈະກຳຂອງເຂົາເຈົ້າໃນການຕິດຕາມ, ການວິເຄາະ, ການແນະນຳ ແລະ ການໂຄສະນາກ່ຽວກັບນະໂຍບາຍ. ການມີອົງການຕິດຕາມກວດກາທີ່ເປັນເອກະລາດໃນ CCM ແມ່ນເປັນຄວາມຕ້ອງການຢ່າງຍິ່ງ ເພື່ອຕິດຕາມກວດກາທຶນຊ່ວຍເຫຼືອ, ການບໍລິຫານຈັດການກ່ຽວກັບຂໍ້ຂັດແຍ່ງດ້ານຜົນປະໂຫຍດ ແລະ ການເຊື່ອມໂຍງນະໂຍບາຍ.

ii. ***ປະຊາກອນຫຼັກທີ່ໄດ້ຮັບຜົນກະທົບ:*** ປະຊາກອນຫຼັກທີ່ໄດ້ຮັບຜົນກະທົບລວມມີ: ແມ່ຍິງແລະຍິງໜຸ່ມ, ຜູ້ຊາຍຮ່ວມເພດກັບຊາຍ (ຊພຊ), ຜູ້ສັກຢາເສບຕິດ, ກະເທີຍ, ຜູ້ບໍລິການທາງເພດ, ຜູ້ທີ່ຖືກຄຸມຂັງ, ອົບພະຍົກແລະກຸ່ມຄົນທີ່ເຄື່ອນຍ້າຍ, ຜູ້ຕິດເຊື້ອເຮສໄອວີ, ໜຸ່ມສາວແລະຊາວໜຸ່ມ, ກຳພ້າແລະເດັກທີ່ມີຄວາມສ່ຽງ, ແລະ ປະຊາກອນທີ່ມີບັນຫາດ້ານມະນຸດສະທຳ.

iii. ***ອົງການຈັດຕັ້ງແມ່ຍິງ:*** ແມ່ຍິງແລະຍິງໜຸ່ມແມ່ນໄດ້ຮັບຜົນກະທົບຫຼາຍກ່ວາໝູ່ ຈາກສາມພະຍາດ ແລະ ເປັນກຸ່ມທີ່ມີຄວາມສ່ຽງຫຼາຍ ເນື່ອງມາຈາກປັດໃຈທາງດ້ານສະລີລະສາດຂອງຮ່າງກາຍ ແລະ ສັງຄົມເສດຖະກິດ. ມີຄວາມສຳຄັນທີ່ອົງການຈັດຕັ້ງແມ່ຍິງ, ກໍຄືອົງການອື່ນ, ທີ່ຕາງໜ້າໃຫ້ແກ່ແມ່ຍິງ ໄດ້ເປັນຕົວແທນໃນ CCM ເພື່ອຮັບປະກັນວ່າບັນຫາຂອງໂຄງການທີ່ກ່ຽວຂ້ອງກັບເພດ ໄດ້ສະທ້ອນໃຫ້ເຫັນໃນບົດສະເໜີຂໍທຶນຕໍ່ກອງທຶນໂລກ.

iv. ***ເດັກນ້ອຍແລະຊາວໜຸ່ມ:*** ເດັກນ້ອຍແລະຊາວໜຸ່ມຄວນມີຕົວແທນໃນ CCM, ໂດຍຜ່ານກຸ່ມຊາວໜຸ່ມ, ອົງການຈັດຕັ້ງ, ອົງການທີ່ບໍ່ສັງກັດລັດຖະບານພາຍໃນແລະສາກົນ ທີ່ເຮັດວຽກກັບເດັກນ້ອຍແລະຊາວໜຸ່ມທີ່ຕິດເຊື້ອແລະໄດ້ຮັບຜົນກະທົບຈາກສາມພະຍາດ. ກອງທຶນໂລກຊຸກຍູ້ CCM ໃຫ້ມີຊາວໜຸ່ມເອງເປັນຕົວແທນໃຫ້ແກ່ການຈັດຕັ້ງທີ່ສ້າງຕັ້ງແລະນຳພາໂດຍຊາວໜຸ່ມເອງ.

v. ***ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານທີ່ມີປະສົບປະການເຮັດວຽກກ່ຽວກັບສາມພະຍາດ:*** ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (INGOs) ແມ່ນມີຄຸນຄ່າຕໍ່ CCM ເນື່ອງຈາກວ່າໂດຍທົ່ວໄປແລ້ວພວກເຂົາເຈົ້າມີການພົວພັນຢ່າງສະໜິດແໜ້ນກັບຊຸມຊົນແລະປະຊາຊົນທີ່ມີຄວາມສ່ຽງ; ເຂົາເຈົ້າມີປະສົບການໃນການຈັດຕັ້ງປະຕິບັດ ແລະ ສາມາດປະກອບສ່ວນຢ່າງມີຄຸນຄ່າ ເຂົ້າໃນການພັດທະນາບົດສະເໜີເພື່ອຂໍທຶນ ແລະ ໃນການກຳນົດກິດຈະກຳຂອງໂຄງການ; INGOs ອາດຍັງມີການພົວພັນທີ່ດີກັບຂະແໜງອື່ນໆ, ລວມທັງລັດຖະບານ ແລະ ອົງການຮ່ວມມືຫຼາຍຝ່າຍ/ສອງຝ່າຍ ເຊິ່ງມີຄຸນຄ່າຕໍ່ການສ້າງຄູ່ຮ່ວມງານ. ບາງ INGOs ຍັງເປັນບ່ອນທີ່ດີເພື່ອຊຸກຍູ້ການມີສ່ວນຮ່ວມຂອງກຸ່ມປະຊາກອນທີ່ມີຄວາມສ່ຽງແລະດ້ອຍໂອກາດ ໃນ CCM, ໂດຍຜ່ານການສ້າງຄວາມສາມາດ ຫຼື ຊຸກຍູ້ການມີສ່ວນຮ່ວມຂອງກຸ່ມຄົນທີ່ເຂົ້າເຖິງໄດ້ຍາກ.

vi. ***ອົງການຈັດຕັ້ງພາຍໃນທີ່ບໍ່ສັງກັດລັດຖະບານທີ່ມີປະສົບປະການເຮັດວຽກກ່ຽວກັບສາມພະຍາດ:*** ອົງການຈັດຕັ້ງພາຍໃນທີ່ບໍ່ສັງກັດລັດຖະບານທີ່ເຮັດວຽກກ່ຽວກັບສາມພະຍາດ ຮູ້ຈັກດີຄວາມ

ຕ້ອງການຂອງຊຸມຊົນທີ່ຢູ່ນອກເຂດເທບດສະບານ ແລະ ເຂົ້າໃຈຄວາມຕ້ອງການທີ່ແຕກຕ່າງກັນຂອງບັນດາກຸ່ມປະຊາກອນຫຼັກ. ເຂົາເຈົ້າມັກໄດ້ເຂົ້າຮ່ວມໃນການໃຫ້ບໍລິການ ໃນວຽກງານປ້ອງກັນ ແລະ ວຽກງານສຸຂະສຶກສາ; ເຂົາເຈົ້າມີເຄືອຂ່າຍທີ່ເຂັ້ມແຂງ ແລະ ຮູ້ຈັກວ່າມີວຽກງານໃດໄດ້ລິເລີ່ມປະຕິບັດຢູ່ໃນແຕ່ລະເຂດ.

vii. ***ອົງກອນການກຸສົນ (ເຊັ່ນ: ອົງການສາສະໜາ ແລະ ການເຊື່ອຖື):*** ໃນຫຼາຍເຂດ ອົງກອນການກຸສົນ, ສ່ວນຫຼາຍອ້າງເຖິງ ອົງການສາສະໜາ ແລະ ການເຊື່ອຖື, ມີບົດບາດທີ່ສຳຄັນທີ່ສຸດ ໃນການເຂົ້າເຖິງຊຸມຊົນທີ່ຕິດເຊື້ອ ແລະ ໄດ້ຮັບຜົນກະທົບຈາກສາມພະຍາດ. ອົງການຈັດຕັ້ງເຫຼົ່ານີ້ ໄດ້ສະໜອງການບໍລິການທີ່ສຳຄັນ ແລະ ມີບົດບາດໃນການສ້າງຄວາມເຊື່ອໝັ້ນຕໍ່ຜູ້ນຳທາງການເມືອງ ໃນລະດັບຊາດ, ພາກພື້ນ ແລະ ທ້ອງຖິ່ນ ເພື່ອກຳນົດບຸລິມະສິດຄວາມຕ້ອງການຂອງປະຊາກອນທີ່ໄດ້ຮັບຜົນກະທົບ. ອົງການເຫຼົ່ານີ້ໄດ້ເພີ່ມທະວີການມີສ່ວນຮ່ວມເຂົ້າໃນການຈັດຕັ້ງປະຕິບັດ ແລະ ມີບົດບາດທີ່ສຳຄັນໃນການພັດທະນາບົດສະເໜີຂໍທຶນຢ່າງມີປະສິດທິຜົນ.

viii. ***ສະຖາບັນການສຶກສາ:*** ສະມາຊິກຈາກສະຖາບັນການສຶກສາໄດ້ນຳເອົາຄວາມຮູ້ຫຼາກຫຼາຍກ່ຽວກັບການລະບາດ, ຕະຫຼອດເຖິງຕົວກຳນົດທາງດ້ານສັງຄົມ, ການເມືອງ ແລະ ວັດທະນະທຳ ທີ່ມີສ່ວນໃນການຕໍ່ສູ້ກັບສາມພະຍາດ, ລວມທັງຄວາມຮູ້ຂອງກຸ່ມປະຊາກອນຫຼັກທີ່ໄດ້ຮັບຜົນກະທົບ ຕະຫຼອດເຖິງປັດໃຈດ້ານປະຊາກອນ ແລະ ສິ່ງທ້າທາຍທີ່ອາດພົບເຫັນໃນການຂະຫຍາຍກິດຈະກຳ.

### *ຕົວແທນຂະແໜງເອກະຊົນ*

ອີງໃສ່ຄວາມຫຼາກຫຼາຍດ້ານຄວາມຊ່ຽວຊານແລະຊັບພະຍາກອນທີ່ຂະແໜງເອກະຊົນສາມາດສະໜອງ, CCM ສາມາດໄດ້ຮັບຜົນປະໂຫຍດຈາກການເຂົ້າຮ່ວມຂອງບໍລິສັດແລະອົງກອນ ທີ່ເປັນຕົວແທນຂອງຂະແໜງເອກະຊົນທີ່ກ່ຽວຂ້ອງທີ່ສຸດ, ເຊິ່ງລວມມີ, ແຕ່ບໍ່ຈຳກັດພຽງເທົ່ານີ້, ບັນດາອົງກອນດັ່ງຕໍ່ໄປນີ້:

i. ***ບໍລິສັດທີ່ສະແຫວງຫາຜົນກຳໄລຂະໜາດໃຫຍ່ ທີ່ມີຄວາມມຸ້ງໝັ້ນ ໃນການຕໍ່ສູ້ກັບສາມພະຍາດ:*** ບັນດາບໍລິສັດລະດັບຊາດ ແລະ ລະຫວ່າງຊາດ ຂະໜາດໃຫຍ່ ໄດ້ບຸກເບີກການຕອບໂຕ້ຂອງບໍລິສັດໃນການຕ້ານກັບ ເຊື້ອເຮສໄອວີ/ພະຍາດເອດ, ວັນນະໂຣກ ແລະ ໄຂ້ຍຸງ. ຕົວແທນຈາກບໍລິສັດເຫຼົ່ານີ້ສາມາດສະໜອງການເປັນຜູ້ນຳແລະຄວາມຊ່ຽວຊານ ໃຫ້ CCM ແລະ ຜູ້ປະຕິບັດໂຄງການ, ແລະ ສາມາດສະໜອງຊັບພະຍາກອນທີ່ສຳຄັນຂອງບໍລິສັດ ເພື່ອສະໜັບສະໜູນການຂະຫຍາຍໂຄງການແຫ່ງຊາດ.
ii. ***ອົງກອນທີ່ເປັນຕົວແທນຂອງບໍລິສັດຂະໜາດນ້ອຍແລະກາງ (SMEs) ແລະ ຂະແໜງການທຸລະກິດແບບນອກລະບົບ:*** ໃນບັນດາປະເທດທີ່ກຳລັງພັດທະນາສ່ວນຫຼາຍ, ບໍລິສັດເອກະຊົນສ່ວນໃຫຍ່ແມ່ນວິສາຫະກິດຈຸລະພາກ ທີ່ຢູ່ໃນພາກທຸລະກິດແບບນອກລະບົບ. SMEs ແລະ ພາກທຸລະກິດແບບນອກລະບົບ ໄດ້ກວມເອົາປະມານຫຼາຍກ່ວາ 50% ຂອງພາກເສດຖະກິດລວມ ແລະ ດັ່ງນັ້ນ ຈຶ່ງສາມາດນຳສຽງສ່ວນໃຫຍ່ຂອງຜູ້ປະກອບການທຸລະກິດໃນບັນດາປະເທດເຫຼົ່ານີ້. ຕົວແທນຈາກພາກສ່ວນດັ່ງກ່າວນີ້ສາມາດສະໜັບສະໜູນໃນການອອກແບບ ແລະ ປະຕິບັດໂຄງການ ເຊິ່ງແທດເໝາະກັບພາກສ່ວນໃຫຍ່ຂອງຂະແໜງທຸລະກິດແລະແຮງງານ.

iii. ***ສະມາຄົມທຸລະກິດເພື່ອຕ້ານກັບ ເຊື້ອເຮສໄອວີ/ພະຍາດເອດ, ວັນນະໂຣກ ແລະ ໄຂ້ຍຸງ:*** ໃນຫຼາຍປະເທດທີ່ໄດ້ຮັບຜົນກະທົບ, ກໍຄືໃນສາກົນ, ບໍລິສັດທີ່ຮັບຜິດຊອບຕໍ່ສັງຄົມໄດ້ຈັດຕັ້ງສະມາຄົມ ແລະ ເຄືອຂ່າຍໃນການຕ້ານຕໍ່ສາມພະຍາດ. ເປົ້າໝາຍສ່ວນໃຫຍ່ແມ່ນສົ່ງເສີມແລະສະໜັບສະໜູນການຈັດຕັ້ງປະຕິບັດແຜນງານດ້ານສຸຂະພາບໃນສະຖານທີ່ເຮັດວຽກ (ແລະໃນບັນດາຊຸມຊົນຕ່າງໆ) ແລະ ນຳເອົາຄວາມຊຳນິຊຳນານ ແລະ ຊັບພະຍາກອນ ຂອງບັນດາບໍລິສັດທີ່ເປັນສະມາຊິກ ສະໜັບສະໜູນຄວາມພະຍາຍາມຂອງທ້ອງຖິ່ນ, ຂອງປະເທດ ແລະ ສາກົນ ໃນການຕ້ານຕໍ່ສາມພະຍາດ. ສະມາຄົມເຫຼົ່ານີ້ສາມາດສະໜອງຂໍ້ມູນລະອຽດໃນການນຳໃຊ້ຄວາມຊຳນິຊຳນານ ແລະ ໂຄງຮ່າງພື້ນຖານຂອງຂະແໜງເອກະຊົນ ເພື່ອເຂົ້າເຖິງຊຸມຊົນທີ່ໄດ້ຮັບຜົນກະທົບ, ແລະ ອີງໃສ່ເຄືອຂ່າຍຂອງບໍລິສັດເຫຼົ່ານີ້ ເພື່ອສະໜັບສະໜູນແລະເຂົ້າຮ່ວມໃນການອອກແບບ ແລະ ປະຕິບັດໂຄງການໃຫ້ມີຄຸນນະພາບແລະມີປະສິດທິຜົນເພີ່ມຂຶ້ນ.

iv. ***ຕົວແທນຈາກພາກອຸດສາຫະກຳສົ່ງອອກ:*** ບາງພາກອຸດສາຫະກຳ ໄດ້ຮັບຜົນກະທົບຈາກສາມພະຍາດຫຼາຍກ່ວາໝູ່, ເຊິ່ງລວມມີ ພາກຂົນສົ່ງ, ພາກກະສິກຳ, ນ້ຳມັນແລະກາດສ ແລະ ບໍ່ແຮ່. ສຳລັບບໍລິສັດທີ່ສະແຫວງຫາຜົນກຳໄລ, ພັນທະມິດທາງທຸລະກິດ ແລະ/ຫຼື ສະມາຄົມຜູ້ປະກອບການ ຜູ້ທີ່ເປັນຕົວແທນຈາກພາກອຸດສາຫະກຳສົ່ງອອກ ສາມາດສະໜອງຂໍ້ມູນລະອຽດ ແລະ ສະໜັບສະໜູນການປະຕິບັດໂຄງການຂອງແຕ່ລະຂະແໜງການສະເພາະ ເຊິ່ງສາມາດເຂົ້າເຖິງກຸ່ມແຮງານແລະຊຸມຊົນທີ່ມີຄວາມສ່ຽງສູງ.

v. ***ແພດປິ່ນປົວແລະຫ້ອງກວດພະຍາດເອກະຊົນ:*** ໃນຫຼາຍປະເທດທີ່ໄດ້ຮັບຜົນກະທົບ, ຂະແໜງຮັກສາສຸຂະພາບເອກະຊົນ ໄດ້ໃຫ້ບໍລິການປະຊາຊົນຢ່າງກວ້າງຂວາງ ແລະ ມີບົດບາດທີ່ສຳຄັນໃນການຂະຫຍາຍໂຄງການແຫ່ງຊາດ. ຕົວແທນຈາກຂະ ແໜງການນີ້ ສາມາດສາມາດສະໜອງຂໍ້ມູນອັນມີຄ່າ ເຂົ້າໃນການອອກແບບໂຄງການເຊິ່ງສາມາດເສີມຂະຫຍາຍການບໍລິການຮັກສາສຸຂະພາບຂອງເອກະຊົນ ລົມທົບເຂົ້າໃນລະບົບສາທາລະນະສຸກ ຕະຫຼອດເຖິງຊ່ວຍກຳນົດແພດປິ່ນປົວ ແລະ ຫ້ອງກວດພະຍາດທີ່ແທດເໝາະ ເພື່ອເຂົ້າຮ່ວມການປະຕິບັດໂຄງການຊ່ວຍເຫຼືອ.

vi. ***ມູນນິທິເພື່ອການກຸສົນທີ່ຈັດຕັ້ງໂດຍບໍລິສັດ:*** ທີຫຼາຍມູນນິທິເພື່ອການກຸສົນຂອງເອກະຊົນ ຫຼື ມູນນິທິ ທີ່ໄດ້ຖືກຈັດຕັ້ງຂຶ້ນໂດຍບໍລິສັດ ໄດ້ມີປະສົບການຫຼາຍໃນການສະໜັບສະໜູນ ແຜນງານຕ້ານເຮສໄອວີ/ພະຍາດເອດ , ວັນນະໂຣກ ແລະ ໄຂ້ຍຸງ ໃນປະເທດທີ່ມີສະພາບທີ່ແຕກຕ່າງກັນ. ອົງກອນເຫຼົ່ານີ້ສາມາດເປັນແຫຼ່ງສະໜອງຄວາມຊ່ຽວຊານສາກົນ, ກໍຄືສະໜອງຊັບພະຍາກອນ ເພື່ອສະໜັບສະໜູນ CCMs ແລະ ການປະຕິບັດໂຄງການ.

### ***ພາກສ່ວນອື່ນໆ***

ຄູ່ຮ່ວມມືສາກົນຫຼາຍຝ່າຍແລະສອງຝ່າຍທີ່ປະຕິບັດງານພາຍໃນປະເທດ[20]: ຄູ່ຮ່ວມມືຫຼາຍຝ່າຍແລະສອງຝ່າຍ ມີຫຼາຍບົດບາດ ລວມທັງການໃຫ້ຂໍ້ແນະນຳດ້ານນະໂຍບາຍ ແລະ ບັນທັດຖານ, ຊ່ວຍເຫຼືອໃນການວິເຄາະຊ່ອງຫວ່າງ ລະຫວ່າງຄວາມເຂົ້າໃຈ ແລະ ຮັບຜິດຊອບຕໍ່ 'ການຮັບຮູ້ສະພາບລະບາດໃນປະເທດ (Knowing your epidemic)', ສະໜອງຄວາມຊ່ຽວຊານ, ເຊັ່ນ ໃນຂົງເຂດບົດບາດຍິງຊາຍ. ຄູ່ຮ່ວມມືເຫຼົ່ານີ້ ສາມາດເປັນສື່ກາງ ແລະ ປະສານດ້ານວິຊາການ, ຊ່ວຍເຫຼືອດ້ານການບໍລິຫານຄຸ້ມຄອງ ແລະ ດ້ານການເງິນ; ແລະ ອຳນວຍຄວາມສະດວກໃນການມີສ່ວນຮ່ວມຂອງອົງການຈັດຕັ້ງສັງຄົມ ແລະ ຂະແໜງການເອກະຊົນ ເຂົ້າໃນໂຄງຮ່າງແລະຂະບວນການຂອງກອງທຶນໂລກ - ລວມ

[20] ດັ່ງທີ່ອະທິບາຍໃນແຜນຍຸດທະສາດການຮ່ວມມືຂອງກອງທຶນໂລກ, 2010-2012

ທັງການພັດທະນາບົດສະເໜີໂຄງການ ແລະ ຂໍການສະໜັບສະໜູນ. ຄູ່ຮ່ວມມືຫຼາຍຝ່າຍແລະສອງຝ່າຍໄດ້ປະກອບສ່ວນອັນສຳຄັນເຂົ້າໃນການສ້າງຄວາມເຂັ້ມແຂງໃນການຕິດຕາມແລະປະເມີນຜົນ, ການຕິດຕາມກວດກາ, ແລະ ການປະສານງານ ໃນການສ້າງຄວາມເຊື່ອມໂຍງແລະຄວາມສອດຄ່ອງ. ດັ່ງນັ້ນ, ການເຂົ້າຮ່ວມຂອງຄູ່ຮ່ວມມືຫຼາຍຝ່າຍແລະສອງຝ່າຍ, ລວມທັງຕົວແທນຈາກລັດຖະບານທີ່ໃຫ້ທຶນແກ່ກອງທຶນໂລກ ຈຶ່ງມີຄວາມຕ້ອງການ.

ເອກະສານນີ້ໄດ້ມີການດັດແກ້ຄັ້ງຫຼ້າສຸດ: ວັນທີ 6 ພະຈິກ 2013
ໄດ້ຮັບອະນຸມັດຄັ້ງຫຼ້າສຸດຈາກຄະນະກຳມະການບໍລິຫານກອງທຶນໂລກ: ວັນທີ 12 ພຶກສະພາ 2011